

# ບົນເສັ້ນທາງ ປົດປ່

ສຳນັກພິມຈຳໜ່າຍ
ລາວຮັກຊາດ
ຊຳເໜືອ 1973



# ບ່ກົ

ອຸທິນ ບຸນຍາວົງ

ອຸທິນ ບຸນຍາວົງ

# ບົນເສັ້ນທາງປົດປ່ອຍ

## (ລວມເລື່ອງສັ້ນແລະບົດບັນທຶກ)

ສຳນັກພິມຈຳໜ່າຍ ລາວຮັກຊາດ

ຊຳເໜືອ 1972

# ສາລະບານ


ບົດ ໜ້າ

1 ບິນເສັ້ນທາງປິດປ່ຍ . . . . . . . . . . . . . . . . . . . . 3

2 ດອກໄມ້ປ່າ . . . . . . . . . . . . . . . . . . . . . . . . 18

3 ກັບສາກໄວ້ເປັນທີ່ລະນຶກ . . . . . . . . . . . . . . . . 34

4 ຜ່ານບິນ . . . . . . . . . . . . . . . . . . . . . . . . . . 62

5 ການສາງເໝືອງກາລາງ . . . . . . . . . . . . . . . . . 81

6 ສຽງເພງເຂດພູດອຍ . . . . . . . . . . . . . . . . . . . . 89

# ບົນເສັ້ນທາງປົດປ່ຽ

ໂດຽ: ແກ້ວມະນີ

ຫ່ວາງຕົ້ນປີນີ້, ຂ້ຽໄດ້ມີໂອກາດໄປທາງ ເຂດລ່ອງມ່າເພື່ອສືບສ່ວນສະພາບການ ເຮັດນາແຊງ ແລະ ເໝືອງ ຝາຽ. ຂ້ຽອອກເດີນທາງ ໃນຕອນເຊົ້າ ວັນໜຶ່ງ ທີ່ນ້ຳໝອກກຳລັງປົກຫຸ້ມທົ່ວທຸກແຫ່ງຫົນ, ຄືມີຄົນເອົານວມ ຝ້າຽບາງໆ ຊຸບໜຶ່ງປູຂຶ້ນເທິງທົ່ງຫຍ້າທີ່ຂຽວອ່ອນ. ຢູ່ໄກໆພຸ້ນ, ພູຫີນສອງສາມໜ່ວຽໄດ້ປະກົດອອກເປັນສີມົວໆແດ່ແລ້ວ, ເມື່ອເວລາໄດ້ຜ່ານພົ້ນໄປ, ທ້ອງຟ້າຄ່ຽແຈ້ງອອກ ແລະ ນ້ຳໝອກໄດ້ຄ່ຽຊຸບຫາຽໄປ. ຮຸມຫຍ້າອ່ອນຍັງຄ້າງຢາດນ້ຳ ໝອກຂອງ ຄ່ຳຄືນທີ່ຜ່ານມາ, ເຫຼື້ອມມະຍິບມະຍັບ, ຄ່ຽເຫັງຕົງ, ກົງໄປກົງມາຕາມສາຽລົມພັດ; ພູຫີນກໍ່ຄ່ຽ ປະກົດແຈ້ງອອກ, ກັບເມກຂາວເປັນສາຽກ້ຽວອ້ອມ ກາງພູຄືດັ່ງໝູ່ດາວຟູຢູ່ເທິງ ທ້ອງຟ້າ ສີຂຽວທີ່ປອດໂປ່ງແລະເອາະໃສ. ຍາມເຊົ້າໃນລະດູໃບໄມ້ປົ່ງຢູ່ເຂດນີ້ປະກົດວ່າມີສິ່ງໃດສິ່ງໜຶ່ງທີ່ດູດດຶງໃຈ. ຄວາມດູດດຶງ

ໃຈບໍ່ແມ່ນມີພຽງແຕ່ຍ້ອນວ່າຢູ່ເທິງດິນດອນຕອນຫຍ້າແຫ່ງ
ນີ້ເປັນພື້ນ ຖານແຫ່ງ ການປະຕິວັດ. ເປັນບ່ອນຊຶ່ງການປະຕິ
ວັດລາວກ່ຳລັງ ຈົດເຂົ້າປຶ້ມຄຳ ຂອງປະຫວັດສາດ ກ່ຽວກັບ
ການຕໍ່ສູ້ກູ້ຊາດ ຢ່າງພິລະອາດຫານ ຂອງປະຊາຊົນລາວເຮົາ
ໃນຍຸກສະໄໝທ້າຍສະຕະວັນທີ່20 ມັນຍັງ ຍ້ອນພາບທ່າມະ
ຊາດອັນສວຍງາມຢູ່ທີ່ນີ້ອີກ.

ຂ້ຯປີ້ງບາໂລ, ນັ່ງພັກຜ່ອນ ຢູ່ລຸ່ມຕົ້ນໄມ້ແຄກ ສີ່ ຫ້າ ຕົ້ນ
ເພື່ອລໍຖ້າລັດລົດ. ສາຍລົມເຢັນຄ່ຯພັດເປັນຮຸດເປັນຮຸດຜ່ານປ່າ
ໄມ້ແຄກ. ນັ່ງເຊົາເມື່ອຍຢູ່ບັ້ນສູບຢາຍັງ ບໍ່ທັນ ໝົດ ເຄິ່ງ ກອກ,
ເລີຍໄດ້ຍິນສຽງລົດແລ່ນມາແຕ່ໄກ, ຂ້ຯຟ້າວຈັບບາໂລ ອອກໄປ
ລັດລົດ. ລົດໂອໂຕບາ ຄັນໜຶ່ງ ໄດ້ຢຸດ ຢູ່ ຕໍ່ໜ້າຂ້ຯ, ສະຫາຍຜູ້
ຂັບລົດໄຂປະຕູອອກ, ອາໄສແສງສະຫວ່າງ ທີ່ຍັງມົວໆ ຂອງ
ຍາມເຊົ້າ, ຂ້ຯແນມເຫັນໃບໜ້າ ທີ່ຍັງ ໜຸ່ມ ນ້ຯ ຂອງ ລາວ,
ພ້ອມດ້ວຍເຄື່ອງນຸ່ງສີຂຽວໃບໄມ້ ແລະ ໝວກແກັບ, ຍິ່ງເຮັດ
ໃຫ້ວາດຊົງ ຂອງລາວ ໜຸ່ມນ້ຯ ແລະ ສວຍງາມ; ຄວາມ ງາມ
ຂອງນັກຮົບປົດປ່ຯປະຊາຊົນລາວ. ສະຫາຍຜູ້ ຂັບລົດ ເມື່ອ ໄຂ
ປະຕູລົດອອກ, ລາວຢືນເບິ່ງຂ້ຯ ບຶດໜຶ່ງແລ້ວຖາມ:

— ສະບາຍດີສະຫາຍ! ສະຫາຍຊິໄປໃສ?

ຂ້ອຍເອົາໜັງສືເດີນທາງ ຂອງ ຫ້ອງ ຄ.ອ.ວ ຍື່ນ ໃຫ້ ລາວ ເບິ່ງ:

— ເຈົ້າ, ສະບາຍດີ! ລົດສະຫາຍຊິ່ໄປໃສ! ຖ້າ ໄປ ລ່ອງ ນ່າ, ຂ້ອຍຢາກຂໍໄປນຳຍ່ານໜຶ່ງ, ຂ້ອຍຊິ່ໄປເຮັດວຽກຢູ່ສິບຮາວ!

ເມື່ອລາວເບິ່ງຜ່ານໃບເດີນທາງ ຂອງຂ້ອຍ ແລ້ວ, ລາວ ເອົາ ໜັງສືເດີນທາງສົ່ງຄືນໃຫ້ຂ້ອຍ ແລະ ຍິ້ມຫົວ:

— ໂອ! ຄົນ ຄ.ອ.ວ ນໍ! ສະຫາຍຊິ່ໄປເຮັດວຽກ ຢູ່ ເຂດສິບຮາວບໍ? ມີແຕ່ສະຫາຍຜູ້ດຽວບໍ? ນ້ອງກໍ່ຊິ່ໄປທາງລ່ອງນ່າພຸ້ນລະ. ເອົາໄດ້ແລ້ວ, ຂຶ້ນມານັ່ງນຳນ້ອງ, ເທິງນີ້ມີແຕ່ນ້ອງຜູ້ດຽວສະຫາຍຜູ້ຂັບຊ່ວຍລອງຍິງໄປນຳລົດຄັນຫຼັງ...

ຂ້ອຍຂຶ້ນນັ່ງຢູ່ໃນຫ້ອງຂັບລົດນຳສະຫາຍ ຂັບລົດ. ລົດຄັນນັ້ນພັດເລີ່ມຕົ້ນ ໝຸນກົງເດີນ ໄປທາງໜ້າ, ທາງໄປ ຍາກເພແດ່. ຂຸມບວກຕາມທາງເຮັດໃຫ້ລົດພວກຂ້ອຍງ່ຽງໄປງ່ຽງມາ; ບາງເທື່ອ ພວກຂ້ອຍ ຈົນຕຳກັນ. ສະຫາຍຜູ້ຂັບລົດ ກຳແໜ້ນພວງມາໄລບິດໄປບິດມາເພື່ອຫຼີກຂຸມເຫຼົ່ານັ້ນທັງຈົ່ມວ່າ;

— ບາ! ເປັນຫຍັງຄືມີຂຸມຫຼາຍແທ້, ຄິດວ່າກັບຄືນມາ ຂັບລົດຢູ່ແນວຫຼັງ, ທາງກໍ່ຊິ່ດີກ່ວານີ້; ແບບນີ້ນັ້ນລົດຍາກສ່ຳກັບທາງອອກໄປແນວໜ້າ.

ໄດ້ຍິນສະຫາຍຂັບລົດຈົ່ມວ່າທາງໄປຫຍຸ້ງຍາກ, ຂ້ອຍງວາກໄປເວົ້ານຳລາວ :

— ໂອຍ ! ຢູ່ປະເທດເຮົານີ້ຍັງມີບ່ອນໃດແດ່ວ່າແມ່ນແນວຫຼັງ, ບ່ອນໃດວ່າເປັນແນວໜ້າ. ບໍ່ວ່າຢູ່ບ່ອນໃດພວກໂຈນອາເມລິກາຈະບໍ່ໄປຍິງທຳລາຍ, ກໍ່ໂທດກຳ, ເພາະສະນັ້ນ, ຢູ່ບ່ອນໃດກໍ່ແມ່ນ ຕີອາເມລິກາ, ບ່ອນໃດກໍ່ແມ່ນ ແນວໜ້າກໍ່ ເປັນສະໜາມຣົບ ທັງໝົດ. ແຕ່ວ່າ ທາງອອກ ໄປແນວໜ້າ ອາດຈະຫຍຸ້ງຍາກກ່ວານີ້ຫຼາຍເທົ່າ, ແມ່ນບໍ່ສະຫາຍ ? ...

ສະຫາຍຜູ້ຂັບລົດຍັງເອົາໃຈໃສ່ເບິ່ງ ເສັ້ນທາງຢູ່ທາງໜ້າ ລາວທັງງຶກຫົວເຫັນດີເຫັນພ້ອມກັບຄຳເຫັນຂອງຂ້ອຍ :

— ແມ່ນ ! ແມ່ນ ! ອ້າຍເວົ້າຖືກ, ຢູ່ໃສກໍ່ແມ່ນສະໜາມຣົບ, ຢູ່ໃສກໍ່ຕີອາເມລິກາຄືກັນ. ຕ່າງແຕ່ວ່າຄວາມດຸເດືອດ ຢູ່ແຕ່ລະບ່ອນແຕກຕ່າງກັນເທົ່ານັ້ນ. ທາງອອກໄປແນວໜ້າຫຍຸ້ງຍາກກ່ວານີ້ຫຼາຍເທົ່າ, ມີເຕັມແຕ່ຂຸມບົມອີກກະທົກ. ພວກໂຈນອາກາດອາເມລິກາ ໃຊ້ບົມ ທຸກຊະນິດ ຕັ້ງເປັນຫຼາຍພັນໂຕນ ຍິງທຳລາຍເພື່ອຫວັງສະກັດກັ້ນ ເສັ້ນທາງລຳລຽງ ອອກໄປຫາແນວໜ້າຂອງ ພວກເຮົາ. ແຕ່ທາງ ຂອງພວກເຮົາ ຍັງໄປໄດ້ ແລະລົດຂອງພວກເຮົາຍັງທຽວລຳລຽງຢູ່ສະເໝີ.

ລົດຄັນນັ້ນຍັງວ່ຽງໄປ ວ່ຽງມາ, ຄ່ຽໝຸນກົງໄປທາງໜ້າ, ມີບາງບ່ອນລົດວ່ຽງ ລົງຄືວ່າຊິຂວ້ຳນີ້, ແຕ່ສະຫາຽຜູ້ຂັບລົດຍັງຄົງທຸ່ນທ່ຽງຂັບລົດໄປ; ປະກົດວ່າຊີວິດ ຂອງຄົນຂັບລົດຢູ່ສະໜາມຣົບໄດ້ຫຼໍ່ຫຼອມວິຊາຂັບລົດ ອັນເກັ່ງກ້າໃຫ້ລາວ. ອ້ຽຈົກເອົາຢາອອກມາສູ່ລາວສູບ:

— ເອົ້າ! ທາງມັນເພ, ພວກເຮົາຄ່ຽໄປ ເອົາກໍ່ໄດ້ບໍ່ເປັນຫຍັງດອກ. ຫັງໄປຫັງສູບຢາລົມເລື່ອງກັນຫຼິ້ນ ໃຫ້ມັນມ່ວນ. ຮອດບ່ອນທາງດີແລ້ວ ຈຶ່ງຄ່ຽແລ່ນໄວກໍ່ໄດ້...ໂອ! ຂໍໂທດນໍ່ສະຫາຽ. ພວກເຮົາໄປໄດ້ດົນປານນີ້ແລ້ວກໍ່ຍັງບໍ່ທັນຮູ້ຊື່ຮູ້ສຽງກັນ. ສະຫາຽເອີ້ນຊື່ຫຍັງບໍ່ແລະຢູ່ທ້ອງຖິ່ນໃດ? ຟັງສຽງປາກຂອງສະຫາຽຄືຈັ່ງວ່າແມ່ນໄທຊ່ຳເໜືອ ຫຼືວ່າແມ່ນຢູ່ຊຽງຂວາງ...

ສະຫາຽຜູ້ຂັບລົດຍິ້ມຫົວ:

— ອ້າຽຕວງ ຖືກແທ້, ນ້ອງເອີ້ນ ຊື່ວ່າທອງພັນ. ສ່ວນທ້ອງຖິ່ນກໍ່ແມ່ນ ຄົນໄທຊ່ຳນີ້ແລ້ວ, ແຕ່ຫາກວ່າ ຢູ່ແປະທາງດິນຊຽງຂວາງພຸ້ນ. ສ່ວນອ້າຽຢູ່ທ້ອງ ຄ.ອ.ວ, ອ້າຽຢູ່ພະແນກໃດນໍ່? ເບິ່ງຊົງອ້າຽຄືຊິແມ່ນຄົນຢູ່ອົບຮົມຫຼືວ່າເປັນນັກສື່ຂ່າວວິທະຍຸ, ລົງໄປພື້ນຖານເພື່ອເອົາຂ່າວຄາວແມ່ນບໍ່?

24/7 ຮ້ານຈຳໜ່າຍ

– ບໍ່! ຂ້ອຍຢູ່ຖະແຫຼງຂ່າວ. ເປັນນັກຂຽນຊື່ໆ!

– ໂອ ເປັນນັກປະພັນແມ່ນບໍ່? ດີທີ່ສຸດ. ນ້ອງໄດ້ອ່ານປຶ້ມເລື່ອງຂອງພວກອ້າຍຂຽນແຕ່ດົນພຸ້ນ, ມ່ວນຫຼາຍມາຮອດດຽວນີ້ຈຶ່ງພົບຜູ້ແຕ່ງ. ຫວາຍຈັບມືອີກເທື່ອໜຶ່ງ... ເວົ້າແລ້ວລາວເດີນມາຈັບມືຂ້ອຍ,

ຂ້ອຍທັງຈັບມືລາວ, ທັງຍິ້ມຫົວ, ຕອບລາວດ້ວຍຄວາມສຸພາບ:

– ບໍ່! ຍັງບໍ່ທັນແມ່ນນັກປະພັນດອກ, ພໍແຕ່ເປັນຜູ້ຂີດຂຽນຊື່ໆ, ການຂີດຂຽນຂອງພວກຂ້ອຍ ກໍ່ຍັງອ່ອນຫຼາຍ, ບໍ່ທັນມ່ວນ, ທັງເຮັດທັງຮຽນໄປຊື່ນແລ້ວ...

– ບໍ່! ນ້ອງເວົ້າຈິງໃຈ, ມັນມ່ວນແທ້ໄດ...

ພວກຂ້ອຍທັງໄປລົມເລື່ອງຫຼິ້ນ, ບໍ່ພໍຄາວລົດພວກຂ້ອຍແລ່ນຜ່ານເມືອງປົວໄປ. ສະຫາຍຂັບລົດໄດ້ເລັ່ງນ້ຳມັນໃຫ້ລົດແລ່ນໄວກ່ວາເກົ່າ. ໃນເວລານີ້, ທ້ອງຟ້າ ແຈ້ງ ສະຫວ່າງ ດີ, ນ້ຳໝອກຕົກລົງ ຄືນນີ້ ໄດ້ຄ່ອຍ ຫາຍໄປເວລາໃດ ກໍ່ບໍ່ຮູ້. ແສງອາລຸນຍາມເຊົ້າໄດ້ສ່ອງແສງ ສະຫວ່າງ ທ່າອິດ ລອດຜ່ານ ກ້ອນເມກຂາວລົງ ໃສ່ພູຫີນ ສີຂຽວ ອຸ່ມທຸ່ມ ແລະ ທົ່ງຫຍ້າຄາ ກວ້າງຂວາງ; ປະກົດວ່າພູຫີນແລະ ທົ່ງຫຍ້າຄາເຫຼົ່ານັ້ນໄດ້ພົດປ່ຽນເສື້ອຜືນໃໝ່ ທີ່ຂຽວງາມ, ບາງບ່ອນ ຍັງປະດັບ ດ້ວຍຕົ້ນດອກ

ບານທີ່ໃຫ້ດອກບານ ຂາວກະເຈືອຕາມເປີ້ນພູ. ບາງຄັ້ງພວກຂ້ຽຍັງພົບ ດອກບາງກາງ, ດອກເຜິ້ງທີ່ມີສີຂາວ, ມ່ຽ, ອ່ອນເຫຼືອງ... ເປັນພົ້ວເປັນພົ້ວແຂວນຢູ່ຕາມງ່າ ຕົ້ນໄມ້ ໃຫ່ຽແຄມທາງ. ເພື່ອໃຫ້ຫາຽ ຄວາມມິດຫງຽບ ທີ່ຫາກໍ່ ຫງຽບ ສະງັດລົງ. ຂ້ຽພັດໂອ້ລົມນຳສະຫາຽຜູ້ຂັບລົດ:

— ຂ້ຽສັງເກດເຫັນ ສະຫາຽຂັບລົດ ຄືຈັ່ງສ່ຳນີສ່ຳນານອີຫຼີ, ສະຫາຽຂັບລົດໄດ້ຈັກປີແລ້ວ?

— ຫາກໍ່ຂັບໄດ້ ປະມານ ປີປາຽເທົ່ານັ້ນ. ແຕ່ກ່ອນນ້ອງຢູ່ກອງທະຫານ, ຫວ່າງປີ 68, ເວລາປົດປ່ຽຍາຖີ່ນ້ອງກໍ່ໄດ້ເຂົ້າຮ່ວມສູ້ຮົບ; ຫຼັງຈາກນັ້ນບໍ່ດົນນ້ອງກໍ່ເລີຽຂໍໄປຂັບລົດ.

— ຄັນວ່າຊັ້ນ,ເບິ່ງຊົງສະຫາຽຄືຊິມັກຂັບລົດແທ້ບໍ່, ສ່ວນຂ້ຽເອງ, ຂ້ຽພັດຢູ່ ກອງທະຫານລາວ, ໄດ້ໄປສູ້ຮົບ ຄືຊິມ່ວນກວ່າ, ເສັຽທີ່ແຕ່ຂ້ຽພັດບໍ່ໄດ້ຢູ່ຝ່າຽທະຫານ.

— ຄັນເວົ້ານາ ຢູ່ ທະຫານລາວກໍ່ດີ, ຂັບລົດກໍ່ມັກເອົາແຕ່ຂັ້ນເທິງໃຫ້ເຮັດຫັຽງກໍ່ໄດ້ ແຕ່ມັກຂັບລົດຫຼາຽກວ່າ ເພາະ . . .

ເວົ້າມາຮອດນີ້ ສະຫາຽຂັບລົດເລີຽຢຸດ ບໍ່ເວົ້າຕໍ່ໄປອີກ. ຂ້ຽເອົາໃຈໃສ່ສັງເກດເຫັນວ່າສີໜ້າຂອງລາວປະກົດຕ່າງເກົ່າ, ຄືດັ່ງລາວຄົ້ນຄິດເລື່ອງໃດ ເລື່ອງໜຶ່ງ ທີ່ໄດ້ຝັງໄວ້ໃນຫົວໃຈຂອງ

ລາວມາແຕ່ດົນ. ການປ່ຽນທ່າທີຂອງລາວເຮັດໃຫ້ ຂ້ອຍເກີດມີຄວາມສົນໃຈ, ສະນັ້ນຂ້ອຍເລີ່ງຖາມລາວ !

— ສະຫາຍໄປຂັບລົດ ແມ່ນຕາມຄວາມ ສະໝັກ ຫຼືວ່າຍ້ອນເຫດການອັນໃດອັນໜຶ່ງອີກ.

ທອງພັນນັ່ງນິດຢູ່ ດົນເຕີບ, ຄາວໜຶ່ງລາວ ຈຶ່ງຄ່ອຍຕອບ :

— ແມ່ນແທ້, ແມ່ນນ້ອງເອງສະໝັກຂໍໄປຂັບລົດ. ແຕ່ມັນບໍ່ແມ່ນມີພຽງແຕ່ເທົ່ານັ້ນ. ນ້ອງຂໍໄປຂັບລົດຍັງແມ່ນເພື່ອເຮັດຕາມຄວາມມຸ່ງຫວັງຂອງພໍ່ນ້ອງ ...

ໄດ້ຍິນທອງພັນເວົ້າວ່າ: « ເພື່ອເຮັດຕາມຄວາມມຸ່ງຫວັງຂອງພໍ່ນ້ອງ », ຍິ່ງທຳໃຫ້ຂ້ອຍເກີດມີຄວາມສົນໃຈ :

— ເປັນຫຍັງສະຫາຍຈຶ່ງເວົ້າຄືແນວນັ້ນ ?

— ຄັນເວົ້າມາ ເລື່ອງ ນີ້ກໍຍືດຍາວ, ຖ້າວ່າອ້າຍຢາກຮູ້ນ້ອງຊິເລົ່າສູ່ຟັງ, ແຕ່ໃຫ້ຂໍ ຢາກອກໜຶ່ງສາກ່ອນ, ສູບຢາແລ້ວຂ້ອຍຈຶ່ງເລົ່າສູ່ຟັງ.

ຂ້ອຍຈົກເອົາຢາສູບ, ຕໍ່ໄຟແລ້ວຍື່ນໃຫ້ທອງພັນ. ທອງພັນຈັບເອົາຢາສູບ, ສູບເຂົ້າເປັນບາດຍາວໆສອງສາມເທື່ອ. ທອງພັນນັ່ງນິດຄາວໜຶ່ງ, ປະກົດວ່າຖ້າໃຫ້ ຄວັນຢາ ໃນທ້ອງຂັບລົດຫາງໄປແລ້ວຈຶ່ງຄ່ອຍເວົ້າ :

— ນ້ອງເກີດໃນຄອບຄົວ ຊາວນາ, ພໍ່ນ້ອງເປັນຊາວນາທີ່

ທຸກຈົນ. ແຕ່ຄາວກ່ອນ, ເວລາພວກຝະລັ່ງ ເຂົ້າມາປົກຄອງຢູ່ດິນຊາ່ວເໜືອນີ້, ປີໃດພວກມັນກໍ່ມາຈັບພໍ່ນ້ອງແລະໄທບ້ານໄປເປັນກຸລີ ຂຸດທາງລົດ ແຕ່ຊາ່ວເໜືອໄປຫາຊຽງຂວາງ. ໝົດກຸລີຊຸດນີ້ແລ້ວ ປ່ຽນຊຸດໃໝ່ ກໍ່ຍັງບໍ່ທັນເຫັນລົດໂອໂຕ ຂອງພວກມັນແລ່ນໄດ້. ຈົນເຖິງ ມື້ໜຶ່ງ, ຕາມພໍ່ນ້ອງເລົ່າ, ພວກຝະລັ່ງເອົາລົດໃສ່ເຮືອບິນ, ແຕ່ວຽງຈັນມາລົງຊາ່ວເໜືອ. ຝະລັ່ງສອງສາມບັກຂີ່ລົດມາແຕ່ຊາ່ວເໜືອ, ມາຈອດຢູ່ບ່ອນໜຶ່ງໃກ້ໆພວກກຸລີຂຸດທາງອາດ ຈະແມ່ນ ພວກມັນ ມາກວດທາງ. ເມື່ອເຫັນລົດໂອ ໂຕແລ່ນມາຈອດຢູ່ໃກ້ ໆ ນັ້ນ, ພວກກຸລີພາກັນຫຸ້ມມາເບິ່ງ. ໃນເວລານັ້ນ ນາຍຄຸມທາງຈັບ ໄມ້ຄ້ອນແລ່ນມາ ແຕ່ໄກ:

— ສ... ແມ່ພວກສູບໍ່ໄປເຮັດວຽກ, ຫຸ້ມມາເບິ່ງ ນີ້ອີສັງ ພວກສູບໍ່ຮູ້ວ່ານີ້ ແມ່ນລົດ ໂອໂຕ ຂອງທ່ານຝະລັ່ງ... ນາຍຄຸມທາງ ທັງເວົ້າ, ທັງຈັບໄມ້ ຄ້ອນທຸບ ຕີພວກກຸລີ; ໄມ້ຄ້ອນ ອັນໂຫດຮ້າຍຂອງ ບັກນາຍຄຸມທາງຟາດລົງ ໃສ່ໜ້າຜາກພໍ່ທອງພັນໝົດແຮງ, ເລືອດໄຫຼ ອອກເຕັມໜ້າເຕັມຕາ. ພໍ່ທອງພັນທັນຮ້ອງໂອຍ ! ບາດໜຶ່ງແລ້ວເລີຍ ລົ້ມສະຫຼົບລົງ ຂ້າງລົດໂອໂຕຄັນນັ້ນ. ສ່ວນພວກ ຝະລັ່ງພວກມັນ ແນມເບິ່ງ ແລ້ວຫົວ, ຂຶ້ນລົດຕິດຈັກແລ່ນໜີ, ໂດຍບໍ່ເອົາຫົວ ຊາຫຍັງໝົດ. ຫຼັງຈາກນັ້ນສີ່ຫ້າມື້, ພວກຊາວທີ່ໄປເປັນ ກຸລີໄດ້ເອົາພໍ່ທອງພັນກັບຄືນ

ເມືອບ້ານ. ແຕ່ນັ້ນມາ ຢູ່ເທິງໜ້າຜາກ ຂອງພໍ່ທອງພັນເລີຍ ມີແປ້ວບັກໃຫຍ່ໆ. ແຕ່ເທິງໜ້າຜາກລົງມາຫາຄິ້ວຕາ ແລະ ກໍ່ ນັບແຕ່ເວລານັ້ນເປັນຕົ້ນມາ, ເມື່ອເວລາໃດໄດ້ຍິນສຽງລົດແລ່ນ ພໍ່ທອງພັນພັດ ເອົາເລື່ອງແປ້ວບັກ ໃຫຍ່ຢູ່ເທິງໜ້າຜາກເພິ່ນ ມາເລົ່າສູ່ທອງພັນຟັງ. ເມື່ອໃດເພິ່ນເລົ່າ ເລື່ອງນີ້ອອກມາ, ເພິ່ນກໍ່ຈະ ແດງຄວາມຄຽດ ຂຶ້ນຕໍ່ພວກສັດຕູບໍ່ ແລ້ວບໍ່ລືມຈັກ ເທື່ອ. ຈົນຮອດສະໄໝຕົວ ເມືອງຊຳເໜືອໄດ້ຮັບການປົດປ່ອຍ ພໍ່ທອງພັນ ໄດ້ຮູ້ຂ່າວ ວ່າການ ປະຕິວັດມີລົດ ແລ່ນທ່ຽວຢູ່ຕົວ ເມືອງຊຳເໜືອ. ພໍ່ທອງພັນເຄີຍເວົ້າຕໍ່ທອງພັນວ່າ:

— ທອງພັນ, ຈັກມື້ຫ້ານີ້ເດີ, ພໍ່ຊິພາລູກໄປ ເມືອງ ຊຳເໜືອເບິ່ງລົດ ແລະ ຂໍຂີ່ລົດຂອງສູນກາງ ແນວລາວ ຮັກຊາດ. ທອງພັນເຫັນວ່າພໍ່ມີຄວາມມຸ່ງຫວັງ ຢາກຂີ່ລົດ, ສະນັ້ນມື້ນີ້ ໜຶ່ງທອງພັນໄດ້ເວົ້ານຳພໍ່ວ່າ:

— ໂອ້ຍພໍ່ເອີຍ! ດຽວນີ້ພໍ່ກໍ່ເຖົ້າແກ່ ແລະ ມັກເຈັບເປັນບໍ່ ອາດຈະຍ່າງໄປເມືອງຊຳເໜືອໄດ້ດອກ. ພໍ່ຢູ່ເຮືອນສາ, ຖ້າຈັກ ສາມ, ສີ່ປີອີກ, ລູກຊິຂໍໄປຮຽນຂັບລົດ. ເວລາໃດຮູ້ຂັບລົດແລ້ວ ລູກຈະຂັບລົດ ຂອງສູນກາງ ແນວລາວຮັກຊາດ ມາຕ້ອນ ເອົາ ພໍ່ໄປຫຼິ້ນຢູ່ເມືອງຊຳເໜືອ.

ໄດ້ຍິນລູກເວົ້າວ່າຈະໄປຮຽນ ຂັບລົດ, ພໍ່ທອງພັນ ຕື່ນສະ

ດັງຂຶ້ນໜັກແຮງ, ເພາະເພິ່ນບໍ່ເຊື່ອວ່າຊົນຊາດໄທແດງຈະມີຄົນມີຄວາມສາມາດຂັບລົດໄດ້, ແລະ ຍິ່ງບໍ່ເຊື່ອໄດ້ວ່າລູກຊາຍຂອງຕົນຈະຂັບລົດໄດ້. ຄວາມຈິງແລ້ວເວລານັ້ນທອງພັນກໍ່ບໍ່ເຊື່ອວ່າ ຕົນຈະຂັບລົດໄດ້, ເພາະລາວຍັງບໍ່ທັນໄດ້ ຂີ່ລົດ ຈັກເທື່ອ, ແຕ່ທອງພັນເວົ້າເປັນແນວນັ້ນກໍ່ເພື່ອຢາກເຮັດໃຫ້ພໍ່ດີໃຈຊື່ໆ. ຫຼັງຈາກນັ້ນສອງ, ສາມປີ. ທອງພັນໄດ້ພັດພາກຈາກຄອບຄົວ, ເພື່ອອໍສະໝັກເຂົ້າເປັນນັກຮົບ ໃນກອງທັບປົດປ່ຽປະຊາຊົນລາວ.

ເບື້ອງຕົ້ນກອງຂອງທອງພັນໄດ້ປະຈຳຢູ່ພູສູງແຫ່ງໜຶ່ງຫຼັງຈາກ ປົດປ່ຽຜາດີ່, ກອງຂອງ ທອງພັນ ໄດ້ມາ ປະຈຳຢູ່ບ່ອນໜຶ່ງ ໃກ້ຈາກ ຊຳເໜືອປະມານ ສາມ ສີ່ສິບຫຼັກ. ສະນັ້ນບາງຄັ້ງບາງຄາວກໍ່ມີລົດມາສົ່ງອາຫານການກິນ ແລະ ອາວຸດມາໃຫ້. ເມື່ອເວລາໃດ ເຫັນລົດມາ ທອງພັນມັກອອກມາຢືນເບິ່ງຢ່າງມິດງຽບ, ບໍ່ປາກບໍ່ຕີງ: ມີບາງເທື່ອທອງພັນກໍ່ໄດ້ປີນຂຶ້ນລົດຂົນເຄື່ອງຫຼືຍ້ຽມເບິ່ງຫ້ອງຂັບ. ເມື່ອເຫັນປະກິດທ່າທີຂອງທອງພັນຄືແນວນີ້, ສະຫາຍຜູ້ຂັບລົດເລີຍຖາມທອງພັນດ້ວຍຄວາມອ່ອນຫວານ.

— ເປັນແນວໃດ! ມັກຂີ່ລົດບໍ່? ຄັນຢາກຂີ່ລົດຂ້ຽຈະໃຫ້ຂີ່ໄປຫຼິ້ນຈັກໜ້ຽ...

ທອງພັນດີໃຈຫຼາຍ, ລາວງຶກຫົວແລະຂໍຂີ່ລົດ. ສະຫາຍຜູ້ຂັບລົດໄດ້ຕິດຈັກລົດ, ຂັບລົດພາທອງພັນໄປອ້ອມຄ້າຍຮອບໜຶ່ງແລ້ວຈຶ່ງໃຫ້ທອງພັນລົງ:

— ນີ້! ຖ້ານັກຂີ່ລົດຄືແນວນີ້, ເປັນຫຍັງຈຶ່ງບໍ່ໄປຂັບລົດສາ...

ເທື່ອທຳອິດ ທີ່ທອງພັນໄດ້ຍິນຄົນອື່ນ ບອກໃຫ້ ລາວໄປຮຽນຂັບລົດ, ທອງພັນຮູ້ສຶກຕື່ນສະດຸ້ງໃຈ:

— ນ້ອງກໍ່ຊິຂັບລົດໄດ້ຫວາ!

ສະຫາຍຜູ້ຂັບລົດຍິ້ມຫົວເວົ້ານຳທອງພັນ:

— ເປັນຫຍັງຊິຂັບລົດບໍ່ໄດ້ຄົນໄດ້ໄປຮຽນແລ້ວໃຜໆ ກໍ່ຄືຈະຂັບໄດ້ໝົດ.

ທອງພັນແກ່ວງຫົວປະກິດວ່າໝົດຫວັງ:

— ນ້ອງຮຽນບໍ່ໄດ້!...

— ເປັນຫຍັງຈຶ່ງບໍ່ໄດ້, ມັນບໍ່ມີຫຍັງຍາກດອກ. ຄົນວ່າໄດ້ໄປຮຽນແລ້ວ, ໃຜ ໆ ກໍ່ຊິຮູ້ຂັບຄືກັນນັ້ນແລ້ວ ...

ຄຳເວົ້າຂອງສະຫາຍຜູ້ຂັບລົດ: «...ບໍ່ມີຫຍັງຍາກດອກ, ຄົນວ່າໄດ້ໄປຮຽນ ແລ້ວໃຜ ໆ ກໍ່ຊິຮູ້ຂັບຄືກັນ ນັ້ນແລ້ວ...» ໄດ້ປັ່ນປ່ວນໃນຊ່ວງເອິກ ຂອງທອງພັນທັງເວັນ ແລະ ຄືນ. ຄືນນັ້ນທອງພັນບໍ່ອາດ ສາມາດນອນລັບໄດ້. ລາວຊື່ນໃຈ ແລະ ຄອງ

ຖ້າເວລາ ເມື່ອຢາມບ້ານ, ລາວຈະເລົ່າສູ່ພໍ່ຟັງ ກ່ຽວກັບເລື່ອງທີ່ລາວໄດ້ຂີ່ລົດ ຂອງສຸນກາງ ແນວລາວ ຮັກຊາດ. ດ້ານໜຶ່ງທອງພັນ ໄດ້ຄົ້ນຄິດຊິ່ເຮັດແນວໃດ ຈຶ່ງຈະ ໄດ້ໄປຮຽນ ຂັບລົດ, ຈະເຮັດແນວໃດ ຈຶ່ງຈະ ຕອບສະໜອງ ໄດ້ຄວາມມຸ່ງ ຫວັງຫຼາຍສິບປີທີ່ຜ່ານມາຂອງພໍ່.

ບໍ່ອາດສາມາດຈະສະກັດກັ້ນໄດ້ຄວາມມຸ່ງມາດປາຖະໜາ. ຄວາມມຸ່ງຫວັງທີ່ກຳລັງປັ່ນປ່ວນໃນຊ່ວງເອິກ ; ມື້ໜຶ່ງທອງພັນໄດ້ໄປພົບຜູ້ບັນຊາການກອງພັນ ແລະສະເໜີຂໍໄປຮຽນຂັບລົດ. ພາຍຫຼັງທອງພັນ ໄດ້ສະເໜີຄວາມມຸ່ງ ຫວັງຂອງຕົນແລ້ວ, ຜູ້ບັນຊາກອງພັນໄດ້ຄົ້ນຄິດແລະອະນຸມັດໃຫ້ທອງພັນໄປຮຽນຂັບລົດຢູ່ໂຮງຮຽນຂັບລົດຂອງສຸນກາງ.

ແຕ່ເມື່ອເວລາຮູ້ຂັບລົດແລະ ໄດ້ຂັ້ນເທິງມອບລົດໂອໂຕບາຄັນໜຶ່ງ ໃຫ້ລຳລຽງ ອາວຸດອອກ ໄປແນວໜ້າ, ທຸກ ວັນຄືນທອງພັນໄດ້ເອົາໃຈໃສ່ ບົວລະ ບັດຜັດ ສີລົດ ຄັນນັ້ນ. ເມື່ອເວລາໃດໄປລຳລຽງ ກັບຄືນມາທອງພັນ ໄດ້ຊ້ອມແປງຜັດລ້າງແຕ່ລະພາກສ່ວນຂອງລົດ. ສະນັ້ນລົດຂອງທອງພັນເວລາໃດກໍ່ຄືຈັ່ງວ່າເຫຼື້ອມສະອາດແລະແລ່ນດີຄືລົດຍັງໃໝ່ຢູ່.

ເມື່ອໄດ້ຍິນ ທອງພັນ ໄປຮຽນຂັບລົດ, ພໍ່ທອງພັນ ດີໃຈທີ່ສຸດ, ແຕ່ເພິ່ນຍັງເປັນຫ່ວງໃຍຄິດງ໊ຕາງລູກ, ເພິ່ນຢ້ານທອງ

ພັນບໍ່ມີຄວາມສາມາດພຽງພໍເພື່ອຈະຂັບລົດ, ເພິ່ນຄຶດເຫັນວ່າລົດ ຄັນໜຶ່ງໃຫຍ່ປານນັ້ນ, ພັດເຮັດດ້ວຍເຫຼັກ, ດ້ວຍຂາງ, ທອງພັນ ຈະເຮັດແນວໃດ ຈຶ່ງຊິຂັບລົດ ນັ້ນໄດ້. ແຕ່ເຖິງວ່າເພິ່ນຈະຄຶດເປັນຫ່ວງ ໃນຄືແນວນັ້ນກໍ່ຕາມ, ພໍ່ທອງພັນກໍ່ໄດ້ພະຍາຍາມອົບຂວາງໃຫບ້ານໄປຂຸດທາງ. ມື້ເທື່ອໜຶ່ງ, ທອງພັນໄດ້ຮັບຄໍາສັ່ງສົ່ງອາວຸດອອກໄປແນວໜ້າ, ເສັ້ນທາງທີ່ລົດທອງພັນໄປນັ້ນໄດ້ຜ່ານໄປໃກ້ບ້ານຂອງທອງພັນ. ສະນັ້ນເມື່ອກັບຄືນມາແຕ່ສະໜາມຮົບ, ທອງພັນໄດ້ແວ່ເຂົ້າບ້ານເຊີນເອົາພໍ່ແລະໃທບ້ານຂຶ້ນຂີ່ລົດ, ລາວຂັບລົດພາພໍ່ແລະໃທບ້ານທ່ຽວຫຼິ້ນດົນເຕີບແລ້ວຈຶ່ງສົ່ງພວກເພິ່ນກັບຄືນບ້ານ, ພໍ່ຂອງທອງພັນ ແລະ ໃທບ້ານດີໃຈຫຼາຍທີ່ເຫັນວ່າ ຊົນຊາດໄທແດງມີຄົນຮູ້ຂັບລົດແລ້ວ, ຍິ່ງກວ່ານັ້ນ. ຜູ້ທີ່ຮູ້ຂັບລົດນັ້ນຊໍ້າພັດແມ່ນລູກຊາຍຂອງພໍ່. ແຕ່ນັ້ນມາ, ພໍ່ຂອງ ທອງພັນ ແຮ່ງສາໜັກ ໄປຂຸດທາງ ແລະ ເມື່ອໃດເພິ່ນລະດົມໃທບ້ານໄປຂຸດທາງ, ເພິ່ນເຄີຍໄດ້ເວົ້າບໍາໃທບ້ານວ່າ:

— ດຽວນີ້ໄປຂຸດທາງ, ແປງທາງບໍ່ແມ່ນ ໄປເຮັດກຸລີຄືແຕ່ກ່ອນອີກ ແລະ ຂຸດທາງບໍ່ແມ່ນ ໃຫ້ລົດຂອງພວກສັດຕູແລ່ນ. ແມ່ນໃຫ້ລົດ ຂອງຂບວນການ ແນວລາວ ຮັກຊາດ, ແມ່ນໃຫ້ລົດຂອງລູກຫຼານຊົນຊາດໄທແດງພວກເຮົາແລ່ນ...

ທອງພັນ ໄດ້ເຊົາ ລົມເລື່ອງ ນຳຂ້ຽແຕ່ດົນແລ້ວ, ແຕ່ຄຳເວົ້າຂອງທອງພັນຍັງກ່ຽວວົນຢູ່ໃນຊ່ວງເອິກຂອງຂ້ຽ. ຕໍ່ໜ້າຂ້ຽປະກົດເຫັນ ວ່າມີທາງ ເສັ້ນໜຶ່ງທີ່ກ້ວາງໃຫ່ຍ, ຊື່ທັກ, ຊຶ່ງພໍ່ຂອງ ທອງພັນ ກຳລັງ ຍົກໝາກຈົກ ຂຶ້ນຂຸດ ເປັນບາດ ເປັນບາດ ໜັກແໜ້ນ ແລະ ສະໝ່ຳ ສະເໝີ ເພື່ອສ້ອມແປງຫົນທາງໃຫ້ລົດຂອງທອງພັນ, ລົດຂອງນັກຣົບປົດປ່ຽປະຊາຊົນລາວລຳລຽງອາວຸດອອກໄປແນວໜ້າດັບສູບສັດຕູ.

ຊ.ໜ 7-1971.

24 / VII

ຫ້າມຈຳໜ່າຍ

# ດອກໄມ້ປ່າ

ໂດຍ: ສົມບຸນ ທະວີໄຊ

ໜຶ່ງໂມງແຈ້ງ: ແລ້ວຮອດສອງ, ສາມໂມງ ...

ກອງຮ້ອຍຂອງຂ້ອຍປົດລັບ ເຄື່ອນທັບເຂົ້າໄປໃນເຂດແນວຫຼັງຂອງສັດຕູ, ເດີນທາງມາເກືອບ ໄດ້ຄືນໜຶ່ງເຕັມໆ ກໍ່ຍັງບໍ່ທັນຮອດບ້ານຫ້ວຍມຸນ ຊຶ່ງເປັນເປົ້າໝາຍທີ່ທາງກອງພັນໄດ້ມອບໝາຍໜ້າທີ່ໃຫ້ໄປດັກຊະກັດຕີສັດຕູ ທີ່ຈະແຕກມາ ແຕ່ປົດພຸດັນເພື່ອສົມທົບກັບກອງພັນອື່ນໆ ປົດປ່ອຍຜາດີ. ພວກຂ້ອຍໃຜໆກໍ່ກຽມຕົວຢ່າງກະທັດຮັດເບົາບາງ. ສິ່ງຂອງອັນໃດບໍ່ຈຳເປັນແມ່ນປະໄວ້, ເອົາແຕ່ປືນ, ໝາກແຕກ, ຜ້າຫົ່ມແລະເຄື່ອງໃຊ້ຈຳເປັນເທົ່ານັ້ນເພື່ອສະດວກໃນການເດີນທາງ.

ພວກຂ້ອຍເດີນທາງໄປຕາມແຜນທີ່, ເພາະວ່າ ຫົນທາງທີ່ເຄີຍຫຽວ, ພວກສັດຕູໄດ້ຕັ້ງປົດຄ້າງຢູ່ໝົດ, ເດີນທາງມາຮອດປ່າແຫ່ງໜຶ່ງ ໄກຈາກບ້ານຫ້ວຍມຸນປະມານສີ່ຫຼັກ ກິໂລ **ແມັດ**,

ກໍ່ພໍດີຟ້າແຈ້ງກ່ອນ ຈຳເປັນຂ້ອຍສັ່ງໃຫ້ ອ້າຍ ນ້ອງ ພັກ ຜ່ອນ ດ້ານໜຶ່ງກໍ່ເພື່ອຮັກສາສຸຂະພາບ ແລະ ດ້ານໜຶ່ງ ກໍ່ ເພື່ອ ຮັກ ສາຄວາມລັບ.

ເວລາປະກົດວ່າຜ່ານໄປ ຊ້າ ເອົາ ແທ້ໆ, ຄວາມ ລໍ ຄອຍເຮັດ ໃຫ້ຂ້ອຍນອນບໍ່ເປັນລັບເປັນຕື່ນ, ສວາງເຕີບແລ້ວປະກົດວ່ານ້ຳ ໝອກຍັງຄຶງກຸ້ມກິ້ວທົ່ວບໍລິເວນ ປ່າດົງ, ສຽງ ນ້ຳ ໝອກ ຫຼົ່ນ ລົງຕ້ອງໃບໄມ້ເໝືອນຫ່າຝົນໃຫຍ່ຈະເລີ່ມ ຕົກ ອາ ກາດ ໜາວ ຈັດເຂົ້າທຸກຂະນະ, ຂ້ອຍຍ່າງໄປກວດເບິ່ງ ອ້າຍ ນ້ອງ ທີ່ ຜູກ ອູ່ ນອນເປັນ ຈຸສາມ ຈຸສີ່ຄົນ-ພວກເຂົາເຈົ້າບາງຄົນບໍ່ນອນ, ບາງ ຄົນກໍ່ອ່ານປຶ້ມ, ບາງຄົນກໍ່ຫຼີ້ນສິ້ງເສືອ, ບາງຈຸກໍ່ນັ່ງໂອ້ລົມກັນ ແຕ່ທັງໝົດເຫຼົ່ານັ້ນຍັງຄົງຈົມຢູ່ໃນຄວາມງຽບສະຫງັດ.

ຂ້ອຍຍ່າງຜ່ານນັກຮົບຈຸໜຶ່ງທີ່ພວມໂອ້ລົມກັນ ແລະ ຕ້ອງ ຢຸດຢູ່ທີ່ນັ້ນເມື່ອໄດ້ຍິນສຽງເອີ້ນ:

— ຜູ້ກອງວິຊຽນ! ເຊີນຜູ້ກອງສູບຢາ.

ນັກຮົບຜູ້ໜຶ່ງຍື່ນຢາມາໃຫ້ຂ້ອຍພັນ ແລະ ຍະບ່ອນ ໃຫ້ຂ້ອຍ ນັ່ງ.

— ພວກນ້ອງຄືຈະເມື່ອຍຫຼາຍບໍ່? ຂ້ອຍຖາມ.

— ທຳມະດາຜູ້ກອງ, ຜ່ານມາສອງສາມ ເທື່ອກໍ່ເຄີຍແດ່ ແລ້ວ. ເວລາພວກນ້ອງ ເຂົ້າເປັນທະຫານ ທຳອິດເຮັດຫຍັງກໍ່

ເມື່ອຍ, ອຶດນອນຄືນໜຶ່ງຄືອຶດເປັນປີ. ນັກຮົບຜູ້ໜຶ່ງຕອບ, ທັງຫົວ ແລະ ຫຼຽວເບິ່ງໝູ່ເພື່ອນຂ້ອຍ ຊຸບຢາບາດແຮງແລ້ວພົ່ນຄັວນອອກຊ້າໆ, ຍັງບໍ່ທັນໄດ້ເວົ້າຫຍັງ, ນັກຮົບຜູ້ໜຶ່ງຖາມອີກ:

— ຜູ້ກອງ ! ເລົ່າເລື່ອງ ໃຫ້ພວກນ້ອງຟັງແດ່.

ຂ້ອຍແມ່ນຜູ້ໜຶ່ງທີ່ມັກເລົ່າເລື່ອງເລົ່ານິທານ, ມີບາງເທື່ອຂ້ອຍເລົ່າໝົດມື້ກໍ່ບໍ່ເມື່ອຍ, ເລື່ອງທີ່ນັກຮົບຂອງຂ້ອຍມັກກວ່າໝູ່ແມ່ນເລື່ອງທີ່ຂ້ອຍໄປສືບຂ່າວຈັບສັດຕູ, ມາມື້ນີ້ເຈົ້າຊ້ຳພັດບອກໃຫ້ຂ້ອຍເລົ່າອີກຂ້ອຍບໍ່ຮູ້ຈະເອົາເລື່ອງຫຍັງມາເວົ້າ.

— ຊິ່ໃຫ້ເລົ່າເລື່ອງຫຍັງ ?

— ເລື່ອງຫຍັງກໍ່ໄດ້ຜູ້ກອງ ! ນັກຮົບຜູ້ໜຶ່ງຕອບທັນທີໂດຍບໍ່ຕ້ອງຄຶກຕອງ, ແຕ່ສຳລັບຂ້ອຍ , ຂ້ອຍຕ້ອງຄົ້ນຄິດ, ຂ້ອຍຫຼຽວຂຶ້ນເບິ່ງປາງໄມ້ແລະ ຫຼຽວໄປທົ່ວບໍລິເວນນັ້ນ. ແຕ່ແລ້ວ,ດິນດອນ ຕອນຫຍ້າ ແລະ ພູຜາປ່າໄມ້ແຫ່ງນີ້ໄດ້ພາໃຫ້ຂ້ອຍຄິດເຫັນເດັກຍິງຄົນທີ່ເປັນຊົນຊາດລາວຊູງ ທີ່ຂ້ອຍບໍ່ອາດຫຼົງລືມໄດ້ ໃນຊີວິດ, ຮູບພາບຂອງເຂົາໄດ້ປະທັບຊຶ່ງຢູ່ໃນຄວາມຊົງຈຳຂອງຂ້ອຍ.

— ເອີ. ເລົ່າເລື່ອງແນວນີ້ສາ.

— ເອີ. ເລົ່າສາຜູ້ກອງເລົ່າສາ.

ຂ້ອຍເລີ່ມເລົ່າເລື່ອງ ເດັກຍິງຜູ້ນັ້ນ ສູ່ບັນດານັກຮົບຂອງຂ້ອຍ ຟັງ.

ກ່ອນນີ້ຫ້າປີ, ຄືຕົ້ນລະດູບານໃໝ່ປີ 1963, ເວລານັ້ນ ເຮົາ ພວມບັນຊາໝູ່ສືບຂ່າວ, ໄດ້ຮັບຄຳສັ່ງໃຫ້ໄປສືບສັດຕູຢູ່ປົດພູ ຕັນຄັນ,ມາຮອດກາງທາງ,ໄກຈາກບ່ອນພວກເຮົາຕັ້ງທັບພັກ ຜ່ອນຢູ່ດົງວັນ ບໍ່ຮອດສອງຮ້ອຍແມັດ, ບັງເອີນພົບພວກ ສັດຕູ ໝູ່ໜຶ່ງ ອອກໄປສາລະເວ; ພວກສັດຕູໄດ້ລະດົມ ຍິງປືນໃສ່ ພວກເຮົາປານກັບຫ່າຝົນ. «ເສັຽ ຄວາມລັບແລ້ວ» ເຮົາເຕືອນ ຕົວເອງ ຈຸສານຄົນພວກເຮົາໄດ້ ສູ້ຮົບກັບສັດຕູຢູ່ ແຫ່ງນັ້ນຈົນ ຮອດຊາວນາທີ. ນັບວ່າເປັນບັ້ນຮົບທີ່ດຸເດືອດ ແລະ ກິນເວລາ ຍາວທີ່ສຸດ, ເວລານັ້ນອ້າຍນ້ອງສອງຄົນທີ່ໄປນຳເຮົາກໍ່ເສັຽສະ ຫຼະແລ້ວ, ແຕ່ເສັ້ນທາງທີ່ຈະອອກໄປ ສູ່ຄວາມປອດໄພກໍ່ບໍ່ມີ, ເພາະວ່າສັດຕູໄດ້ປິດລ້ອມໝົດສີ່ດ້ານ.ບັງເອີນລູກປືນລູກໜຶ່ງ ບໍ່ຮູ້ບິນມາແຕ່ທາງໃດໄດ້ ຖືກບ່າໄຫຼ່ເບື້ອງຂວາຂອງເຮົາແລ້ວ ເຮົາກໍ່ສະຫຼົບໄປ...

ເຮົາບໍ່ຮູ້ວ່າເຮົາສະຫຼົບຢູ່ແຫ່ງນັ້ນ ເຫິງປານໃດ, ພໍຮູ້ເນື້ອ ຄີງຂຶ້ນມາປະກົດວ່າສຽງຄົນໄດ້ຈໍ່ ໆ ແຈ ໆ ຢູ່ໃນແກ້ວຫູຂອງ ເຮົາ. ເມື່ອມືນຕາຂຶ້ນເບິ່ງຄັກ ໆ, ນັ້ນແມ່ນທະຫານສັດຕູ, ເຮົາ ຕົກໃຈວູບບາດໜຶ່ງ. ຮີບຟ້າວກູ້ເອົາ ສະຕິຄືນມາ ຄວາຫາປືນ

ທາງໃດກໍ່ບໍ່ເຫັນ, ງົມຫາໝາກແຕກກໍ່ບໍ່ມີ. ປາງປືນຂອງສັດຕູໄດ້ຊີ້ມາໃສ່ເຮົາ.

ສັດຕູບັກໜຶ່ງ ຄົງຈະ ແມ່ນ ນາງມັນ ຊາກູຫຼ້າງລາກ ນ້ອງສອງກົ້ນອອກແລ້ວ ນາຢືນຈ້ງຈະ ຢ່າງຈອງຫອງ ຕໍ່ໜ້າເຮົາ. ເຮົາສຸມກຳລັງ ທີ່ມີຢູ່ລຸກຢືນຂຶ້ນເຮັດ ໃຫ້ໃບໜ້າຍາວເຄດເລດທີ່ບໍ່ມີເລືອດຂອງບັກນີ້ຂາວຊີດລົງ. ມັນຫຼຽວເບິ່ງເຮົາແຕ່ຫົວຮອດຕີນໃນທ່າຢ້ານກົວແລ້ວມັນກໍ່ຮ້ອງປານໝາເນົາຄ້ອນໃຫ້ທະຫານມັນມາມັດເຮົາ. ໂທ... ເອີຍ, ເວລານັ້ນເຮົາພິດເທົ່າໃດກໍ່ບໍ່ໄດ້ເພາະກຳລັງຂອງສັດຕູຫຼາຍໂພດ. ຄວາມເຈັບປວດຂອງບາດແຜ, ຍັງບໍ່ທັນເຈັບທໍ່ຄວາມຄຽດແຄ້ນທີ່ລຸກວຸ່ ໆ ໃນດວງໃຈຂອງເຮົາ. «ຕ້ອງສ້າງຕົນໃຫ້ສົມເປັນສະມາຊິກຊາວໜຸ່ມຕະລຸມບ່ອນທີ່ແທ້ຈິງ» ເຮົາລະດົມຕົວເອງ. ຕັດສິນໃຈຮັກສາຄວາມລັບຈົນເຖິງລົມຫາຍໃຈເທື່ອສຸດທ້າຍ.

ພວກສັດຕູໄດ້ຄຸມເຮົາໄປມັດໄວ້ເສົາກາງບ້ານຫ້ວຍມຸນ, ຊຶ່ງເປັນບ້ານທີ່ພວກເຮົາຈະເຄື່ອນທັບໄປດຽວນີ້ແຫຼະ, ບ້ານຫ້ວຍມຸນ ແມ່ນບ້ານ ຊົນຊາດລາວສູງ ມີປະມານ ສາມສິບ ປາງຫຼັງເຮືອນ. ຂະນະນັ້ນຊາວບ້ານພວມຫຼັ່ງໄຫຼກັນມາແຕ່ໄຮ່ ພວກເດັກນ້ອຍເປືອຍໂຕຫຼົ້ນຂີ້ຝຸ່ນກາງບ້ານແລ່ນຫຸ້ມມາເບິ່ງເຮົາ. ໃນຈຳນວນເດັກນ້ອຍ, ມີເດັກຍິງຄົນໜຶ່ງປະມານສິບສາມປີນາຍືນ

ຕໍ່ໜ້າເຮົາ ໂດຍບໍ່ປາກບໍ່ຕີ. ນອກຈາກມີແຕ່ສິ່ງ ແສງຕາທີ່ສົງ

ຖາມ ແລະ ສົນໃຈມາເບິ່ງເຮົາເທົ່ານັ້ນ. ໃບໜ້າກົມ ມົນ ຂອງ

ນາງໜຸ່ມໝອງຈ່ອຍຜອມ, ທ່າທາງຄ້າຍກັບຜູ້ເຖົ້າສີ່ສິບຫ້າສິບ

ປີ, ສິ້ນສີດຳຜືນເກົ່າໆ.ທີ່ໂໝກ ໆ ກໍ່ຂາດຫ້ຽນຈົນເປັນຍ່ຽນ

ຊານຊະຢູ່ໜ້າແຂ້ງ, ຜ້າມັດແອວ ສີແດງຈົນກາຍເປັນສີດຳ,

ເຖິງເຮົາຈະເຈັບປວດປານນັ້ນເຮົາກໍ່ຍັງຮູ້ສຶກ ສົງສານເດັກນ້ອຍ

ຊຸມນີ້ທີ່ມີຊີວິດຢູ່ບໍ່ຕ່າງກັບສັດເດຍລະສານ, ຮູບພາບອັນເສົ້າ

ໃຈນີ້ ເຮັດໃຫ້ເຮົາຄິດເຫັນ ພວກ ນ້ອງນ້ອຍ ລາວສູງ ທີ່ມີ ຊີວິດ

ຢ່າງຜາສຸກ ໃນເຂດປົດປ່ອຍ.

— ມັນມາແຕ່ໃສ?

— ໃຜຊິຮູ້.

— ເປັນຫຍັງຈຶ່ງຖືກເຂົາມັດ?

— ກໍ່ລອງຖາມມັນຫັ້ນດີ.

ພວກເດັກນ້ອຍ ເຂົາຖາມກັນ ອຶກກະທຶກ. ສຽງເດັກນ້ອຍດັງ

ຟົດສະໜັ່ນທົ່ວ ບ້ານສວນ ປະຊາຊົນຜູ້ໃຫຍ່ເຂົາເຈົ້າພາກັນມາ

ເບິ່ງໜ້ອຍໜຶ່ງແລ້ວກໍ່ກົ້ມໜ້າເມືອເຮືອນ. ສ່ວນພວກທະຫານ

ສັດຕູຫຼັງຈາກມັດ ເຮົາດີດ ກົກເຂົາກໍ່ພາກັນເຂົ້າ ໄປໃນ ເຮືອນ

ເຜຍລີທີ່ຕັ້ງຢູ່ນັ່ນ ໆ ນັ້ນ. ໜ່ບາງທະຫານ ພາເຜຍລີອອກມາ

ເບິ່ງເຮົາໜ້ຽໜຶ່ງ ກໍ່ຫົວເຣຣາະເຂົ້າ ໄປໃນເຮືອນ, ເບິ່ງ ຊຶງຄຶງ ຈະແມ່ນເຂົາມ່ວນຊື່ນຕໍ່ຜົນງານຂອງເຂົາ.

— ເຂົາຕີເຮົາຈົນເລືອດອອກ !

ເດັກຍິງທີ່ຢືນຊື່ງຢູ່ຕໍ່ໜ້າເຮົາໄດ້ອຸທານອອກມາ, ເຂົາຫຼຽວເບິ່ງຮຽເລືອດທີ່ໄຫຼຊຶມຢູ່ບ່າຂອງເຮົາບໍ່ຂາດໄລຍະ, ມີເດັກນ້ຽຜູ້ໜຶ່ງໃນເຄື່ອງສີດຳໃໝ່ໆ ແກ່ວງກ້ອນຫີນມາໃສ່ເຮົາ. ເດັກຍິງຄົນນັ້ນກໍ່ຮ້ອງໃສ່:

— ຢ່າໄປເຮັດເຂົາ.

ເດັກນ້ຽຜູ້ດີ ດ້ານ ນັ້ນ ເຮັດ ສົບເບະ ຍັງ ຈະກຳ ເອົາ ຂີ້ດິນແກ່ວງໃສ່ອີກ, ແຕ່ຖືກເຂົາຈັບມືໄວ້ປິດຂີ້ດິນຖິ້ມ.

— ມຶງ ! ກູຊິບອກແມ່ໃຫ້ເບິ່ງ. ກູຊິບອກແມ່ໄລ່ມຶງໜີຈາກເຮືອນກູໃຫ້ເບິ່ງ. ອີ່ຂີ້ຂ້າ, ອີ່ເສືອຄົບ.

— ເວົ້າແລ້ວມັນກໍ່ແລ່ນອອກຈາກບຸ່ມໜີ, ສ່ວນເດັກຍິງຜູ້ນັ້ນ ຍັງຄົງຢືນນິດ, ນິດຢ່າງທີ່ນ້ຽ ບໍ່ອາດຈະປະ ຕອງແນວຄິດຂອງເຂົາໃຫ້ຖືກໄດ້.

-- ໃຫ້ກູຂໍກິນນ້ຳແດ່ ເຮົາຮູ້ສຶກຫິວນ້ຳຈົນຄໍແຫ້ງ, ເລືອດໄຫຼລົນບໍ່ຂາດຈົນເຮັດ ໃຫ້ເສື້ອປ່ຽກຊຸ່ມໝົດ. ເມື່ອເຮົາເວົ້າພາສາລາວຊຸງໄດ້ດີ,ພວກເດັກນ້ຽກໍ່ຫຼຽວເບິ່ງໜ້າກັນດ້ວຍຄວາມແປກປະລາດ.

— ເຈົ້າແມ່ນຄົນແມ້ວບໍ?

— ບໍ່! ຂ້ຽແມ່ນຄົນລາວເທິງ.

— ຊັ້ນເປັນຫຍັງເຈົ້າຈຶ່ງຮູ້ຄວາມແມ້ວ?

— ແຕ່ກ່ອນຍ້ອນຄອບຄົວທຸກຍາກຫຼາຽ. ຂ້ຽຈຶ່ງໄປເປັນຄົນໃຊ້ໃຫ້ເຜຽງຕົງທີ່ຢູ່ນໍ່ ໆ ກັບບ້ານຂອງຂ້ຽ, ໄປຢູ່ນຳເຜຽງຕົງທຸກຍາກ, ມື້ໃດກໍ່ຖືກເຂົາເຕະຕີ, ກິນເຂົ້າກໍ່ບໍ່ອີ່ມ, ເຄື່ອງນຸ່ງກໍ່ບໍ່ມີ, ຂ້ຽອົດບໍ່ໄດ້, ຂ້ຽເລີຽໂຕນໄປເປັນອິດສະຫຼະ ເພື່ອຕີພວກເຜຽງຕົງຄືນ...

ເຮົາບໍ່ຮູ້ຈະອະທິບາຽແນວ ໃດໃຫ້ເດັກນ້ຽ ນີ້ເຂົ້າໃຈໄດ້ຄຳທີ່ວ່າ: ອິດສະຫຼະ ຂະນະນັ້ນດວງຕາທັງຄູ່ ຂອງເດັກຍິງຜູ້ນັ້ນແຈ້ງໃສຂຶ້ນຢ່າງບອກບໍ່ຖືກ, ເຮົາຮູ້ສຶກວ່າຄວາມເວົ້າຂອງເຮົາໄດ້ຖືກອົກຖືກໃຈເດັກຍິງຜູ້ນີ້.

— ເຈົ້າເຮັດຫຍັງໃຫ້ເຜຽງລີພວກເຮົາ?

— ເປັນຫຍັງເຂົາຕີເຈົ້າພີລຶກແທ້?

— ບໍ່ແມ່ນເຈົ້າບໍ່ຍອມເອົາຢາຝິ່ນໃຫ້ເຜຽງລີບໍ?

ເມື່ອຮູ້ວ່າເຮົາຮູ້ ພາສາລາວສູງ, ເດັກນ້ຽຊຸມນີ້ກໍ່ພາກັນຖາມຢ່າງລຽນຕິດ, ທັນໃດນັ້ນເດັກຍິງຜູ້ຢືນຕໍ່ໜ້າເຮົາ ກໍ່ແລ່ນອອກໄປ.

ບໍ່ເຫິງເທົ່າໃດກໍ່ເຫັນເຂົາກັບມາຈັບກະບວງນ້ຳທີ່ ເຮັດ

ດ້ວຍກະໂປະ ໝາກນ້ຳ, ເຂົາ ແລ່ນ ມາຕໍ່ໜ້າແລະຍົກ ຂຶ້ນ ໃສ່ປາກໃຫ້ເຮົາ. ເຮົາກືນກິນນ້ຳດ້ວຍຄວາມຫິວກະຫາຍ.

— ກິນອີກບໍ?

ເດັກຍິງຄຽຫຼັງ ໃຫ້ຫ່າງ ອອກ ຈາກ ເຣົາ, ແຕ່ ຄູ່ ຕາຂອງເຂົາຍັງຈັບຢູ່ກັບຕົວຂອງເຮົາ. ທັນໃດນັ້ນສຽງຮ້ອງ ຂອງ ເພຽ ເພຽລີກໍດັງແຈ້ວມາປານແກ້ວຫູຊິຂາດ.

— ອີ່ຂີ້ຂ້ານີ້ງ ໄປເຮັດຫຍັງ ຢູ່ພຸ້ນ, ວຽກຢູ່ພີ້ມຶງ ປະໄວ້ໃຫ້ໃຜ? ມຶງ! ມຶງມານີ້ກູຊິ່ໃຫ້ມຶງຮູ້!

ທົ່ວບໍລິເວນບ້ານຫ້ວງມຸ່ນໄດ້ນອນຈົມຢູ່ ໃນມ່ານມືດ. ມີແຕ່ເຮືອນເພຽລີເທົ່ານັ້ນທີ່ມີແສງສະຫວ່າງກວ່າໝູ່ ແລະ ມີສຽງໂອ້ລົມສຽງຫົວດັງກວ່າເຮືອນຫຼັງອື່ນໆ. ຮອດດຽວນີ້ ເຮົາ ຈິ່ງຮູ້ວ່າທະຫານຊຸມນີ້ນອນຄ້າງຄືນຢູ່ນີ້ພໍຄ່ຳມືດມັນກໍມາມັດເຮົາຕິດເສົາກາງບ້ານແໜ້ນກວ່າເກົ່າ.

ສາຍລົມໜາວພັດທົ່ງມາຢ່າງ ຮຸນແຮງ,ອາການເຈັບປວດຂອງບາດແຜຄວາມໜາວຈັດຂອງ ຮ່າງ ກາຍ ລົມ ທົບ ຄວາມຫິວໂຫຍໂຮຍແຮງເຮັດໃຫ້ເຮົາ ສະ ຫຼົບ ໄປ ເປັນ ເທື່ອໆ. ສຽງໝາຫອນໃນຍາມຄ່ຳຄືນ ອັນງຽບສະງັດເຮັດໃຫ້ເຮົາຮູ້ສຶກ ວ່າພວມຕົກຢູ່ໃນຜີປ່າຊ້າ. ເຫີງໆກໍເຫັນທະຫານສັດຕູ ອອກ ມາເຍືອງໄຟເບິ່ງເທື່ອໜຶ່ງ. ເຮົາຄິດຫາວິທີອອກຈາກ ກຳມື ຂອງ

ສັດຕູກໍ່ບໍ່ມີ, ເພາະວ່າທົ່ວທັງຕົວເຮົາໄດ້ຖືກມັດຈົນແໜ້ນ.

ເດິກເຂົ້າມາຊຸກໃຊ້, ບັກທະຫານສັດຕູ ທີ່ເອົາເຊືອກມາມັດຄໍເຮົາແບບກົກເສົາຕົ້ນອີກກໍ່ໄປນອນແລ້ວ ສຽງໂອ້ລົມແລະແສງໄຟຢູ່ເຮືອນ ເພງລີກໍ່ມອດ ທົ່ວຕົວເຮົາມືນ ເມົາເພາະຖືກມັດ. ເວລານີ້ສິ່ງທີ່ເປັນເພື່ອນເຮົາກໍ່ຄືຄວາມມືດ ແລະໝູ່ດາວທີ່ສ່ອງແສງລະຍິບລະຍັບເຕັມທ້ອງຟ້າ, ຄວາມໜາວກ້າວເຂົ້າມາຊຸກໃຊ້, ເຮົາຢາກຈະເອົາມືກອດເອິກກໍ່ເຮັດບໍ່ໄດ້. ເຮົາຄິດເຫັນເພື່ອນສະ ຫາຍເວລານີ້ຄົງຈະ ລໍຖ້າເຮົາກັບຄືນເພື່ອລາຍງານສະພາບການ, ເຮົາຮູ້ສຶກ ວ່າເຮົາພວມຕົກຢູ່ໂລກອື່ນ ເຮົາໄດ້ຢູ່ຫ່າງໄກ ທີ່ສຸດ ກັບເພື່ອນສະຫາຍ. ແຕ່ເຖິງເຮົາຈະຢູ່ ໃນໂລກອື່ນຈິດໃຈແນວຄິດແລະອຸດົມຄະຕິຂອງເຮົາຈະບໍ່ມີເວລາໃດປ່ຽນແປງ, ເຮົາຈະມີຊີວິດເພື່ອຕໍ່ສູ້.

ເວລານັ້ນບັງເອີນມີເງົາດຳ ໆ ນ້ອຍ ໆ ຄ່ຽງ ໆ ຍ່າງມາຕໍ່ໜ້າເຮົາ «ໝູ່ບໍ່» ເຮົາຄິດຜູ້ດຽວ, ທັນໃດເຮົາຕົ້ນຍຸບເມື່ອມີມືນ້ອຍ ໆ ເຢັນໆ ມາລູບໆ ຄ່ວໆ ສອງແຂນຂອງເຮົາ «ຄົນ ! ແມ່ນເດັກນ້ອຍມາແຕ່ໃສ, ມາກ້າອອກ ມາກາງຄ່ຳກາງຄືນແນວນີ້» ເຮົາຢາກຈະອອກປາກຖາມ, ແຕ່ຕ້ອງຢຸດນິ້ງຢູ່ເມື່ອສາຍເຊືອກຖືກເດັກນ້ອຍຜູ້ນີ້ເອົາມີດປາດ. ເຮົາກອດເດັກນ້ອຍຜູ້ນີ້ເຂົ້າແນບ ເອິກດ້ວຍ

ຄວາມຕື່ນຕັນໃຈ, ເຮົາບໍ່ຮູ້ຈະ ເຮັດຫຍັງ ເພາະຄວາມດີໃຈໄດ້ແລ່ນຂຶ້ນມາເຕັ່ມຊວ່ງເອິກຂອງເຮົາ.

— ໄປສາ! ຢ່າຢູ່ນີ້ເອົາຊື່ຂ້າເຈົ້າໄດ, ເຈົ້າຈື່ຂ້ອຍບໍ, ຂ້ອຍເອົານ້ຳມາໃຫ້ເຈົ້າກິນນັ້ນເດ. ເຂົາເວົ້າຄ້າຍກັບຊື່ນໃສ່ຫູ. ໂທ-ເອີຍຂ້ອຍບໍ່ຄິດເລີຍ ວ່າເດັກ ຍິງທີ່ໜ້າສິງສານ ຜູ້ນີ້ຈະມີຄວາມ ກ້າຫານແນວນີ້, ຂ້ອຍກັບລົງເພື່ອຫຼຽວເບິ່ງໃນໜ້າຂອງເຂົາໄດ້ຄັກ, ແຕ່ບໍ່ເຫັນຫຍັງ.

— ນ້ອງຊື່ວ່າແນວໃດ?

— ຂ້ອຍຊື່ປ້າ. ໄປສາ! ຈັກໜ້ອຍເອົາພໍ້ໄດ!

ເຮົາເໝືອນດັ່ງເດັກນ້ອຍຜູ້ໜຶ່ງທີ່ບອກກ່ຽວ. ເຮົາຄ່ອຍໆແລ່ນໄປໃນຄວາມມືດ. ເວລານີ້ເຮົາບໍ່ຄິດຫຍັງ, ນອກຈາກແຕ່ຄິດເປັນຫ່ວງເຖິງໂຊກຊາຕາກຳ ຂອງເຂົາ, ບໍ່ຮູ້ວ່າເມື່ອສັດຕູ ສືບຮູ້ຊີວິດຂອງປ້າຈະເປັນແນວໃດ, ຍິ່ງຄິດຄວາມວິຕົກກັງວົນ ແລະເປັນຫ່ວງຍິ່ງລົ້ນຫຼັ່ງໃນຫົວໃຈຂອງເຮົາ...

ຂ້ອຍຫຼຽວເບິ່ງ ໜ້ານັບດານັກຮົບ ທີ່ພວມສົ່ງ ແສງຕາ ມາຈ້ອງເບິ່ງຂ້ອຍ ຄ້າຍກັບພວມຕິດຕາມຟັງເບິ່ງ ເຫດການອັນໃດອັນໜຶ່ງຈະເກີດຂຶ້ນໃນເລື່ອງທີ່ຂ້ອຍເລົ່າໃຫ້ພວກເຂົາຟັງ.

— ເລື່ອງມັນເປັນແນວນັ້ນແຫຼະ.

ພວກເຂົາພາກັນຫາຍໃຈຍາວ, ທຸກຄົນຕ່າງກໍ່ສັນລະເສີນວ່າເດັກຍິງຄົນນັ້ນເກັ່ງກ້າແລະພິລະອາດຫານ.

— ຕໍ່ມາເລື່ອງລາວເປັນແນວໃດ.

— ແຕ່ນັ້ນມາກໍ່ບໍ່ໄດ້ພົບເຂົາອີກ ແລະ ກໍ່ບໍ່ຮູ້ຂ່າວຫຍັງຂອງປ້າ.

— ຜູ້ກອງໄປເຫັນເທື່ອນີ້ຍັງຈະຈື່ບໍ່ລະ ?.

— ກໍ່ຈັ່ງວ່ານີ້ແຫຼວ-ປີປາງແລ້ວເດ, ເບິ່ງຊົງລາວຄືຊິໃຫ່ຫຼາຍ.

ຂ້ອຍກໍາລັງວ່າຊິລຸກໜີ, ພໍດີມີນັກຮົບຜູ້ໜຶ່ງແລ່ນກະພຸບກະພາບມາ, ພ້ອມທັງຫາຍໃຈຫອບລາຍງານວ່າ:

— ລາຍງານຜູ້ກອງ ! ໜ່ວຍສາລະເວ ຂອງພວກເຮົາໄປພໍ້ຄົນຕາຍຜູ້ໜຶ່ງ ຢູ່ກາງປ່າແຕ່ພວກນ້ອງກວດເບິ່ງ ຄົນນັ້ນຍັງບໍ່ທັນໃຈຂາດ. ດຽວນີ້ພວກນ້ອງເອົາມານີ້ແລ້ວ.

— ຜູ້ໃຫຍ່ຫຼືຜູ້ນ້ອຍ ? ຂ້ອຍຖາມ.

— ຜູ້ຍິງ.

ຂ້ອຍຮີບຟ້າວລຸກຍ່າງນຳຫຼັງນັກຮົບຜູ້ນັ້ນໄປ ເມື່ອໄປຮອດນາງສາວຜູ້ໜຶ່ງອາຍຸປະມານ 17-18 ປີນອນຢຽດຢ່າງໄຮ້ສະຕິ. ໃບໜ້າກົມມົນ ແຕ່ຫາກ ຫຼ່າເຫຼືອງແລະຈ່ອຍຜອມຮິມສົບຫ່ຽວແຫ້ງ ສົ້ງເສື້ອ ຂາດສ້ອຍໝົດ, ການຫາຍໃຈອ່ອນ ທີ່ສຸດ, ຕີນມືເຢັນປານນ້ຳກ້ອນ. ຂ້ອຍຮີບ ຟ້າວແກ້ເສື້ອ ນວມຂອງ ຂ້ອຍອອກຫົ່ມໃຫ້ນາງ ແລະ ບອກໃຫ້ອ້າຍນ້ອງເອົາຜ່າຫົ່ມຈາກນັ້ນຂ້ອຍກໍ່

ສັ່ງໃຫ້ແພດລົງມືທຳການປະຖົມພະຍາບານ -ຂ້ອຍຄິດວ່ານາງສາວຜູ້ນີ້ຄົງຈະຕາຍຍ້ອນອຶດຫິວ ແລະທົນຕໍ່ຄວາມໜາວບໍ່ໄດ້, ເພາະວ່າຊອກຫາ ບາດແຜພຽງໜ້ອຍ ດຽວໃນຕົວຂອງ ເຂົາກໍ່ບໍ່ມີ.

ຂ້ອຍກໍ່ຄືອ້າຍນ້ອງທັງໝົດ ຕ່າງກໍ່ລໍຄອຍ ອາການ ປ່ຽນແປງຂອງນາງດ້ວຍຄວາມຮ້ອນໃຈ.

— ເປັນແນວໃດ? ຂ້ອຍຖາມແພດ:

— ໄຄແດ່ແລ້ວ, ຕົນໂຕອຸ່ນຄືນມາແດ່, ຫາຍໃຈກໍ່ໄດ້ກໍ່ດາເກົ່າແດ່...

— ແຕ່ຍັງມີຄວາມອາດສາມາດຈະ...

— ຈັ່ງວ່ານີ້ແລ້ວ, ຫຼາຍຊົ່ວໂມງແລ້ວ, ຄົນເຈັບຍັງບໍ່ທັນຮູ້ເນື່ອຄີງ, ກຳມະຈອນອ່ອນທີ່ສຸດ.

ໃນຂະນະທີ່ຂ້ອຍພວມລໍຖ້າຟັງເບິ່ງການລາຍງານຂອງອາການປ່ຽນແປງ ຂອງນາງສາວ ໃນບັ້ນຕໍ່ໄປ, ກໍ່ຄ້ອນພໍດີຮອດໂມງ ທີ່ຈະອອກ ເດີນທາງຕໍ່ໄປ ຍັງເປົ້າໝາຍ. ຂ້ອຍໄດ້ຈັດໃຫ້ອ້າຍນ້ອງໝູ່ໜຶ່ງ ຫາມນາງ ສາວຄືນ ສູ່ແນວຫຼັງ. ກ່ອນຈະຈາກກັນຂ້ອຍໄດ້ສັ່ງນຳສະຫາຍຫົວໜ້າໝູ່ວ່າ:

— ພວກ ສະຫາຍ ຈົ່ງຖືວຽກ ນີ້ຄືກັນກັບວຽກ ການສູ້ຣົບ, ເຖິງຈະເປັນແນວໃດກໍ່ຕ້ອງ ເອົານາງສາວຜູ້ນີ້ຮອດແນວຫຼັງ,

ສະຫາງເອົາໜັງສືນີ້ໃຫ້ສະຫາງຫົວໜ້າກອງພັນ, ບອກເພິ່ນອ້າງນ້ອງປອດໄພໝົດທຸກຄົນ.

ແຕ່ເວລາຈາກກັນຈົນຮອດເວລາຮອດເປົ້າໝາຍ, ຂ້ອຍບໍ່ມີເວລາໃດທີ່ຈະໄດ້ຄິດຄົ້ນ ຫາເຫດຜົນເປັນຫຍັງ ນາງສາວຜູ້ນີ້ຈຶ່ງຕາຍຢູ່ກາງປ່າ. ເພາະຂ້ອຍຍັງປະເຊີນໜ້າກັບສະພາບ ການທີ່ດຸເດືອດ.

ພວກຂ້ອຍ ໄດ້ປະຕິບັດຕາມ ແຜນການຂອງ ກອງບັນຊາການຢ່າງ ໄດ້ຮັບຜົນດີ; ກອງຮ້ອຍ ຂອງຂ້ອຍ ໄດ້ມາປົດປ່ອຍ ບ້ານຫ້ວຍມຸນໄດ້ຫຼາຍມື້ແລ້ວກໍ່ຍັງບໍ່ຮູ້ຂ່າວຫຍັງຈາກປະຊາຊົນ, ເຂົາເຈົ້າເຫັນອ້າຍນ້ອງເຮົາກໍ່ພາກັນແຕກເຂົ້າປ່າໝົດ, ລູກຂອງຜົວເຂົາເຈົ້າສ່ວນຫຼວງຫຼາຍ ໄດ້ຖືກບັງຄັບ ແລະ ເກນໄປເປັນທະຫານ ໃນກຳລັງ ພິເສດ «ວັງປາວ», ປະຊາຊົນໄດ້ມີຊີວິດຢູ່ໃນກາງປ່າກາງດົງຢ່າງແສນທໍລະມານ. ຕໍ່ໜ້າສະພາບການນັ້ນຂ້ອຍໄດ້ ຈັດວາງກຳລັງ, ສ່ວນໜຶ່ງອອກໄປຊອກຫາໂຄສະນາໃຫ້ປະຊາຊົນຄືນມາຢູ່ບ້ານ, ສ່ວນໜຶ່ງນັ້ງນມັດ ປັດກວາດເຮືອນ ຊານ ບ້ານຊ່ອງ, ລ້ຽງໝູ ຕັດຫຍ້າ ນ້າຊ້ອມ ແຊມ ບ້ານ

ເຮືອນ ແລະ ປົກປັກຮັກສາວັດຖຸສິ່ງຂອງຂອງປະຊາຊົນ.

ຫຼາຽມື້ຕໍ່ມາມີພວກແມ່ຍິງຈຳນວນໜຶ່ງເຂົ້າ ມາ ບ້ານ, ແຕ່ປະກົດວ່າພວກເຂົາເຈົ້າຍັງຢ້ານພວກເຮົາຢູ່, ສວຽ ໂອ ກາດເວລານີ້, ອ້າຽນ້ອງເຮົາໄດ້ໄປເຮັດວຽກ ຊ່ວຽ ແລະ ໂຄ ສະ ນາ ຊັກຊວນໃຫ້ເຂົາເຈົ້າຄືນມາບ້ານ. ເມື່ອປະຊາ ຊົນ ເຫັນ ອ້າຽ ນ້ອງເຮົາເຮັດດີ, ບໍ່ຄືຄຳໂຄສະນາຫຼອກລວງຂອງສັດຕູ,ກໍ່ຄ່ຽ ໆ ທະຍຽກັນມາຢູ່ບ້ານ. ທຳມາຫາກິນຢ່າງສະດວກສະບາຽ ໃນ ສັງຄົມອັນໃໝ່ຂອງພວກເຮົາ.

ສ່ວນຂ້ຽ, ຂ້ຽກໍ່ສືບຂ່າວຫາປ້າຜູ້ທີ່ໄດ້ຊ່ວຽກູ້ເອົາຊີວິດຂອງຂ້ຽ, ແຕ່ກໍ່ບໍ່ເຫັນຮ່ອງຮຽຫຽັງຫຼືວ່າໝໍ່ເຜຽລີໄລ່ພວກນາງປົບໄປນຳສັດຕູແລ້ວບໍ? ຂ້ຽຢາກພົບເຂົາເພື່ອຈະໄດ້ຕອບບຸນແທນຄຸນອັນປະເສີດເລີດລ້ຳຂອງເຂົາທີ່ມີຕໍ່ຂ້ຽ.

ມື້ໜຶ່ງຂ້ຽ ເຂົ້າໄປ ຫຼິ້ນນຳພໍ່ເຖົ້າລີຊົງ ເປັນຜູ້ ທຳອິດທີ່ໄດ້ເຂົ້າຢູ່ບ້ານ, ປີນີ້ອາຍຸພໍ່ເກືອບ 60 ປີແລ້ວ, ພໍ່ຢູ່ນຳລູກຊາຽແລະລູກໃພ້, ລູກຊາຽ ຂອງພໍ່ ໄດ້ຖືກພວກວັງປາວ ບັງຄັບໄປເປັນທະຫານໄດ້ສອງປີ, ພາຽຫຼັງປົດປ່ຽ, ພໍ່ເປັນຜູ້ ທຳອິດ ທີ່ໄດ້ອິນຂວາຽຊັກຊວນໃຫ້ລູກໂຕນ ຈາກຄຸ້ມແຖວຂອງສັດຕູ, ມາຢູ່ນຳຄອບຄົວ ຢູ່ນຳອຳນາດ ການປົກຄອງ ໃໝ່ ເພື່ອມາຫາກິນລ້ຽງຊີວິດ.

ພໍ່ ແລະ ລູກຊາຍ ໄດ້ຕ້ອນຮັບ ຂ້ອຍຢ່າງ ຍິ້ມແຍ້ມແຈ່ມ ໃສ ແລະ ພໍ່ເວົ້າວ່າ:

— ຄັນບໍ່ມີພວກລູກ, ຄອບຄົວພໍ່ຊິໄດ້ນັ່ງ ຢູ່ເຮືອນຄົບໜ້າ ຄົບຕາແນວນີ້ບໍ່? ພວກລູກດີຫຼາຍພວກລູກດີຫຼາຍ, ບັງເອີນໃນ ໜ້າຂອງພໍ່ເຄັ່ງຂຶ້ນໃນເວລາພວກສັດຕູຍັງຢູ່, ຢູ່ໃນເຮືອນໄທ ບ້ານ ລາວສູງ ພວກເຮົາ ຊິມີກອງໄຟອົບອຸ່ນ ແນວນີ້ບໍ່? ພໍ່ຍັງ ຄິດຢ້ານແຕ່ພວກມັນຊິມາອີກ.

— ບໍ່ເປັນຫຍັງດອກພໍ່! ພວກລູກຈະຢູ່ປະຈຳຊົນຊາດລາວ ສູງບ້ານຫ້ອງມຸນເຮົາຕໍ່ໄປ. ພວກສັດຕູບໍ່ມີຫວັງຈະໄດ້ມາຢຽບ ດິນດອນນີ້ອີກດອກ.

— ເອີຄັນເປັນແນວນັ້ນກໍ່ຍັງໄດແດ່.

ພໍ່ກືນນ້ຳ ລາຍລົງຄໍ ກ້ານຄໍອັນຫ່ຽວແຫ້ງ ເຕັ້ນໄປແຕ່ເສັ້ນ ເອັນຂອງພໍ່ແອບເຂົ້າ, ແສງຕາຂອງພໍ່ຈັບຢູ່ກັບແປວໄຟ ທີ່ ເຕັ້ນວິບຫຼີ່ຢູ່ໃນເຕົາ. ໃບໜ້າຂອງພໍ່ຫ່ຽວແຫ້ງ, ພຽງແຕ່ໃບ ໜ້າ ກໍ່ພໍເຂົ້າໃຈວ່າ ພໍ່ໄດ້ຜ່ານຄວາມລະທົມຂົມຂື່ນ ມາແລ້ວ ຢ່າງມາກມາຍກ່າຍກອງພໍ່ເວົ້າຕໍ່:

— ແຕ່ກ່ອນພວກພໍ່ມີຊີວິດຢູ່ ບໍ່ຕ່າງຫຍັງກັບຢູ່ໃນນາລົກ. ແຕ່ພວກພໍ່ ກໍ່ບໍ່ຮູ້ຈະເຮັດແນວໃດ ຈຳເປັນພໍ່ຢູ່ໄປຕາມ ເວນ ຕາມກຳໜົດບ້ານທີ່ມີແຕ່ພໍ່ເຖົ້າຍິງກັບນາງປ້າຫັ້ນແລ້ວທີ່ອົດ ບໍ່ໄດ້ທີ່ເລີງໂຕນເຂົ້າປ່າ.

ເມື່ອເວົ້າເຖິງຊື່ປ້າບາງສາວນ້ອຍທີ່ຂ້ອຍບໍ່ອາດຈະຫຼົງລືມໄດ້.
ໃຈຂ້ອຍປະກົດວ່າເຕັ້ນແຮງເອົາແທ້ໆ. ຂ້ອຍຮີບຟ້າວຖາມ:

— ເປັນຫຍັງເຂົາເຈົ້າຈິ່ງໂຕນໄປຢູ່ປ່າ. ພໍ່ເຖົ້າລີຫຼຽວເບິ່ງ
ຂ້ອຍແວບໜຶ່ງແລ້ວຕອບວ່າ:

— ກໍ່ຄືລູກຮູ້, ອີປ້າໄປຢູ່ເປັນຄົນໃຊ້ໃນເຮືອນ ເພຍລີໝົດ
ກຳນົດຫ້າປີແລ້ວ, ເພຍລີຊ້ຳພັດບັງຄັບໃຫ້ລາວ ໄປເປັນເມຍ
ນ້ອຍ. ແຕ່ພໍ່ເຖົ້າຍົງ ແລະ ນາງປ້າບໍ່ຍອມ, ເພຍລີໃຫ້ເວລາພໍ່
ເຖົ້າຍົງຫົກເດືອນ, ເພື່ອຄຶດ, ຖ້າກາງກຳນົດຫັ້ນແລ້ວ, ໄດ້ບໍ່ໄດ້
ກໍ່ຈະເອົາເມືອ, ເຫັນວ່າຢູ່ບໍ່ໄດ້ອີກ ສອງປີ ພໍ່ລູກເຂົາເຈົ້າກໍ່ພາ
ກັນໂຕນໜີ.

— ໂຕນໄປຢູ່ທາງໃດຂ້ອຍຟ້າວຖາມ:

— ພໍ່ກໍ່ບໍ່ຮູ້, ແຕ່ຄືໄດ້ຂ່າວວ່າ ສອງພໍ່ລູກ ໄດ້ຖືກທະ ຫານ
ສັດຕູຂ້າຖິ້ມຢູ່ກາງປ່າແລ້ວ. ເມື່ອ ໄດ້ຍິນຄຳນີ້ຫົວ ໃຈຂ້ອຍປະ
ກົດວ່າເຊົາເຕັ້ນຂ້ອຍຮູ້ສຶກສະອື້ນ ໃຈເໝືອນດັ່ງມີໃຜຄົນໜຶ່ງມາ
ບີບຄໍຂ້ອຍ, ຂ້ອຍຫາຍໃຈເກືອບບໍ່ອອກ. ຂ້ອຍບໍ່ຄຶດເລີຍວ່າວິຖີທາງ
ແຫ່ງຊີວິດຂອງຄົນຈະເຕັມໄປແຕ່ອຸປະສັກຄືແນວນີ້. ເປັນອັນ
ວ່າຄວາມ ຫວັງ ຂອງຂ້ອຍທີ່ຈະໄດ້ພົບເຫັນປ້າ ກໍ່ສະລາຍຫາຍ
ສູນໄປ, ຂ້ອຍຮູ້ສຶກ ເສົ້າສະຫຼົດເປັນຢ່າງຍິ່ງ, ຄວາມແຄ້ນໄດ້ລຸກ
ເປັນ ແປວໃນຫົວໃຈ ຂອງຂ້ອຍ, ຂ້ອຍຈະຂ້າສັດຕູ ໃຫ້ຫຼາຍເພື່ອ

ຊາດແລະເພື່ອປ້າ, ເພື່ອແກ້ແຄ້ນແທນ ປະຊາຊົນ ແລະ ປ້າ, ເອົາລະຂ້ຽຈະຂໍຈົດຈຳຊື່ສຽງ ແລະ ຄຸນຄວາມດີຂອງ ເຂົາທີ່ມີຕໍ່ຂ້ຽໄປຕະຫຼອດຊີວິດ, ຮູບພາບຂອງ ເຂົາຈະຝັງໄວ້ໃນ ດວງໃຈຂອງຂ້ຽຕະຫຼອດໄປ.

ຫຼັງຈາກ ຂັ້ນເທິງ ສົ່ງພະນັກ ງານຂົນ ຂວງນາ ປະຈຳບ້ານ, ຕໍ່ມາອີກ ອາທິດໜຶ່ງ, ກອງຮ້ຽຂ້ຽ ໄດ້ຮັບຄຳສັ່ງ ໃຫ້ເຄື່ອນທີ່ໄປສູ້ຮົບບ່ອນໃໝ່ ແລະ ຂ້ຽກໍ່ໄດ້ປະຕິບັດຕາມຄຳສັ່ງຂອງ ຂັ້ນເທິງ, ຈາກໝູ່ບ້ານແຫ່ງນີ້ໄປດ້ວຽ ຄວາມຄິດເຖິງ.

*

* *

ລະດູແລ້ງຂອງປີຕໍ່ມາ, ຈັກກະພັດອາເມລິກາແລະພວກວັງປາວ ຊ້ຳພັດສົ່ງກຳລັງທະຫານມາບຸກໂຈມຕີເຂົ້າບໍລິເວນຜາດີ່ໂດງໝາງ ຈະຍຶດເອົາແຫ່ງນີ້ຄືນ. ເປັນອັນວ່າກອງຮ້ຽຂອງຂ້ຽໄດ້ກັບຄືນມາສູ່ອ້ອມແຂນ ຂອງບ້ານຫ້ວຽມຸນອີກ.

ຂ້ຽກັບມາຮອດ ບ້ານຫ້ວຽມຸນ ໃນຕອນທ່ຽງຂອງວັນໜຶ່ງ, ພາຽຫຼັງ ທີ່ສັດຕູໄດ້ສົ່ງຍົນ ມາຖິ້ມ ລະເບີດ ເຜົາຜານ ໝູ່ບ້ານແຫ່ງນີ້ຈົນກາຽເປັນ ເຖົ່າຖານ. ຄວນໝີ້, ຄວນລະເບີດ ພວນກຸ້ມກິ້ວທົ່ວບໍລິເວນບ້ານ. ຂ້ຽຄ່ຽງຍ່າງເຂົ້າໄປໃນບ້ານຮ້າງດ້ວຽ

ຄວາມເສົ້າໂສກ, ຄັວນໄຟ ທີ່ໄໝ້ເປັນຍ່ອນໆ ປິວຂຶ້ນທ້ອງຟ້າ, ບັງເອີນ ຂ້ຽພັດເຫັນ ເສື້ອນວມຜືນໜຶ່ງ ທີ່ຖືກໄຟໄໝ້ໄປເປັນບ່ອນໆ, ຂ້ຽຈັບຂຶ້ນໄປເບິ່ງຫົວໃຈຂ້ຽຫາງວຸບບາດໜຶ່ງເໝືອນ ຕົກລົງຈາກເຫວເລິກເມື່ອຫຼຽວເຫັນຕົວອັກສອນທີ່ຂ້ຽໄດ້ຂຽນ ຊື່ຂອງຂ້ຽເອງໃສ່ຄໍເສື້ອໄວ້. ເສື້ອນວມຜືນນີ້ແມ່ນຜືນທີ່ຂ້ຽໄດ້ ເອົາຫົ່ມໃຫ້ບາງໆສາວຜູ້ ຖືກເຄາະຮ້າຽຢູ່ກາງປ່າໃນ ປີກາຽນີ້.

ດຽວນີ້ເຈົ້າຂອງເສື້ອຜືນນີ້ຢູ່ໃສ? ເຂົາອາດຈະເສັຽຊີວິດໃນບັ້ນ ຖືກລະເບີດ ໃນຊຸດນີ້ ກໍ່ອາດຈະເປັນໄດ້, ຕະຫຼອດໜຶ່ງປີກ່ວາ ຂ້ຽບໍ່ມີ ໂອກາດ ຈະພົບເຂົາ ແລະ ກໍ່ບໍ່ມີຮູ້ຂ່າວຫຍັງ ຈາກເຂົາ, ຂ້ຽຮູ້ແຕ່ວ່າຫຼັງຈາກເຂົາໄປປົວໄລຍະໜຶ່ງເຂົາກໍ່ມີຊີວິດຄືນມາ.

— ຂ້ຽບໍ່ຄິດເລີຽວ່າ ຄວາມເຈັບປ່ວຽຈະ ມາສູ່ຂ້ຽຢ່າງບັງ ເອີນດັ່ງນີ້. ຂ້ຽກັດແຂ້ວຍົກເສື້ອຂຶ້ນມາເບິ່ງ. ໃນເວລານັ້ນນັກ ຮົບຜູ້ໜຶ່ງມາບອກຂ້ຽ.

— ລາຽງານຜູ້ກອງ! ມີພະນັກງານຜູ້ຍິງຜູ້ໜຶ່ງ ບອກໃຫ້ ກອງຮ້ຽພວກເຮົາ ເຄື່ອນທັບໜີຈາກບ້ານ. ຂ້ຽຫັງຟັງຫຼຽວ ເບິ່ງພະນັກງານ ເພດຍິງຊົບຊາດ ລາວສູງທີ່ພວມ ຄືບໜ້າ ເຂົ້າມາຫາພວກຂ້ຽ.

— ເອີ, ນ້ອງໄປບອກໃຫ້ ໝົດກອງຮ້ຽ ເຄື່ອນທັບໄປພັກຢູ່ ແຄມປ່າແປະ ລົບນ້ຳເດີ.

ເມື່ອຫຼຽວເຫັນຂ້ອຍ ສະຫາຍ ພະນັກງານ ຜູ້ນັ້ນ ກໍ່ເວົ້າຂຶ້ນ ໂລດ:

— ຂໍສະເໜີໃຫ້ພວກອ້າຍອອກຈາກບ້ານດ່ວນ, ບາງເທື່ອ ຍິນຈະກັບມາອີກ.

— ຂອບໃຈຫຼາຍໆ, ຂ້ອຍໄດ້ສັ່ງແລ້ວ.

ເວົ້າແລ້ວຂ້ອຍກໍ່ຫຼຽວໄປອ້ອມ ແອ້ມ ບໍລິ ເວນທີ່ດຶກໄພໄໝ້. ພໍງວາກກັບມາ ກໍ່ເຫັນນາງສາວ ຜູ້ນີ້ຄື້ນແສງ ຕາຢູ່ກັບເສື້ອ ນວນໃນມືຂອງຂ້ອຍ. ຂ້ອຍຫຼຽວເບິ່ງ ເຂົາແວບ ໜຶ່ງແລ້ວ ກໍ່ຍ່າງ ໜີໄປ.

— ອ້າຍ! ຢ່າຟ້າວໄປ! ໃຫ້ນ້ອງ ຂໍເສື້ອນີ້ຄືນເທາະ, ອ້າຍ ເກັບໄດ້ຢູ່ໃສ?

ຂ້ອຍຫຼຽວເບິ່ງໜ້ານາງສາວຜູ້ນີ້ຢ່າງບໍ່ພັບຕາ, «ແມ່ນ, ແມ່ນ ແລ້ວ, ແມ່ນຜູ້ທີ່ເຮົາເຫັນຫວ່າງກ່ອນນີ້»ຂ້ອຍຄິດຜູ້ດຽວຂ້ອຍແກ້ງ ຖາມເຂົາວ່າ:

— ນ້ອງໄດ້ເສື້ອຜືນນີ້ຢູ່ໃສ?ອັນນີ້ແມ່ນເສື້ອຜູ້ຊາຍໃດ!

ນາງຢືນຊຶງຄາວໜຶ່ງໃນລັກ ສະນະຄຶ້ນຄິດ, ແຕ່ແລ້ວນາງ ກໍ່ພັບຕາຍິ້ມພ້ອມທັງຕອບ:

— ເສື້ອຂອງນ້ອງ! ການປະຕິວັດເອົາໃຫ້ນ້ອງ.

ລັກສະນະຕອບຂອງ ນາງກໍ່ທຳມະດາ, ເມື່ອຂ້ອຍເຫັນນາງ

ເວົ້າ ພາສາລາວລຸ່ມ ບໍ່ຄ່ຽແຈ້ງຈັດ, ຂ້ຽເລີຽ ເວົ້າເປັນ ພາສາ ລາວ ສູງ.

– ບໍ່ແມ່ນນ້ອງບໍທີ່ນອນເຈັບຢູ່ກາງປ່າປີກາຍນີ້.

ນາງຢືນຄິດແປກປະຫຼາດເບິ່ງຂ້ຽ ແວບໜຶ່ງຄ້າຍກັບຢາກ ຊອກຫາສິ່ງໃດສິ່ງໜຶ່ງທີ່ພົບໃນໃບໜ້າຂອງຂ້ຽ.

ເຮັດແນວໃດອ້າຍຈຶ່ງຮູ້.

– ຄັນຖ້າອ້າຍຈື່ບໍ່ຜິດ, ຄິງຈະ ແມ່ນນ້ອງ ນີ້ທີ່ພວກອ້າຍ ໄດ້ໄປພໍ້ຢູ່ກາງປ່າ.

– ເອື້ອຍນີ້ ກໍ່ແມ່ນເພິ່ນທັ້ນລະບໍ່ ແກ້ອອກຫັ່ນໃຫ້ເຈົ້າ ນັກຮົບຜູ້ໄປນຳຂ້ຽເວົ້າຊອນຂຶ້ນທັນທີ.

ທັນໃດ ໃບໜ້າ ຂອງນາງ ແຈ້ງໃສ ຂຶ້ນຢ່າງ ບອກ ບໍ່ຖືກ, ຄວາມດີໃຈໄດ້ພົ້ນຂຶ້ນ ໃນໃບໜ້າ ຂອງເຂົາຢ່າງເດັ່ນຊັດ, ເຂົາ ຫຼຽບເອົ້ານ່ຽງຂ້ຽ, ຮີມສົບຕີງຍຸບໆເໝືອນຈະເວົ້າຫຍັງ. ແຕ່ຂ້ຽ, ຂ້ຽເຂົ້າໃຈໃນຄວາມນຶກຄິດຂອງນາງແລ້ວ, ຂ້ຽເລີ່ມຖາມເຖິງ ສາຍເຫດທີ່ພາເຂົາໄປຕາຍຢູ່ກາງປ່າ, ເມື່ອໄດ້ຍິນຄຳຖາມ, ໃບ ໜ້ານາງເຄັ່ງຂຶມ, ເວົ້າຢ່າງຊ້າໆ ເໝືອນເນັ້ນໜັກແຕ່ລະຄຳ ເວົ້າ:

– ນ້ອງ ແລະ ພໍ່ຫຼົງທາງໃນປ່າເຈັດນີ້, ຄັນເວົ້າວ່າຫຼົງກໍ່ ບໍ່ແມ່ນ, ທີ່ແທ້, ນ້ອງບໍ່ຮູ້ວ່າຈະໄປທາງໃດນ້ອງ ແລະ ພໍ່ຄື

ເຂົ້າໄດ້ຫຼາຍປີ, ມີແຕ່ກິນມັນ ແລະ ໝາກໄມ້ຕາງເຂົ້າ, ໃນທີ່ສຸດ ຊອກຫາມັນ ແລະ ໝາກໄມ້ຊິກິນກໍບໍ່ມີ, ຄືອ້າງຮູ້ແຖບນັ້ນແມ່ນບໍ່ມີຫຍັງພໍ່ຊິກິນໄດ້. ຍ້ອນອຶດຫິວໂພດພໍ່ນ້ອງກໍ່ເລີ່ງເຈັບ ແລະ ເສຍຊີວິດ ຢູ່ກາງປ່າ. ນາງສາວກືນຄວາມແຄ້ນ ລົງຄໍ. ກ່ອນພໍ່ນ້ອງຈະສິ້ນໃຈໄປເພິ່ນໄດ້ສັ່ງໄວ້ວ່າ:

«ເຖິງຊິເປັນ ແນວໃດ ພໍ່ຂໍໃຫ້ເຈົ້າ ຢ່າໄດ້ຄືນເມືອບ້ານ, ເຈົ້າຈົ່ງໄປ, ໄປ, ໄປແລ້ວຈະພົ້ນ» ພໍ່ຂອງນ້ອງເວົ້າໄດ້ແຕ່ເທົ່ານັ້ນເພິ່ນກໍ່ສິ້ນຊີວິດໄປ. ນ້ອງຮ້ອງໄຫ້ຢູ່ກາງປ່າດ້ວຍຄວາມເຈັບປວດ, ເວລານັ້ນ ນ້ອງປຽບຄືຄົນ ບໍ່ມີວິນຍານ, ນ້ອງຄິດ ຢາກຄືນເມືອບ້ານ, ແຕ່ຄິດເຫັນຄຳສັ່ງລາຂອງພໍ່, ແລະອີກອັນໜຶ່ງຈະຄືນໄປເຮັດຫຍັງ ຈຳເປັນນ້ອງຟັງຄວາມພໍ່ ເດີນໄປຕາມປ່າຜູ້ດຽວໂດຍບໍ່ມີເປົ້າໝາຍ, ຫຼັງຈາກພໍ່ເສຍແລ້ວ, ນ້ອງບໍ່ຮູ້ຈະຢູ່ຈະກິນແນວໃດ. ຄວາມຈິງບໍ່ມີແນວຊິກິນດອກ, ມີແຕ່ໄປຕາມປ່າ, ຄ່ຳໃສນອນຫັ້ນ, ນອນກໍ່ບໍ່ມີຜ້າຫົ່ມ, ໜາວສັ່ນກັບໆ, ໃນທີ່ສຸດ ນ້ອງກໍ່ ລົ້ມເຈັບ, ນອນທົນໜາວ ຢູ່ຫັ້ນ, ນອນ, ນອນ ແລະ ນອນຈົນລຸກບໍ່ໄດ້ ແລະ ນ້ອງກໍ່ໝົດສະຕິໄປ.

ອ້ຍເອົາໃຈໃສ່ຟັງນາງເລົ່າຢ່າງຕັ້ງໃຈ ໂດຍບໍ່ປະໃຫ້ລອດເຫຼືອໄປພໍຄຳ. ຄຳເວົ້າຂອງນາງເຮັດໃຫ້ອ້ຍສົງສານເຂົາເປັນທີ່ສຸດອ້ຍຍັງບໍ່ທັນຖາມຫຍັງນາງເລົ່າຕໍ່ອີກວ່າ:

— ທັງໝົດນັ້ນກໍ່ຍ້ອນທ້າວເພຽລີຫັ້ນແລ້ວ, ອ້າງຄືຈະບໍ່ຮູ້ດອກບໍ່, ທ້າວເພຽລີນັ້ນແມ່ນເຈົ້າກິກຢູ່ໃນບ້ານນີ້, ຫຼັງຈາກນ້ອງໄປເປັນຂ້ອຍ ມັນຈົບກ່ານິດ, ມັນກໍ່ບັງຄັບ ໃຫ້ນ້ອງໄປເປັນເມຍນ້ອຍຂອງມັນ, ແຕ່ນ້ອງ ແລະ ພໍ່ບໍ່ຍອມແລ້ວກໍ່ພາກັນໜີເຂົ້າປ່າ.ເລື່ອງຂອງມັນເປັນແນວນີ້ແລະ,ໃຫ້ນ້ອງຂໍເຊື້ອນຄືນເທາະ, ນ້ອງຈະບໍ່ລືມບຸນຄຸນຂອງພວກອ້າງ ແລະ ຂອງການປະຕິວັດ.

ຄຳເວົ້າຂອງນາງໃນເທື່ອນີ້ ເໝືອນມີກຳລັງແຮງ ປານໄຟຟ້າຈັບ, ໄດ້ເຮັດໃຫ້ເສັ້ນ ປະສາດ ທຸກພາກສ່ວນ ໃນຮ່າງກາງຂອງຂ້ອຍ ຢຸດເຄື່ອນໄຫວ, ຂ້ອຍຫຼຽວເບິ່ງເຂົາຢ່າງ ຫຼົງຕົວເໝືອນກັບວ່າຂ້ອຍພວມຈົມຢູ່ໃນລາງຝັນດີ. ຂ້ອຍຫຼົງຮ້ອງອອກມາວ່າ:

— ປ້າ, ແມ່ນນ້ອງບໍ່ປ້າ, ອ້າງຄິດວ່ານ້ອງເສຽຊີວິດແລ້ວ, ນາງສາວແປກປະຫຼາດ,ຫຼຽວເບິ່ງຂ້ອຍຢ່າງບໍ່ພັບຕາເພື່ອຊອກຫາຮ່ອງຮອຍແຫ່ງຄວາມຫຼັງ, ແຕ່ເຂົາບໍ່ຈື່ຂ້ອຍ ໄດ້ເພາະວ່າຂ້ອຍເຖົ້າແກ່ຫຼາຍ ແລະ ເຕັມໄປດ້ວຍ ຮອຍແປ້ວ. ຂ້ອຍຮູ້ສຶກດີໃຈຢ່າງບອກບໍ່ຖືກ, ເວລານີ້ ຂ້ອຍພວມຢືນຢູ່ຕໍ່ໜ້າ ປ້າເດັກຍິງ ທີ່ຂ້ອຍບໍ່ອາດຈະຫຼົງລືມໄດ້ໃນ ຊີວິດ, ຂ້ອຍບໍ່ຮູ້ຈະເລືອກເອົາ ຄວາມເວົ້າອັນໃດມາເວົ້າຈຶ່ງສະສົມກັບຄວາມດີໃຈຂອງຂ້ອຍ.

ບໍ່ພໍເທົ່າໃດປີ, ເດັກຍິງທີ່ເປິະເປື້ອນແລະຫຼ້າຫຼັງໄດ້ກາງເປັນ ດອກໄມ້ ທີ່ງົດງາມ, ດອກໄມ້ທີ່ເຕີບໃຫຍ່: ໃຕ້ແສງສະຫວ່າງອັນອົບອຸ່ນຂອງການປະຕິວັດ.

— ປ້ານ້ອງ! ນ້ອງຈື່ອ້າຍບໍ່,? ນ້ອງຈື່ບໍ່ນ້ອງໄດ້ຕັດເຊືອກໃຫ້ໃຜ. ໂອ... ຫຼາຍປີແລ້ວນ້ອງຄືຈະບໍ່ຈື່ໄດ້.

— ເອີ... ນ້ອງຈື່ ແລ້ວ-ນາງ ຮ້ອງ ອອກມາ-ແມ່ນ ອ້າຍແທ້ຫວະທີ່ຖືກສັດຕູຈັບມາບ້ານນີ້, ແມ່ນອ້າຍແທ້ຫວະ?

— ແມ່ນແທ້ແມ່ນອ້າຍນີ້. ແລ້ວ

ຂ້ອຍຮ້ອງອອກມາດ້ວຍຄວາມສຸກ, ຂ້ອຍເກືອບຫຼົງກອດເຂົາຄືໃນເວລາ ທີ່ຂ້ອຍຈະຈາກເຂົາຫວ່າງເຂົາມາຕັດເຊືອກໃຫ້ຂ້ອຍ. ປະກົດວ່າຄວາມສຸກໃນໂລກນີ້ໄດ້ມາຮ່ວມຢູ່ນຳຂ້ອຍໝົດ. ສອງຄົນພວກຂ້ອຍຍ່າງອອກຈາກບ້ານຮ່າງຕາມຫຼັງແຖວທະຫານ.

ຂ້ອຍຖາມເຂົາ ເພາະເຫດໃດ ເຂົາຈຶ່ງ ກ້າຫານ ອອກມາຕັດເຊືອກໃຫ້ຂ້ອຍຫວ່າງກ່ອນນີ້ຫ້າປີ, ເຂົາເວົ້າວ່ານັ້ນກໍ່ຍ້ອນເຂົາມີຄວາມສິງສານພະນັກງານ ອິດສະຫຼະ, ເພາະວ່າ ໃນສະໄໝກ່ອນ ມີກອງທະຫານ ອິດສະຫຼະກອງໜຶ່ງ ຜ່ານມາໃນບ້ານນີ້ແລະເຄີຍໄດ້ຊ່ວຍເຫຼືອເຂົາພົ້ນຈາກໄພອັນຕະລາຍ. ໃນເວລານັ້ນ ເພຍເພຍລິພວມເອົາໄມ້ຄ້ອນ ຮ່ຳລົງໃສ່ຮ່າງ ຄີງຂອງເຂົາຢ່າງບ່ອງບ້າ, ຕົນຕົວຂອງເຂົາອາບໄປດ້ວຍເລືອດ, ຂະນະນັ້ນ

ນີອ້າງນ້ອງຂອງເຮົາໄປພໍ້ ແລະໄດ້ຍາດເອົານາງອອກຈາກຫ່າ
ໄມ້ຄ້ອນອັນປ່າເຖື່ອນຂອງເຜງເຜງລີ ແລະ ໄດ້ທຳການປິ່ນປົວ
ໃຫ້ນາງ.ດັ່ງນັ້ນເມື່ອເວລານີ້ອ້າຍຖືກຈັບ,ຮູບພາບຂອງພະນັກ
ງານອີດສະຫຼະກໍ່ໄດ້ປະກົດ ໃນຄວາມຊົງຈຳ ຂອງ ນາງ. ສິ່ງ
ເຫຼົ່ານີ້ເອງທີ່ຊຸກດັນໃຫ້ນາງ ຕັດສິນໃຈອອກມາຕັດເຊືອກໃຫ້
ອ້າຍ.

ໃນຊີວິດ ຂອງອ້າຍ ເຄີຍຜ່ານ ຄວາມສຸກ ມາບໍ່ໜ້ອຍ, ແຕ່ບໍ່ມີ
ເທື່ອໃດທີ່ອ້າຍມີຄວາມສຸກ ແລະ ຄວາມດີໃຈຄືເທື່ອນີ້ຮູບພາບ
ຂອງນາງ ຈະຝັງໄວ້ໃນດວງໃຈຂອງອ້າຍຕະຫຼອດໄປ. ຊື່ປ້າບໍ່
ພຽງ ແຕ່ແມ່ນຊື່ທີ່ປະຊາຊົນ ໃນແຖບຜາດີໄຜງກໍ່ຮູ້,ແຕ່ຍັງມີ
ຄວາມໝາຍຫຼາຍຢ່າງ ສຳລັບຊີວິດ ຂອງ ອ້າຍ, ປ້າຍັງມີຄວາມ
ໝາຍອີກວ່າ: «ດອກໄມ້ປ່າ» .

ສ.ບ 24 - 9 - 71

# ກັບສາກໄວ້ເປັນທີ່ລະນຶກ

ໂດຍ: ບົວຮອງ

ກ່ອນໜ້ານີ້ ສອງປີ ກອງພັນ ພວກເຮົາ ປະຈຳຢູ່ຄັງໄຂ, ຫຼັງຈາກການເຝິກແອບ ເປັນເວລາ ສາມເດືອນ ແລ້ວກອງພັນ ພວກເຮົາໄດ້ຮັບຄຳສັ່ງໄປສູ້ຮົບ, ເຮົາຊຶ່ງແມ່ນພະນັກງານອົບຮົມ, ເຮົາໄດ້ຢູ່ປະຈຳທີ່.

ໃນຄືນໜຶ່ງ, ຫຼັງຈາກຊຸມການມ່ວນຊື່ນ ກໍ່ເປັນເວລາເດິກ ພໍຄວນແລ້ວ ເຮົາເລີຍກັບຄືນສູ່ເຮືອນນອນ, ເຊື່ອນຫຼັບໄປໜ້ຽ ໜຶ່ງເຮົາໄດ້ຍິນສຽງດັງຢູ່ທາງນອກ ເຮືອນ, ເຮົາລຸກນັ່ງກໍ່ພໍດີ ເຫັນເງົາຄົນຜູ້ໜຶ່ງ ຍ່າງອອກຈາກຫ້ອງ ຂອງ ເຮົານອນ. ຍົກ ສະຕິລະວັງຕົວໃຫ້ສູງເຮົາຕິດຕາມເບິ່ງ ແລະ ຖາມ:

— ແມ່ນໃຜ, ສິບເອບ ຫວະ? ຄົນຜູ້ນັ້ນ ຢືນຄິງ ທີ່ແລ້ວ ຕອບເປັນສຽງສັ້ນ ໆ ວ່າ:

— ລາຍງານສະຫາຍ, ເຮົາ.

— ຄາ່ດີຫວະ ? ເຮົາຖາມ. ຄົນຜູ້ນັ້ນຍ່າງມາໃກ້ເຮົາແລ້ວ ຕອບວ່າ :

— ແມ່ນແລ້ວ.

— ເຮັດຫຍັງເດິກປານນີ້ຍັງບໍ່ທັນນອນ, ມີເລື່ອງຫຍັງເກີດຂຶ້ນ, ເຮົາຖາມຄືນ. ຄາ່ດີກ້າວມາຫາເຮົາສອງກ້າວອີກ, ມືຖືກັບ ອີຫຼ້ຽມເຮັດດ້ວຍໄມ້, ນີ້ເດກັບຂອງລາວໃນມືນັ້ນ. ຂົນພຽງນັ້ງ ສະຫວາດສະເຫວີຽ, ສອງຂາຢຽດອອກ, ເຫັນລາວຕັ້ງໃຈຟັງ ເລື່ອງເຮົາເລົ່າຕໍ່ອີກວ່າ: ຄາ່ດີເອົາກັບນີ້ຝາກເຮົາແລະຫາເຮົາ ເອົາອັນນີ້ຝາກເຖິງນາງສາວຜູ້ໜຶ່ງທີ່ຢູ່ລາດບວກ. ລາວຄິດວ່າ ຫຼັງຈາກການເຝິກແອບ ແລະ ຮ່ຳຮຽນນີ້ແລ້ວ ເຮົາຈະໄດ້ເມືອ ຢາມເຮືອນຕາມທາງເມືອເຮົາຈະໄດ້ຜ່ານລາດບວກ, ເຮົາຖາມ ລາວວ່າ:

— ເປັນຫຍັງບໍ່ຝາກນາ່ປະຊາຊົນ, ເຂົາເຈົ້າມາຕະຫຼາດມື້ ອື່ນຈະກັບເມືອເດ.

— ຝາກນາ່ສະຫາຽບັນຄັກກ່ວາ, ແມ່ນແທ້ເຮົາຕ້ອງສົ່ງ ກັບມືນາງ ນັ້ນ, ແຕ່ວ່າມື້ອື່ນ ນີ້ເຮົາຈະເຄື່ອນທັບໄປໄກ ຈາກ ບ່ອນນີ້, ເຮົາຢາກເຮັດຕາມຄາ່ໝັ້ນສັນຍາກັນ ໃນເມື່ອກ່ອນ, ສະນັ້ນດຽວນີ້ເຮົາຈຶ່ງຝາກເຄື່ອງນີ້ໃຫ້ລາວ.

ເຮົາເກືອບຈະບໍ່ຮັບແລ້ວ ເພາະວ່ານາງເທື່ອເຮົາບໍ່ໄດ້ເມືອ ຢາມເຮືອນ, ແຕ່ເຮົາພັດຄິດວ່າມື້ອື່ນນີ້ລາວຈະເຄື່ອນທັບໄປໄກ

ຖ້າບໍ່ ເຮັດ ຕາມຈຸດປະສົງ ເວລາໄປໄກ ຄໍາດີ ຈະຄິດ ແບບນັ້ນ ແບບນີ້ ແລະ ຈະບໍ່ອຸ່ນອ່ຽນໃຈເຮັດ ວຽກງານ. ກົງກັນ ຂ້າມ ຂອງຂັວນຂອງຜູ້ທີ່ຈາກໄປໄກຝາກໄວ້ບາງເທື່ອອາດຈະແມ່ນ ສິ່ງທີ່ທໍາມະດາ ສາມັນ, ແຕ່ວ່າກ່ຽວກັບຜູ້ທີ່ໃກ້ໆ ຄຽງ ເຂົາ ເຈົ້ານັບພັດເປັນສິ່ງທີ່ມີຄຸນຄ່າສູງທີ່ສຸດ. ເຮົາເອົາກັບອັນນີ້ ແລ້ວຖາມວ່າ:

— ຖ້າຫາກ ບໍ່ພົບ ນາງສາວຜູ້ ນັ້ນເຮົາ ຝາກໄວ້ນໍາ ຄົນຢູ່ ໃນຄອບຄົວກໍ່ໄດ້ບໍ່?

ຄໍາດີຕອບ:

— ບໍ່ໄດ້, ຕ້ອງຝາກເຖິງມືນາງນັ້ນ. ຫຼັງຈາກນັ້ນຄໍາດີໄດ້ ບອກບ່ອນຢູ່ຂອງນາງ ໃຫ້ເຮົາຮູ້ສອງສາມບ່ອນຕື່ມອີກ. ເຮົາ ສົນໃຈແລະຖາມ:

— ເປັນຫຍັງຝາກນໍາຄອບຄົວຂອງນາງນັ້ນບໍ່ໄດ້?

— ຄໍາດີຍິ້ມຫົວ, ໃນຄືນນັ້ນຄໍາດີ ໄດ້ເລົ່າເລື່ອງການພົວ ພັນ ລະຫວ່າງລາວ ກັບນາງ ນັ້ນ ໃຫ້ເຮົາ ຟັງ, ເລື່ອງ ການ ເປັນມາເປັນຄື່ດັ່ງນີ້:

— ເມື່ອກ່ອນນີ້ຄໍາດີ ໄດ້ປະຈໍາຢູ່ ລາດບວກ, ກອງຂອງ ລາວໄດ້ຜູກມິດສໍາພັນ ກັບກອງຫຼອນຕາແສງປຽງ ແລະ ຮັບ ໜ້າທີ່ຊ່ວຍເຫຼືອຍຸດທະວິທີໃນການຍິງເຮືອບິນດ້ວຍປືນ12ມມ

7 ໃນໜ່ວຽກອງຫຼອນນີ້. ໃນບັ້ນສູ້ຣົບກັບ ເຮືອບິນອາເມລິກາ
ສອງລຳທີ່ມາກໍ່ໂຫດກວ່າໃນແຖບນີ້ ແລະ ກໍ່ແມ່ນເທື່ອທຳອິດ
ທີ່ກອງຫຼອນໜ່ວຽນີ້ໄດ້ລອງແຮງກັບໂຈນອາກາດ ອາເມລິກາ
ມື້ນັ້ນຄຳດີກໍ່ມີໜ້າຢູ່ສະໜາມ, ລາວເປັນຫົວໜ້າ ບັນຊາລວມ
ຢູ່ໜວດນີ້. ເວລາເຮືອບິນ ສັກຫົວລົງ ໃສ່ສະໜາມ, ຄຳດີໄດ້
ອອກຄຳສັ່ງ :

— ແນໃສ່ຄັນທີ່ໜຶ່ງ, ຖ້າມັນສັກລົງ... ຍິງ!ແຕ່ເວລານັ້ນມີ
ນາງສາວຜູ້ໜຶ່ງ, ເອົາແຕ່ໃຈຕົນເອງ ເລັ່ງສູນໃສ່ນອກຄຳສັ່ງ
ແລ້ວຍັງຮ້ອງຂຶ້ນວ່າ:

— ຄັນທີ່ສອງ,ຄັນທີ່ສອງຄັກທີ່ສຸດ... ເມື່ອເຫັນລູກປືນທີ່
ໜ່ວຽກອງຫຼອນຍິງຂຶ້ນພົກໄປທາງເບື້ອງຊ້າຽ ດາດຫາງເຮືອ
ບິນຄັນທີ່ສອງ, ນາງນັ້ນພັດຫົວອີກໆ ແລະເວົ້າວ່າ:

— ປ່ຽນໄກແລ້ວ ! ລູກປືນປ່ຽນໄກແລ້ວຜູ້ກອງເອີຽ...!

— ຫຼັງຈາກການ ສູ້ຮົບສິ້ນສຸດລົງ, ຄຳດີສຳຫຼວດນາງ
ຢ່າງເຂັ້ມງວດ. ນອກນັ້ນຍັງສັ່ງໃຫ້ນາງຂຽນໃບສຳຫຼວດຕົນ
ເອງກ່ຽວກັບການຂາດສະຕິຕໍ່ລະບຽບ ສາຽການຈັດຕັ້ງ, ບໍ່ນັບ
ຖືຄຳສັ່ງ ຂອງກອງບັນຊາການສູ້ຮົບ.

ໜ້າເຕັມໄປດ້ວຽ ນ້ຳ ເຫື່ອ ແດງ ຮູບໆ, ຄຳ ດີ ພໍ ເວົ້າ ສຸດ
ຄວາມນາງສາວຜູ້ນັ້ນບໍ່ຈັກເຮັດແນວໃດເລີຽ ເອົາໜ້າໝຸບ ໃສ່

ຫຼາຍໝູ່ຍິງຜູ້ອື່ນແລ້ວໃຫ້ສະອຶກສະອື້ນ, ຄ່າວດີ ບໍ່ ນຶກ ບໍ່ ຝັນ ວ່າ ນາງສາວຜູ້ໜຶ່ງເມື່ອສູ້ຮົບກັບສັດຕູຕັ້ງເປັນ ສິບ ດ່ຽວ ລຳ ບິນ, ແຕກນຶດນິວທົ່ວສະໜາມຍັງ ປາກ ເວົ້າ, ຍັງ ຫົວ ເໝືອນ ດັ່ງ ອ້ອນຂ້າງຕົນບໍ່ມີເຫດການໃດເກີດຂຶ້ນ, ແຕ່ດຽວນີ້ ຖືກ ຕຳ ໜິ ໜ້ອຍໜຶ່ງກໍ່ໃຫ້ສະອຶກສະອື້ນເໝືອນດັ່ງເດັກນ້ອຍ. ຄ່າວດີຮູ້ສຶກ ອິ ດູຕົນນາງສາວຜູ້ນັ້ນ ແລະ ເປັນໜ້າ ເສຍ ດາຍຕໍ່ການ ປະ ພຶດ ຂອງຕົນຫວ່າງໆຢ່ານີ້ທີ່ສ້າງຂ່າວນາງເຕັ້ງຂຶ້ນໂພດ. ຕອນແລງ ມື້ນັ້ນຖືກນາງສາວຜູ້ນັ້ນໄປຍາມ. ຄ່າວດີໄດ້ໄປອະທິບາຍຫຼັກການ ແລະ ກົດລະບຽບໃນການສູ້ຮົບ ໃຫ້ນາງເຂົ້າ ໃຈ ແລະ ຫວັງ ວ່ານາງຈະໃຫ້ອະໄພແກ່ຕົນ. ນາງສາວຜູ້ມີຄວາມຜິດພາດນັ້ນ ບໍ່ພຽງແຕ່ບໍ່ຄຽດໃຫ້ລາວ, ກົງກັນຂ້າມນາງຍັງຮູ້ສຶກວ່າ ຕົນມີ ຈຸດບົກພ່ອງ ແລະ ຮັບ ສາ ລະ ພາບວ່າ: « ອ້າຍສົ່ງຂ່າວ ແລະ ຕຳໜິນ້ອງແບບນັ້ນແມ່ນຖືກທີ່ສຸດ, ເທື່ອໜ້າ ນ້ອງ ຈະ ປ່ຽນ ແປງແລະບໍ່ເຮັດຄືເກົ່າອີກ ». ບໍ່ນຶກບໍ່ຝັນວ່າໃນເມື່ອຖືກລຸລ່ວງ ແນວຄິດນັ້ນ, ນາງສາວພັດຈື່ຄືນໄດ້ວ່າກ່ອນ ໜ້ານີ້ແປດປີ «ມື້ ເທື່ອໜຶ່ງ ອ້າຍໄດ້ ມາປະຈຳທັບນີ້ ແລະຕັ້ງທັບ ຢູ່ໃກ້ບ້ານນ້ອງ» ນາງຍັງຈື່ເລື່ອງ «ນາງຜົມຫອມ» ທີ່ເມື່ອ ກ່ອນ ຄ່າວດີ ໄດ້ເລົ່າ ໃຫ້ເອື້ອຍນ້ອງໃນບ້ານນີ້ຟັງ, ເວລານັ້ນນາງຍັງນ້ອຍ ແລະ ຮ່າງ ກາຍຈ່ອຍເຫຼືອງ, ທຸກມື້ມີແຕ່ໄປລ້ຽງ ຄວາຍຢູ່ ກາງ ປ່າ ຄັງຂອງ

24/VII

ເຂດພູພຽງ...ມາເຖິງນີ້ເຂົາພັດພົບກັນອີກ. ຄຳດີ ເຫັນນາງ ປ່ຽນແປງໄປຫຼາຍ. ຮ່າງກາຍອ້ວນພີໃບໜ້າຊື່ນບານ, ຜົມຍາວ ຈົນເຖິງຂະໜ່ອງ, ສອງໜ່ວຍຕາດຳໆ ໜ້າແດງອົ່ງຕົ່ງ. ເວລາຍິ້ມຫົວ ສອງ ປາກ ແກ້ມ ບ່ອງເຂົ້າ ໜ້ຽໜຶ່ງ ເບິ່ງຈັ່ງ ແມ່ນ ເປັນໜ້າຮັກ, ເວລາຍັງເປັນ ເດັກດຽງ ສາລາວ ອາດ ຈະບໍ່ສາມາດສຳນຶກຄວາມງາມ« ຂອງນາງຜົມຫອມ »ໄດ້ໝົດແຕ່ແລ້ວ ຄຳດີພັດເວົ້າວ່າ:

— ເມື່ອ ນາງ ຈັບ ດີ ໃຫຍ່ຂຶ້ນ ມາ ກໍ່ຈະ ງາມ ແລະ ຫອມ ເໝືອນດັ່ງນາງ «ຜົມຫອມ» ນັ້ນ ແລະ ນາງບໍ່ຮູ້ສຶກ ລະອາຍ ແລ້ວອວາງໜ້າໄປທາງອື່ນ, ຄຳດີເວົ້າ ແລະ ເລົ່າຄືນຄຳເວົ້າທີ່ເວົ້າມາເມື່ອກ່ອນນັ້ນ, ສອງຄົນພ້ອມກັນ ຫົວຂຶ້ນ, ນາງສາວຜູ້ນັ້ນຊື່ວ່າຈັນດີ. ນາງລະອາຍແລ້ວແນມໄປທາງອື່ນ, ຜົມດຳ ແລະ ຍາວຂອງນາງແກ່ວງໄປແກ່ວງມາ ເທິງບ່າໄຫຼ່, ໃບໜ້າຊື່ນບານຂອງນາງໄດ້ປະກົດອອກ ປະສານກັບຮຽຍິ້ມອັນອ່ອນຫວານຂອງນາງ. ຄຳດີຮູ້ສຶກ ສະຫວາດ ສະເຫວີຍ, ຄວາມມ່ວນຊື່ນ ແລະ ຄວາມແປກໃຈ ໄດ້ປະກົດຂຶ້ນ ໃນດວງໃຈຄຳດີ ນັບມື້ນັບຫຼາຍ.

ຄືນມື້ນັ້ນ, ຄຳດີໄດ້ກັບຄືນ ເມືອກອງ, ເລື່ອງລາວ ຂອງ ສອງຄົນໄດ້ແຜ່ລາມໄປຢ່າງວ່ອງໄວ. ໝູ່ເພື່ອນໃນໜ່ວຍສູ້ຮົບ ຂອງຈັນດີມີແຕ່ເຍີ້ຍ ນາງໃສ່ອ້າຍ «ທະຫານປົດປ່ຽ», ເມື່ອ

ຖືກໜຸ່ມເຍີ້ຍແຕ່ລະເທື່ອຄືແນວນັ້ນ ຈັນດີມີແຕ່ຫຼຽວໜ້າໄປທາງອື່ນ, ແນວຄິດກໍ່ໜັກໄປທາງອື່ນ, ບາງມີແຕ່ຍິ້ມຫົວ ໂດຍບໍ່ໄດ້ຖຽງໜຸ່ມຄືນ.

ກອງຂອງຄຳດີ ໄດ້ເຄື່ອນໄປແນວໜ້າ ສອງເດືອນແລ້ວ, ໃນຕອນ ແລງນີ້ໜຶ່ງ ຄຳດີໄດ້ຮັບ ຈົດໝາຍຂອງ ຈັນດີ, ໃນຈົດໝາຍນາງສາວເວົ້າໝົດຢ່າງຍາວ, ແຕ່ທ້າຍຈົດໝາຍພັດເວົ້າວ່າ «ຕາມແຕ່ໃຈອ້າຍ, ມີແຕ່ເປັນບ່າອ້າຍນັ້ນແລ້ວ. ດຽວນີ້ໜຸ່ມເພື່ອນມີແຕ່ເຍາະເຍີ້ຍນ້ອງ, ຈົ່ງແມ່ນເປັນຕາຢາກຮ້າຍແທ້, ພໍ່ແມ່ຂອງນ້ອງກໍ່ສົງສານ... ນ້ອງບໍ່ຮູ້ຫຍັງດອກ.ມື້ໃດມີເວລາອ້າຍມາເວົ້າຊ່ວຍນ້ອງແດ່ເດີ...»

ຫຼັງຈາກການໂອ້ລົມກັນນັ້ນ, ຄຳດີຮູ້ສຶກວ່າ ຕົນຮັກຈັນດີຢ່າງສຸດອົກສຸດໃຈແລ້ວ, ດຽວນີ້ຄຳດີບໍ່ຈັກຊິເວົ້າແນວໃດເພື່ອຕອບຈົດໝາຍຂອງຈັນດີ, ຈົດໝາຍກ້ານນັ້ນ ໄດ້ເຮັດໃຫ້ຄຳດີພໍອົກພໍໃຈຢ່າງລົ້ນເຫຼືອ.

ນີ້ໜຶ່ງໄປປະຕິບັດງານ, ຕາມເສັ້ນທາງເມືອ, ຄຳດີນຶກວ່າຊິ່ແວ່ເຂົ້າຄ້າຍທະຫານ ປ້ອງກັນໝັ້ນໜຶ່ງ, ບໍ່ນຶກບໍ່ຝັນ ເລີຍວ່າ ຕາມເສັ້ນທາງ ເມືອຈະໄດ້ພົບອ້າຍຕາແສງ. ເມື່ອພົບກັບເຮົາ, ອ້າຍຕາແສງ ບໍ່ເວົ້າ ບໍ່ຈາ ຫຍັງ ລາວແກ່ແຂນເຮົາ ເມືອເຮືອນຈັນດີ, ເມື່ອໄປຮອດຕໍ່ໜ້າ ເຮືອນອ້າຍຕາ ແສງເລີຍເວົ້າຢ່າງບໍ່ຈິ້ງຈຽມວ່າ:

— ນີ້ນໍ ເຮືອນເຮົາມີໂຊກດີ, ລູກເຂີຍນາຍຍາມເຮືອນ ນີ້ເດ, ອ້າງຕາແສງ ເວົ້າພ້ອມທັງຈັບມືຄໍາດີ ຍົກຂຶ້ນ, ຄໍາດີຮູ້ສຶກກະວິນກະວາງໃຈເພາະໜ້າອາງ, ຮ່າງກາງຮ້ອນຂຶ້ນພ້ອມກັນນັ້ນ ຫູສອງກ້າກໍ່ແດງ..ພໍ່ຂອງຈັນດີເປັນຄົນໃຫ່ຍສູງມັກມ່ວນລາວ ຮັບຕ້ອນຄໍາດີຢ່າງເອົາໃຈໃສ່. ໃນຕອນໂອ້ລົມກັນນັ້ນ ຄໍາດີຮູ້ສຶກກະວິນກະວາງໃຈດົນໆ ຈຶ່ງຕອບຄໍາໜຶ່ງ, ລາວຕອບແລະເວົ້າແຕ່ເລື່ອງຍິງຍົນອາເມລິກາ, ວິທີນ້າງບິນແຕກຊ້າແລະບິນນີ້, ຫຼາງເທື່ອອ້າງຕາແສງ ສັກຕາເຕືອນຄໍາດີ ແຕ່ຄໍາດີກໍ່ຍັງບໍ່ທັນເບັດເລື່ອງໄປສູ່ ຈຸດປະສົງທີ່ຈະເວົ້ານັ້ນ. ສຸດທ້າງອ້າງຕາແສງກໍ່ອອກໜ້າ ອອກຕາຖາມໃຫ້, ໃນທັນ ໃດຄອບຄົວກໍ່ຮັບແລະເຫັນ ດີໂລດ. ເວລາລົມກັນໃກ້ຈະສຸດ ອ້າງຕາແສງຖາມວ່າ:

— ຄອບຄົວທາງຍິງ ໄດ້ເຫັນດີ ເຫັນພ້ອມໝົດແລ້ວ, ສະຫາງຄໍາດີໄດ້ມາສູ່ຖາມ, ດັ່ງນັ້ນສະເໜີໃຫ້ຮູ້ເຮືອນເຮົາຈະຈັດການແຕ່ງງານດ້ວງວັດຖຸຫຍັງຈຶ່ງເໝາະສົມ ພໍ່ຂອງຈັນດີເປັນຜູ້ປາກ, ນັກລົມລາວຕອບທັນທີວ່າ :

— ໃນສະໄໝ ເສິກສົງຄາມ ຄືແບບນີ້, ພວກເຮົາບໍ່ຮຽກຮ້ອງການ ແຕ່ງແປງ ອັນໃດໃຫ່ຍຫຼວງ, ສະໄໝນີ້ແມ່ນສະໄໝກ້າວໜ້າ, ຣິດຄອງເກົ່າ ທີ່ແຕ່ງແປງ ກັນດ້ວງ ເງິນລ້ານ ຄໍາ

ແສນງິວແມ່ລາຍແລະຄວາຍແມ່ໃຫຍ່ນັ້ນໄດ້ປ່ຽນແປງແລ້ວ, ສັງ
ຄົມພວກເຮົາພວມໄດ້ຮັບການປ່ຽນແປງ, ສະນັ້ນໃນການແຕ່ງ
ແປງຂອງພວກເຮົາແມ່ນຕ້ອງການຈິດໃຈຮັກຊາດ, ຮັກປະຊາ
ຊົນ, ຈິດໃຈກ້າຫານເຮັດວຽກງານກ້າວໜ້າ, ສ້າງຜົນງານໃຫ້
ແກ່ຊາດ ແລະ ປະຊາຊົນໄດ້ຫຼາຍ ແມ່ນດີ, ເຮົາຕ້ອງການເອົາ
ອັນນັ້ນມາແຕ່ງແປງ. ທຸກຄົນ ໃນເຮືອນໃຜໆ ກໍ່ຫົວຂຶ້ນ ພ້ອມ
ກັນ, ອ້າຍຕາແສງຕົບບ່າຂອງຄຳດີແລ້ວເວົ້າວ່າ:

— ກອງຂອງພວກສະຫາຍ, ແຕ່ນີ້ຕໍ່ໄປຕ້ອງສ້າງຜົນງານ
ໃຫ້ຫຼາຍ, ຕີສັດຕູໃຫ້ເກັ່ງ ດັບສູນພວກມັນໃຫ້ໄດ້ຫຼາຍ, ຍິງຍົນ
ໃຫ້ຕົກຫຼາຍ.

ມື້ນັ້ນບ່າວ ສາວທັງສອງ ໄດ້ລົມກັນຈົນເດິກ, ຈັນດີຖາມ
ຄຳດີວ່າ:

— ເປັນຫຍັງເວລາ ລົມກັນພໍ່, ອ້າຍມີແຕ່ ເວົ້າເຖິງເລື່ອງ
ຍິງເຮືອບິນແລະວິທີນ້າງ ບົນ ແຕກຊ້າ ຂອງສັດຕູ, ຄຳດີຍິ້ມ
ຫົວ ແລະຕອບຄືນ:

— ມື້ອື່ນອ້າຍຈະອອກເດີນທາງ, ນ້ອງຈະພະລັນແຕ່ງ
ງານດ້ວຍຫຍັງ, ເມື່ອອ້າຍເມືອຈະເວົ້ານຳກົນກອງ ເພື່ອກຽມ
ຈັນດີຍິ້ມຫົວແລ້ວເວົ້າວ່າ:

— ນ້ອງກໍ່ເຫັນດີຄືພໍ່ເວົ້າ ນັ້ນແຫຼະ: ແຕ່ນ້ອງຂໍອ້າຍຈົ່ງ
ເຮັດຮູບຍົນອາເມລິກາລຳໜຶ່ງ, ເພື່ອນ້ອງ ຊິເອົາມາແຂບຍິງ

ຢູ່ໃນກອງຂອງນ້ອງ, ຣູບຍົນນັ້ນອ້າຍຊິແຕ່ງດ້ວຍມືສັງກໍ່ຕາມ ແຕ່. ຄຳດີສົງຮຽບຍີ້ມອອກມາແລ້ວປະຕິຍານບໍ່ຈັນດີວ່າ:

— ໄດ້! ເດັດຂາດອ້າຍຈະຕ້ອງເຮັດຮູບເຮືອບິນ ຝາກໃຫ້ນ້ອງຕາມຄວາມຮຽກຮ້ອງ ຕ້ອງ ການ... ຄຳດີຢາກເວົ້າ ບໍ່ຈັນດີວ່າອ້າຍຈະຕ້ອງຍິງຍົນອາເມລິກາໃຫ້ຕົກແລ້ວ ເຮັດຮູບຍົນດ້ວຍຊາກເຮືອບິນອາເມລິກາ, ແຕ່ຄຳດີບໍ່ຫານເວົ້າ.

ສາມໂມງເຊົ້າ, ຄຳດີລຸກຈາກບ່ອນນອນ ແລ້ວກຽມ ເດີນທາງ, ຫຼັງຈາກການກິນເຂົ້າເຊົ້າແລ້ວ ຄຳດີກໍ່ ລາຄອບຄົວຄືນຫາກອງ. ຈັນດີຍ່າງໄປສົ່ງທາງ, ຄຳດີຍັງເລົ່າຄືນວ່າ: ໃນຍາມລາຕົ້ນອາກາດ ປອດ ປົ່ງສົດໃສ, ບ່າວສາວທັງສອງພ້ອມກັນໄປ ຕາກ ອາກາດຢູ່ແຄມນ້ຳງື່ມ; ໄກ່ຂັນເທື່ອທີ່ໜຶ່ງແລ້ວຂັນເທື່ອທີ່ສອງ, ຄຳດີຮູ້ສຶກວ່າມັ້ນແຕກ ຕ່າງ ກ່ວາທຸກວັນ. ສຽງໄກ່ຂັນມັ້ນນັ້ນແຜ່ລາມໄປຢ່າງ ກ້ວາງຂວາງ, ເໝືອນດັ່ງສຽງໄກ່ຂັນນັ້ນຮ້ອງ ແຜ່ລົງຕາມໜ້ານ້ຳ, ຟອງນ້ຳຍວກຂຶ້ນໃຕ້ແສງເດືອນ, ຈັນດີແຫງນໜ້າມອງເບິ່ງຟ້າຟັງສຽງໄກ່ຂັນເອົາແລ້ວເວົ້າວ່າ:

-- ໄກ່ນັ້ນສະຫຼາດແທ້ນໍ່ອ້າຍ, ນັບຕັ້ງແຕ່ອາເມລິກາເອົາເຮືອບິນມາຍິງທຳລາຍເຂດປົດປ່ອຍ, ໂດຍສະເພາະແມ່ນແຂວງຊຽງຂວາງ ພວກເຮົາ ຈົນ ເຖິງ ປະຈຸບັນນີ້ໄດ້ມັນກໍ່ຂັນເຊົ້າກ່ວາ

ແຕ່ກ່ອນ. ຄຳດີຍິນ ຄຳສັ່ງເກດນັ້ນ ຄືວ່າຖືກກັບຕົວຈິງ ແລ້ວ ຄຳດີເລີຍຕອບວ່າ:

— ນ້ອງເຄີຍຄິດແນວນັ້ນຊື່ໆ ດອກ, ຈັນດີ ເວົ້າຢ່າງເດັດຂາດວ່າ:

— ແທ້ໄດ, ນັບແຕ່ມື້ຕາແສງເຮົາ ໄດ້ສ້າງຕັ້ງ ກອງຍິງຍົນຂຶ້ນມາເຖິງທຸກວັນນີ້, ມື້ໃດມັນກໍ່ຂັນເຊົ້າໆ, ມີເທື່ອນ້ອງມາແຕ່ສະໜາມ ໄກ້ຊິລົ້ມຫຼັງນອນ ລີງກໍ່ໄດ້ຍິນ ໄກ່ຂັນແລ້ວ, ມັນຄືຊິຢາກປຸກໃຫ້ຊາວບ້ານພວກເຮົາລຸກໄປຕີອາເມລິກາໜ່...

ຫຼັງຈາກການສັ່ງລາທີ່ບໍ່ມີວັນລືມໄດ້ນັ້ນ, ໃນຍາມກາງຄືນທີ່ປ້ອນປືນປ້ອງກັນ, ຄຳດີເຄີຍຕັ້ງໃຈຟັງສຽງໄກ່ຂັນທີ່ຊິນເຄີຍສົ່ງສຽງມາຕາມສາຍລົມຈາກບ້ານກອງໄກ, ທ່າມກາງກິ່ນຜິວນ້ຳເຫຼືອມລະຍິບລະຍັບ ສົມທົບກັບ ຮູບພາບອັນ ສວຍງາມ ຂອງຈັນດີພາຍໃຕ້ແສງຈັນໄດ້ປະກົດຂຶ້ນໃນດວງໃຈ ຂອງຄຳດີນັ້ນມັນຈັ່ງແມ່ນ ງາມແທ້ໆ, ງາມກວ່າທຸກສິ່ງ ທຸກຢ່າງ ບົນໜ້າໂລກນີ້ ແລະ ຕໍ່ຈາກນັ້ນ ຫຼັງຈາກການສູ້ຮົບກັບ ເຮືອບິນອາເມລິກາ, ຄືນນັ້ນສຽງໄກ່ຂັນຄືວ່າເຊົ້າກວ່າທຸກວັນ ແລະສຽງນັ້ນກໍ່ເປັນໜ້າຮັກທັງອ່ອນຊອນກວ່າທຸກວັນ.

ກອງຂອງຄຳດີ ໄດ້ມາຮັກສາເຂດບ້ານບານເກືອບໄດ້ສອງເດືອນແລ້ວ, ແຕ່ກອງຂອງດີນບໍ່ທັນໄດ້ເຂົ້າສະໜາມຮົບ, ຄຳ

ດີຮ້ອນໃຈຍ້ອນ ບໍ່ໄດ້ປະຕິບັດ ຕາມຄຳໝັ້ນສັນຍາທີ່ໄດ້ເວົ້າກັບ ກັບຈັນດີ. ເມື່ອນາຣອດບ່ອນຕັ້ງທັບທີ່ບ້ານບານຄຳດີກໍ່ໄດ້ຮັບ ຈົດໝາຍກ້ານໜຶ່ງ, ເນື້ອໃນຈົດໝາຍຂອງນາງສາວລາດບວກ ນັ້ນເວົ້າວ່າ: ນ້ອງໃກ້ຊິໄດ້ ເປັນຮອງໝວດ ໃນກອງ ປ້ອງກັນ ຕາແສງ ປຽງ,ກ່ຽວກັບຄວາມຕິຕຽນເມື່ອກ່ອນນັ້ນຈັນດີຮູ້ ອະ ໄພໃຫ້ຄຳດີແລ້ວ, ສຸດທ້າຍ ຈັນດີຍັງເວົ້າໃນ ຈົດໝາຍ ວ່າ: «ຂອງແຕ່ງງານນ້ອງຢູ່ໃສ? ...» ເມື່ອໄດ້ຮັບຈົດໝາຍ ຄຳດີ ຍິ່ງຮ້ອນໃຈ ເພາະຕົນ ຢາກເຮັດ ຮຸບຍົນ ດ້ວຍຊາກ ຍົນທີ່ກອງ ຂອງຕົນຍິງຕົກແຕ່ ຈົນນາຣອດນີ້ກອງຂອງຕົນ ຍັງບໍ່ທັນໄດ້ ສູ້ຮົບກັບຍົນເທື່ອ. ເມື່ອກ່ອນນີ້ຄຳດີຕີລາຄາຄຳເວົ້າຂອງພໍ່ຈັນ ດີແມ່ນເວົ້າມ່ວນຊື່ ໆ, ແຕ່ວ່າຄຳຕັກເຕືອນ ຂອງຈັນດີພັດເຕັມ ໄປດ້ວຍຄວາມໝາຍ. ໄລຍະສອງເດືອນຜ່ານມາ ກອງຂອງຄຳ ດີບໍ່ທັນໄດ້ສູ້ຮົບກັບຍົນ, ຈັ່ງແມ່ນເປັນໜ້າຢາກຮ້າຍ, ເບິ່ງຍົນ ລຳໃດສູງຕິດຟ້າພຸ້ນ, ຄຳດີຢາກມີຄາຖາໃດໜຶ່ງທີ່ວິເສດເພື່ອ ທະຍານຂຶ້ນ ເອົາໄສ້ເຫຼັກມັດຄໍມັນແກ່ລົງມາ... ຕໍ່ມາຄືວ່າວັນ ເວລານັ້ນໄດ້ຄິດເຫັນອີກເຫັນໃຈຂອງຄຳດີ

ເຊົ້າວັນໜຶ່ງພໍ່ແຕ່ທ້ອງຟ້າເປີດສີຄາມ, ຝູງຍົນອາເມລິກາ ກໍ່ຊ່ວງເສັງກັນມາກໍໂທດກາວ່າຢູ່ເຂດບ້ານບານ, ໃນບໍລິເວນຂອງ ກອງຄຳດີປະຈຳຢູ່. ໂອກາດດີໄດ້ມາເຖິງ, ເມື່ອມີສັດຕຸມາລ່ວງ

ລ້ຳດິນແດນກໍ່ບໍ່ປ່ອຍໃຫ້ມັນເຮັດຟ້າເຮັດໄຟຕາມໃຈ, ກອງຂອງ
ຄຳດີໄດ້ຕັ້ງໜ້າສູ້ຮົບກັບມັນ, ຍ້ອນວ່າເປັນກອງ ໜຶ່ງທີ່ຍິງຍົນ
ເກັ່ງ, ສະນັ້ນຫ່າລູກປືນ ທຳອິດຂອງອ້າຍນ້ອງນັກຮົບໃນກອງ
ຂອງຄຳດີ ໄດ້ສັງຫານຍົນແອັບ 105 ໄດ້ໜຶ່ງລຳ. ຄຳດີໄດ້ເອົາ
ຊາກເຫຼັກ ຂອງ ຍົນມາປ່ຽງໜຶ່ງແລ້ວມາຄວັດມາຖາກ ເຮັດຮູບ
ຍົນອາທິດໜຶ່ງເຕັມໆ ຄຳດີກໍ່ສຳເລັດ ການສ້າງ ຮ່າງເຮືອ ບິນ
ແອັບ 4 ຮາດຄັນໜຶ່ງ, ຄຳດີເຮັດກັບສາກດ້ວຍໄມ້ສີ່ຫຼ່ຽມກັບໜຶ່ງ
ແລ້ວເອົາເຮືອບິນລຳນ້ອຍ ລຳນັ້ນເຂົ້າໄວ້ຫັ້ນ. ເກືອບຈະຝາກໄປ
ແລ້ວແຕ່ລາວຊ້ຳພັດຄິດວ່າ: «ບໍ່ຄວນຝາກແຕ່ສິ່ງດຽວເທົ່ານັ້ນ
ເຮືອບິນນ້ອຍ ລຳນີ້ ຈັນດີຈະ ເອົາໄປເປັນຂອງສ່ວນລວມເພື່ອໃຫ້
ໝູ່ເພື່ອນ ໃນໜ່ວຍແຂບຍິງ, ຈະຝາກຫຍັງອີກ ເພື່ອໃຫ້ ຈັນດີ
ເອົາໄວ້ເປັນຂອງສ່ວນຕົວ ຄຳດີຄິດເຫັນວ່າ ຊູ້ຮັກຂອງ ດົນພົມ
ໜາ ແລະ ຍາວຈົນເຖິງ ຂະໜອງ, ຕົ້ນມາກ່ອນຈະອອກສູ່ສະ
ໜາມ, ຖ້າຫວີຜົມໃຫ້ແລ້ວມັນຕ້ອງເສຍເວລາດົນເຕີບ, ຜົມໜາ
ຫວີດ້ວຍຫວີທຳມະດານັ້ນມັກຫັກ ...» ຕ້ອງເຮັດຫວີຄັກຄັກ
ອັນໜຶ່ງເພື່ອຝາກໃຫ້ຈັນດີເປັນຂອງຂວັນ, ເຮັດຫວີ ໝົດສອງ
ຕອນຕົ່ນອີກຈຶ່ງແລ້ວ. ຄຳດີເອົາເຄື່ອງຂອງແນວນັ້ນໄວ້ໃນກັບ,
ຕອກເຫຼັກຕະປູໃສ່ແລ້ວຄິດວ່າ, ຈະເອົາຂອງຂວັນ ນີ້ສົ່ງເຖິງ
ຈັນດີ ແລະ ຂອງຂວັນ ນີ້ມີຄວາມໝາຍ ສະເພາະຈັນດີເທົ່ານັ້ນ

ຄຳດີກໍ່ຢາກເວົ້ານຳຈັນດີວ່າ: «ກອງຂອງອ້າຍໄດ້ຍິງຍົນອາເມລິກາ, ອ້າຍໄດ້ ເຮັດສິ່ງທີ່ ນ້ອງຕ້ອງການ ສິ່ງມາຕາມຄວາມມຸ່ງຫວັງຂອງນ້ອງ, ນີ້ແມ່ນຜົນງານ ເບື້ອງຕົ້ນ ຂອງຄວາມຮັກທີ່ອ້າຍຝາກເຖິງນ້ອງ ...» ໃນສອງ ອາທິດຜ່ານມາ ກອງຄຳດີໄດ້ສັງຫານເຮືອບິນອາເມລິກາຕົກອີກສອງລຳແລະຮັກສາຄວາມສະຫງົບສຸກຂອງປະຊາຊົນເຂດບ້ານບານໄດ້ເປັນຢ່າງດີ.

ກັບນັ້ນຍັງບໍ່ທັນໄດ້ຝາກໄປ, ຕອນເຊົ້າມື້ນັ້ນກອງຂອງຄຳດີໄດ້ຮັບຄຳສັ່ງເຄື່ອນຍ້າຍໄປບ່ອນໃໝ່, ກ່ອນຈະຈາກໄປສູ້ຣົບຄຳດີເອົາກັບນີ້ຝາກເຮົາຈະຫາເຮົາຊ່ວຍສົ່ງໃຫ້....

— ພັງຮອດນີ້ສົມພຽງເບິ່ງເຮົາ ດ້ວຍສາຍຕາອ່ອນຫວານແລະຖາມວ່າ:

— ເຄື່ອງທີ່ຝາກ ເປັນທີ່ລະນຶກ ຄືແນວນັ້ນ ເປັນຫຍັງ ສະຫາຍບໍ່ຝາກ ໃຫ້ເອົາໂລດ? ເຮົານັ່ງພັກກິນນ້ຳໜ່ອຍໜຶ່ງແລ້ວເລົ່າຕໍ່.

— ຄຳດີໄປ ມື້ກ່ອນນີ້, ມື້ລຸນມາ. ເຮົາຄິດວ່າຈະໄປລາດບວກເພື່ອຊອກຫາເຮືອນຈັນດີແຕ່ເຮົາພັດຍັງບໍ່ແລ້ວວຽກສະນັ້ນມື້ຕໍ່ມາເຮົາຈຶ່ງໄດ້ໄປ. ແປດໂມງກາງຄືນ ເຮົາມາເຖິງລາດບວກແລະຊອກຖາມຫາເຮືອນຈັນດີ, ຄອບຄົວຈັນດີບໍ່ຢູ່ເຮືອນຈັກຄົນ. ເຮົາພັດໄປຫາເຮືອນ ຂອງອ້າຍຕາແສງ, ອ້າຍນີ້ກໍ່ຊ້ຳພັດ ບໍ່ຢູ່ເຮືອນ.ຈຳເປັນຕ້ອງຖ້າຢູ່ຫັ້ນເຖິງສິບໂມງ, ເມື່ອຫຼຽວ

ເຫັນເຮົາອ້າງຕາແສງ ກໍ່ຕວງແລະຮູ້ໂລດວ່າເຮົາແມ່ນຄົນຢູ່ໃນກອງຂອງຄໍາດີເຮົາເອົາກັບນັ້ນໃຫ້ອ້າງຕາແສງ ແລະ ເວົ້າຈຸດປະສົງ ຂອງຄໍາດີ: ເມື່ອເວລາຈະ ຈາກໄປໄດ້ສັ່ງໄວ້. ອ້າງຕາແສງຢືນຊຶງຢູ່, ສີໜ້າງຽບເຫງົາ, ເຮົາເອົາກັບອັນນັ້ນຢອງໄວ້ເທິງໂຕ໊ະ, ຢູ່ຕໍ່ໜ້າກັບນັ້ນໄດ້ຂຽນແຈ້ງບ່ອນຢູ່ຂອງຄໍາດີ: «ຂໍຝາກສະຫາຍ ສິ່ງຊ່ວງ» ອ້າງຕາແສງ ເບິ່ງ ແລ້ວ ເວົ້າ ບ່າເຮົາດ້ວຍສຽງຄ່ອຍ ໆ ແລະເສົ້າໝອງວ່າ:

— ໄດ້ແລ້ວສະຫາຍເອີຍ, ແຕ່ດຽວນີ້ນາງນັ້ນຖືກ ບາດ ເຈັບແລະ ພວມປິ່ນປົວຢູ່ໂຮງໝໍ.

ເໝືອນດັ່ງ ເຮົາມາຮັບ ເອົາ ຂ່າວທີ່ໜ້າກັງວົນ, ທົ່ວຮ່າງກາຍເຮົາຮ້ອນຮົນ. ຕອນຄໍ່ານັ້ນພວກເຮົານັ່ງລົມກັນຈົນເດິກບ່າງໂມງໜຶ່ງ. ຫຼັງຈາກ ເລົ່າເລື່ອງ ການສູ້ ຮົບອັນພິລະ ອາດຫານຂອງໝວດຈັນດີໃຫ້ເຮົາຟັງແລ້ວ, ອ້າງຕາແສງຮັບເອົາກັບສາກນັ້ນໄວ້ ແລະ ເຕືອນເຮົາວ່າ:

— ສະຫາຍຈົ່ງຮັກສາເປັນ ຄວາມລັບ ສາ ກ່ອນ, ຢ່າຟ້າວເວົ້າກັບຄໍາດີ, ເມື່ອໃດຈັນດີອອກໂຮງໝໍແລ້ວ ຈັນ ດີ ຈິ່ງ ຂຽນຈົດໝາຍໄປເລົ່າຂ່າວເອງ. ສ່ວນກັບສາກນີ້ເອົາໄວ້ນີ້ກ່ອນ ແລ້ວເຮົາຈຶ່ງສົ່ງໃຫ້ລາວ. ເຮົາບໍ່ທັນຮູ້ວ່າຈັນດີ ແມ່ນ ຄົນ ຄື ແນວ ໃດ. ເຮົາຖາມອ້າງຕາແສງແຕ່ເພິ່ນບໍ່ບອກ. ອ້າງ ຕາ ແສງ ເປີດ ລິ້ນ

ຊັກເອົາຮູບໃບໜຶ່ງອອກມາ, ນັ້ນແມ່ນຮູບຈັນດີ.

ໃນຮູບຕ່າງ: ນາງສາວຜູ້ໜຶ່ງບ່າພາຍປືນຢືນ ຍາມ ຢູ່ ແຄມນ້ຳງື່ມຝາກສາຍຕາແນມໄປຫາໃນນພູທາງ ເບື້ອງ ໜ້າ, ແສງສຸລິໂຍສີເຫຼືອງອ່ອນແຍງບິນໜ້າ ນ້ຳ, ຮູບ ນີ້ ແມ່ນ ຈັນ ດີ ຢືນຍາມເພື່ອຮັກສາປະຊາຊົນທີ່ພວມເພີ່ມພູນຢູ່ເຂດນັ້ນ.

ເຊົ້ານີ້ຕໍ່ມາ, ເຮົາກໍ່ກັບຄືນກອງ ແລະ ຄິດວ່າ ຈະ ສົ່ງ ຂ່າວໃຫ້ຄຳດີຮູ້, ແຕ່ຢ້ານຄຳດີວິຕົກນ່ຳນາງຫຼາຍ ແລະ ບໍ່ທຸ່ນທ່ຽງຕໍ່ວຽກງານ.

ຕາມເສັ້ນທາງ ເມື່ອຄຳເວົ້າຂອງອ້າຍຕາແສງຍັງວຽນໆ ຢູ່ໃນຫູຂອງເຮົາ: ນາງສາວຄືນນັ້ນບັນຊາໝວດທະຫານປ້ອງກັນຮັກສາ ປ້ອມພູແຫ່ງ ໜຶ່ງ ໃນປ່າເຊື້ອ. ໃນໄລຍະສອງຕອນທີ່ຕ້ານຝັນ ກັບເຮືອບິນ ອາເມລິກາ ຊື່ຊົບກ່ວາຖ້ຽວລຳ ທີ່ມາກໍ່ໂຫດກ່ຳ, ໃນຕອນ ທຳອິດ, ໝວດຂອງ ຈັນດີໄດ້ຍິງ ເຮືອບິນອາເດ 6 ຂອງອາເມລິກາຕົກໃຫ້ໜຶ່ງລຳ. ໃນຕອນແລງຂອງມື້ຕໍ່ມາກອງຂອງຈັນດີຍິງຍິນແອັບ 105 ໃຫ້ອີກ 1 ລຳ ແລະ ເຕ28 ໃຫ້ໜຶ່ງລຳໃນຝູງທີ່ໜຶ່ງ. ຝູງທີ່ສອງໄດ້ເຄື່ອນເຂົ້າມາ, ຄັ້ງນີ້ຈູ້ມບິນຫ້າຮ້ອຍກິໂລໄດ້ຕົກແຄມສະໜາມປືນ, ຈັນດີຖືກເຈັບ, ບໍ່ສາມາດລຸກຂຶ້ນໄດ້ອີກແລ້ວ, ລາວນັ່ງກອດເອົາຂາປືນ, ຕິດຕາມເຮືອບິນ ແລະ ບັນຊາ ໝ່ວຍປືນ ສືບຕໍ່ການສູ້ຮົບ. ຍ້ອນເມື່ອຍ

ຫຼາຍຈັນດີກັ້ນລົງ, ນາງສາວຜູ້ໜຶ່ງໃນໜວດໄດ້ມາໂຊນລາວລຸກຂຶ້ນ, ຈັນດີພິດອອກຈາກມືໝູ່ແລ້ວຮ້ອງວ່າ:

—ມັນສັກລົງແລ້ວ, ຍິງແມ້ລີດາ!

ນາງສາວ ຜູ້ນັ້ນ ຊື່ວ່າລີດາ, ນາງພ້າວຫັນ ຄືນທັງໄຫ້, ແຕ່ນາງກັດແຂ້ວແລ້ວຍິງຕໍ່, ຈັນດີຍັງເຕືອນໝູ່ອີກວ່າ:

ເຊັດນ້ຳຕາແມ້, ຈົ່ງແນມເຫັນຈຸດຍິງລີດາເອີຍ! ນາງລີດາກໍ່ປະຕິບັດຕາມຄຳສັ່ງ ຂອງຈັນດີ. ໃນບຸງເທິງກາງແກ່ງ! ເຕັມໄປດ້ວຍຄວັນລຸກແຕກລຸກບິນນັ້ນ ສຽງປືນ 12 ມມ 7 ໄດ້ປະກົດດັງຂຶ້ນ. ຫ່າລູກປືນສຸດທ້າຍໄດ້ດຶງຫົວຍົນ ແອັບສີ່ຣາດຕົກລົງດິນລ່ຳໜຶ່ງ. ການສູ້ຣົບໄດ້ສິ້ນສຸດລົງ ໃນຍາມ ໃກ້ຈະຄ່ຳ, ນັກຂັບຍົນທີ່ຖືກຍິງຕົກ ນັ້ນໄດ້ຖືກປະຊາຊົນ ແລະ ກອງຫຼອນຕາແສງຄາຍຈັບທັງດິບ. ເວລານອນຢູ່ເທິງ ມືຂອງໝູ່ເພື່ອນຈັນດີຍັງຖາມວ່າ:

— ເຮົາສູ້ຣົບຄັກບໍ່? ລີດາງຶກຫົວແລ້ວຕອບ:

— ບໍ່ມີໃຜຈະຕຳໜິພວກເຮົາ ຂາດສະຕິໃນການສູ້ຣົບອີກແລ້ວ, ຈັນດີພັບຕາບາດຊ້າງ ແລ້ວເວົ້າຄ່ອຍໆ:

— ຢ່າເວົ້າຕໍ່ອ້າງ ນັ້ນພັງ ເດີ, ເຮົາຖືກ...ເຈັບ...ອັນນັ້ນ...ຈະໂສກເສົ້າເຫງົາໃຈ... ລີດາຄ່ອຍໆເວົ້າວ່າ:

– ອ້າງນັ້ນຢູ່ໄກລາວບໍ່ຮູ້ດອກ, ເອື້ອງຈັນດີເອີຍ, ອ້າງນັ້ນໄດ້ຝາກເຄື່ອງແຕ່ງງານມາໃຫ້ເອື້ອງໄດ.

ຈັນດີຄ່ຽມືນຕາຂຶ້ນ ແລ້ວຍິ້ມຫົວ ດ້ວຍຄວາມພໍໃຈ, ການຍິ້ມຫົວທີ່ຢາກຊາ ແລະ ເປັນໜ້າຮັກ ນັ້ນເຮັດໃຫ້ໃບໜ້າຂອງລາວແດງຂຶ້ນຍ້ອນຄວາມດີໃຈ. ແລະທັງຄິດໃນໃຈຜູ້ດຽວວ່າ:

– ອ້າງຄ່າດີ, ດຽວນີ້ອ້າງ ຢູ່ທິດໃດໜໍ່, ອ້າງໄດ້ຮູ້ ແລ້ວບໍ່ນ້ອງຖືກເຈັບ ໃນເວລາສົງຫານ ຂ້າເສິກ, ຂອງຂັວນແຕ່ງງານທີ່ອ້າງ ຝາກມານັ້ນຍັງຄ້າງ ຢູ່ໃສ່ໜໍ່, ປານນີ້ບໍ່ ທັນຮອດນ້ອງ.

ນາງຍິ້ມຫົວ ຄິດຢາກຈະເວົ້າຕໍ່ ແຕ່ແລ້ວ ຍ້ອນເຈັບຫຼາຍນາງສະຫຼົບໄປສິດາຊຸ້ມສັ່ນທັງຮ້ອງ:

– ເອື້ອງຈັນດີ, ເອື້ອງຈັນດີ... ຄາວເຫິງຈັນດີຈຶ່ງຄ່ຽມືນຕາຂຶ້ນ, ຕອນກາງຄືນ ມື້ນັ້ນຈັນດີໄດ້ນຳໄປປິ່ນປົວ ຢູ່ໂຮງໝໍ, ສ່ວນສິດາ ແລະ ເພື່ອນຮ່ວມສູ້ຣົບນຳຈັນດີຍັງຄົງຢືນປະຈຳປ້ອມພູນັ້ນຕະຫຼອດໄປ, ແຕ່ໃຜໆກໍ່ເປັນຫ່ວງນຳອາການເຈັບຂອງຈັນດີ.

ອາການເຈັບ ຂອງນາງ ໜັກໜ່ວງ, ເມື່ອເຂົ້າໂຮງໝໍນາງກໍ່ສະຫຼົບ ຕັ້ງສອງສາມ ເທື່ອ, ເຊົ້າມື້ນີ້ຈັນດີ ພັດສະຫຼົບ ອີກຫຼາຍນາທີ, ທີ່ນາງບໍ່ຮູ້ຄວາມຄືນ, ບັນດາໝູ່ເພື່ອນແລະແພດປິ່ນປົວກໍ່ຄ່ຽໃຈນຳນາງ. ແມ່ນຂະນະນີ້ເອງ ທີ່ອ້າງຕາແສງໄດ້

ເອົາກັບສາກນັ້ນມາໃຫ້ຈັນດີ. ອ້າຍຕາແສງມາຈັບນາງສັ່ນໆ ຫຼາຍຕໍ່ຫຼາຍເທື່ອນາງຄ່ອຍທັນໃຈຂຶ້ນມາ, ຫູຂອງນາງດັງນິງໆ ໄດ້ຍິນແຕ່ສຽງຮ້ອງວ່າຈັນດີ ຈັນດີ ດັງວອຍໆ ໃນຫູ. ຈັນດີຄ່ອຍມືນຕາຂຶ້ນກໍ່ພໍດີອ້າຍຕາແສງ ຍື່ນກັບສາກນັ້ນ ໃຫ້ຈັນດີ, ຈັນດີຄ່ອຍຮັບເອົາກັບສາກນັ້ນດ້ວຍສີໜ້າຊື່ນບານ, ນາງກອດເອົາກັບສາກນັ້ນໄວ້ບົນໜ້າເອິກ, ແລ້ວນາງຄ່ອຍໆ ເວົ້ານຳອ້າຍຕາແສງວ່າ:

— ຂອບໃຈອ້າຍ! ນາງຍັງຖາມອ້າຍຕາແສງວ່າ:

— ອ້າຍນັ້ນເພິ່ນມາແຕ່ແນວໜ້າແລ້ວບໍ່?

— ບໍ່ທັນມາເທື່ອ, ກັບນີ້ລາວຝາກໄວ້ກ່ອນເວລາລາວຈາກໄປສູ່ສະໜາມ.

ຈັນດີເມື່ອຍຫຼາຍ, ແຕ່ຈັນດີບໍ່ລືມຄວາມຮັກຈາກຄຳດີຊູ້ ຜູ້ຊື່ສັດແລະ ທະນົງອົງອາດຂອງຕົນ. ນາງກອດຮັດເອົາກັບສາກນັ້ນໄວ້ແໜ້ນແລ້ວນາງຄ່ອຍຈົ່ມວ່າ:

— ອ້າຍຄຳດີ, ອ້າຍຮູ້ແລ້ວບໍ່ວ່ານ້ອງເປັນແນວໃດ, ນ້ອງເປັນຫ່ວງ ນຳຊີວິດ ຂອງນ້ອງທີ່ສຸດ, ນ້ອງຢ້ານແຕ່ວິນຍານຂອງນ້ອງຈະຂາດ ອອກຈາກເນື້ອກາຍກ່ອນເວລາ ທີ່ຍັງບໍ່ທັນເຫັນໜ້າອ້າຍ. ເຖິງຢ່າງໃດກໍ່ຕາມຂໍອ້າຍຈົ່ງມີຊີວິດຢູ່ເພື່ອສືບຕໍ່ພາລະກິດປະຕິວັດແກ້ແຄ້ນແທນນ້ອງເດີອ້າຍ.

# ຜ່ານບິນ

ໂດຍ: ຄຳຜາຍ ພິລາວົງ

ຕອນເຊົ້າມື້ໜຶ່ງ ກອງບັນຊາການໄດ້ເອີ້ນບຸນກອງ ໄປຫາ, ບຸນກອງຄຶດບໍ່ຖືກວ່າແມ່ນເພິ່ນຈະເອີ້ນໂຕໄປເຮັດຫຍັງ, ແນວຄຶດຕ່າງໆ ນາໆ ໄດ້ພັດປ່ຽນກັນປະກົດຢູ່ໃນຫ່ວງນຶກຂອງບຸນກອງເປັນຊຸດໆ ບຸນກອງໄດ້ອອກຈາກເຮືອນ ໄປຫາກອງ ບັນຊາການ. ເມື່ອທາງຜູ້ບັນຊາການ ເຫັນບຸນ ກອງໄປ. ເພິ່ນໄດ້ບອກ ໃຫ້ບຸນກອງ ນັ່ງລົງ ເກົ້າອີ້ທີ່ຕັ້ງຢູ່ ແປະໂຕະ ເຮັດວຽກຂອງເພິ່ນ ແລ້ວເພິ່ນກໍ່ໄປເຫັ້ຽນເອົານ້ຳຊາ ໃສ່ຈອກມາ ໃຫ້ບຸນກອງດື່ມ. ເພິ່ນນັ່ງລົງ ເກົ້າອີ້ ໜ່ວຍທີ່ສອງ ແລ້ວກໍ່ຖາມ ບຸນກອງ:

— ເປັນແນວໃດ ນ້ອງໄຂ້ເຊົາດີແລ້ວຫວະ ? ອ້າຍກໍ່ບໍ່ໄດ້ລົງໄປເບິ່ງນ້ອງ ເພາະຫຍຸ້ງນ່ຳວຽກ ຫຼາຍ ມີແຕ່ ໄດ້ບອກ ໃຫ້ແພດ ເອົາໃຈໃສ່ເບິ່ງແຍງ, ອ້າຍຫວ່າງນີ້ຈິນເກືອບຈະບໍ່ມີເວ

ລາພັກຜ່ອນເພາະບໍ່ຈັກວຽກຫຍັງຕໍ່ວຽກຫຍັງຫຍັງກັນເອົາຊື່ ໆ. ເມື່ອໄດ້ຍິນກອງບັນຊາການຖາມບຸນກອງກໍ່ຕອບ:

ນ້ອງເຊົາໄຂ້ໄດ້ເກືອບໜຶ່ງອາທິດແລ້ວ, ດຽວນີ້ກິນເຂົ້າແຊບ ແລະ ເຂັ້ມແຂງດີແລ້ວ, ແພດກໍ່ໄດ້ເອົາໃຈໃສ່ປິ່ນປົວທຸກມື້ບໍ່ຂາດ. ຜູ້ບັນຊາການສູບຢາເຂົ້າໃນລ່ຳຄໍພົ່ນ ຄວັນຢາອອກແລ້ວກໍ່ເລີ່ມຕົ້ນເວົ້າວຽກນຳບຸນກອງ:

ມື້ນີ້ອ້າຍເອີ້ນນ້ອງມາແມ່ນຢາກມອບວຽກໃຫ້ນ້ອງເຮັດ, ວຽກນັ້ນແມ່ນວຽກງານໜັກໜ່ວງສຳຄັນ, ແຕ່ເຖິງຢ່າງໃດກໍ່ໃຫ້ນ້ອງຕັດສິນໃຈໄປ, ໃນການໄປນີ້ນ້ອງຈະໄດ້ເອົາເຂົ້າ ແລະ ອາຫານການກິນຈຳນວນໜຶ່ງໄປໃຫ້ອ້າຍນ້ອງ ແຕ່ສຳຄັນແທ້ແມ່ນອັນນີ້, ນ້ອງຕ້ອງຕັດສິນໃຈ ເຮັດວຽກນີ້ໃຫ້ລ້ອນໜ້າທີ່. ເພິ່ນທັງເວົ້າພ້ອມທັງດຶງເອົາຊອງເຈ້ຍຂາວທີ່ຕິດເປັນຮູບສີແຈສາກນັ້ນ ອອກມາຈາກກະຕາບ, ເພິ່ນເອົາຍື່ນໃຫ້ບຸນກອງພ້ອມທັງເວົ້າສີ່ຄໍ ໆ ວ່າ:

— ນ້ອງຕ້ອງຮັກສາໃຫ້ດີ, ເຖິງແມ່ນຕາຍນ້ອງກໍ່ເອົາຕາຍນຳແຕ່ນ້ອງຢ່າໄດ້ເຮັດຊອງເຈ້ຍນີ້ໃຫ້ຕົກຢູ່ໃນກຳມືຂອງສັດຕູ, ໃນຕອນອ້ອນແຈ້ງຂອງມື້ອື່ນເຊົ້າ ໃຫ້ນ້ອງເອົາໄປຮອດດ້ານຮົບພູດອກໄມ້, ໃນບາດກັບຄືນມາ ໃຫ້ນ້ອງເອົາຄ່າຍນ້ອງ

ຜູ້ຖືກ ເຈັບກັບ ຄືນມາ ພ້ອມ ດຽວ. ຫຼັງຈາກ ມອບວຽກ ແລ້ວ ເພິ່ນຖາມບຸນກອງຄືນ :

— ເປັນແນວໃດນ້ອງເຫັນວ່າຈະເຮັດລ້ອນບໍ ?

— ບຸນກອງລຸກຢືນກົງ ແລ້ວເວົ້າຕອບ ເພິ່ນໃນລັກສະນະ ເດັດຂາດເຄັ່ງຂືມວ່າ :

— ຮຽນກອງ ບັນຊາການ, ນ້ອງຈະຕັດສິນໃຈ ເຮັດລ້ອນ ໜ້າທີ່ນີ້ຢ່າງເດັດຂາດ ! ຜູ້ບັນຊາ ການຍິ້ມຫົວ ອອກມາ ພ້ອມ ທັງເດ່ມືສ່າພັດກັບມືຂອງສະຫາຍບຸນກອງທັງເວົ້າ :

— ຊົມເຊີຍນ້ອງ, ເມື່ອນ້ອງກັບໄປ ຈາກນີ້ ແລ້ວ ໃຫ້ນ້ອງ ກຽມເບິ່ງລົດ, ເອົາເຄື່ອງຂອງໃສ່ລົດແລ້ວມື້ແລງນ້ອງໄປ, ໃນ ການໄປນ້ອງແມ່ນໃຫ້ລະມັດລະວັງເພີ່ມ ເຮັດລ້ອນໜ້າທີ່ເອົາ ລະນ້ອງມີຫຍັງອີກບໍ່ທີ່ ຕ້ອງການຢາກຈະເວົ້ານຳອ້າຍ ? ຜູ້ບັນ ຊາການຖາມຄືນ :

— ນ້ອງບໍ່ມີຫຍັງ, ນ້ອງພ້ອມແລ້ວ ຈະປະ ຕິບັດໜ້າທີ່ນີ້ ໃຫ້ສຳເລັດ. ເວົ້າແລ້ວ ບຸນກອງລາຜູ້ບັນຊາການ ຖືເອົາຊອງ ເຈ້ຍຂາວທີ່ເພິ່ນມອບໃຫ້ນັ້ນລົງເຮືອນມາ.

ເມື່ອມາຮອດເຮືອນ ບຸນກອງ ເອົາຊອງ ເຈ້ຍທີ່ສຳຄັນ ນັ້ນ ມ້ຽນໄວ້ໃນບ່າໂລ ມ້ຽນເຄື່ອງນຸ່ງ ຂອງທີ່ມ ໃສ່ຫັດໄວ້ ລຽບລ້ອມ

ແລ້ວສະຫາງລົງໄປກຽນເຄື່ອງຂຶ້ນລົດ, ເມື່ອໝູ່ຄູ່ຂົນເຄື່ອງໃສ່ ລົດໃຫ້ສະຫາງໝົດແລ້ວສະຫາງກໍ່ລໍຖ້າໂອກາດ.

ດວງຕາເວັນ ໄດ້ຫຼົບລົງ ຫຼີບພູເຂົາ, ເຂັມນາລິກາທີ່ຕັ້ງຢູ່ ເທິງໂຕະ ຂ້າງຕຽງນອນ ຂອງບຸນກອງ ໄດ້ຊີ້ບອກ ຫ້າໂມງ. ເຫັນເວລາພໍດີແລ້ວ, ບຸນກອງເປ້ເອົາບາໂລລົງມາແລ້ວ ແລ່ນ ໄປຫາລົດ, ບຸນກອງ ຂຶ້ນຫ້ອງຂັບຕິດຈັກລົດແລ້ວ ແລ່ນອອກ ຈາກກອງຂອງເຂົາໄປ. ລົດຂອງ ບຸນກອງ ໄດ້ປົກຄຸນ ໄປດ້ວຽ ຝົດໄມ້ສີຂຽວ ແລ່ນຕາມ ທາງຍາວທີ່ຄົດ ລະອິດ ລະອ້ຽວກ້ຽວ ໄປຕາມຮ່ອມພູທີ່ຕັ້ງສະຫຼັບຊັບຊ້ອນ ເປັນຊາງ, ຝົດໄມ້ສີຂຽວ ແຊມກາງລົດນັ້ນເໝືອນດັ່ງ ຄຸ້ມໝາກບວບປົກກະຕໍ່ໄຮ່ຍາກທີ່ ຍົນອາເມລິກາຈະເບິ່ງເຫັນໄດ້. ພວກເຮົາແນມເຫັນແຕ່ໄກບໍ່ມີ ໃຜນຶກຝັນເລີຍ ວ່ານັ້ນແມ່ນລົດ, ໄດ້ຍິນແຕ່ສຽງຈັກມັນດັງຈົນ ລົດນັ້ນແລ່ນມາຮອດນີ້ຈິ່ງຮູ້ຈັກ, ລົດຂອງບຸນກອງ ໄດ້ກ້າວໄປ ທາງເບື້ອງໜ້າເລື້ອຍໆ. ມືຂອງ ບຸນກອງຈັບພວງມະໄລ ໄວ້ ແໜ້ນ, ສາງຕາ ຂອງລາວ ໄດ້ຈັບຈ້ອງ ຢູ່ກັບສາງ ທາງຢ່າງ ທ່ຽງຕົງ. ບັນດາລູກຂາຄະ ນາຊາດໄມ້ໄດ້ ຢືນລຽນ ແຄມທາງ ເປັນແຖວໆ ສາງລົມພັດໂຮຽມາກິ່ງງ່າເບື້ອງປິ່ນໂອນເອນຄ້າງ ກັບວ່າມັນໂບກ ມືອວຍພອນ ໃຫ້ບຸນກອງ ຈົ່ງແລ່ນ ໄປດ້ວຽ ຄວາມປອດໄພແລະສຳເລັດໜ້າທີ່, ບຸນກອງໄດ້ລະບາງຄວາມ

ຮູ້ສຶກວ່າງເວງ ໃຈຕໍ່ພາບແຫ່ງຄວາມງາມ ນີ້ດ້ວຍຄວາມຍິ້ມ

ແຍ້ມ.ບຸນກອງໄດ້ບັນຊາລົດແລ່ນໄປໜ້າຈາກຫຼັກໜຶ່ງຈົນເຖິງ

ຫຼາຍໆ ຫຼັກກີໂລແມັດ ໂດຍບໍ່ງ້ງ່ຽງວ່າບວກ ນໍ້າຊີ່ຂວາງທາງ

ສາຍພູຫຼວງຊີ່ຂວາງໜ້າ ແລະ ປິນຫ່າໃຫຍ່ຈະທັງເຫລີງ. ສິ່ງ

ເຫຼົ່ານີ້ແມ່ນ ບຸນກອງພາ ລົດ ແລ່ນຜ່ານໄປ ໂດຍບໍ່ເອົາຫົວຊາຕໍ່

ມັນ ແລະ ສິ່ງທັງໝົດ ນີ້ມັນ ໄດ້ກາຍເປັນສິ່ງ ຊິ້ນເຄີຍ ຂອງ ບຸນ

ກອງກໍ່ຄືຂອງນັກຂັບລົດທີ່ປະຕິວັດຜູ້ໜຶ່ງຂໍ້ຫຍຸ້ງຍາກທີ່ຂວາງ

ທາງເດີນຂອງບຸນກອງ ບໍ່ແມ່ນມີພຽງ ແຕ່ເທົ່ານັ້ນດອກ, ອັນ

ຕະລາງ ໄປກວ່ານີ້ ແມ່ນໂຈນ ອາກາດອາເມລິກາ ໄດ້ເອົາ ໃຈໃສ່

ເຄື່ອນໄຫວ ຖິ້ມລະເບີດທັງເວັນ ແລະ ຄືນ ໂດຍສະເພາະ ແມ່ນ

ຕາມສາຍທາງ ທີ່ລາວ ພວມແລ່ນ ຈາກບ່ອນ ສໍານັກ ຂອງບຸນ

ກອງຢູ່ຈົນຮອດພູດອກ ໄມ້ມັນ ມີຕັ້ງຫຼາຍໆບ່ອນຫຍຸ້ງຍາກ, ແຕ່

ບ່ອນທີ່ມັນເອົາໃຈໃສ່ ຫຼາຍກວ່າໝູ່ ນັ້ນແມ່ນ: ບັນດາ ຮ່ອມພູ

ແຄບພວກມັນຕັ້ງໃຈຈະເຮັດໃຫ້ບ່ອນດັ່ງກ່າວ ຈໍານວນນີ້ກາຍ

ເປັນດິນບວກນໍ້າ,ຈະຂຸດ ໝຸ່ພຸໝ້ຕ່ອນແລະພັກກໍ່ຄາງໃຫ້ພັງ

ທະລາຍລົງ ຮາບກ້ຽງຄວາມຫວັງ ຂອງມັນແມ່ນຢ່າງຕັດສາຍ

ເລືອດ ຂອງນັກຮົບທີ່ປະຈໍາຢູ່ທາງແນວໜ້າ ແຕ່ເຈຕະນາອັນ

ນີ້ມັນພຽງແຕ່ແມ່ນໃນປັນກາງເວັນຂອງພວກມັນເທົ່ານັ້ນ.ໃນ

ການເດີນທາງເຖິງແມ່ນຈະມີຜູ້ດຽວ ແຕ່ບຸນກອງ ກໍ່ບໍ່ລະທ້ານ

ຟ້າບກົ້ວ. ບຸນກອງອາໄສແສງໄຟໜ່ວຽບັຽທີ່ຫັຽຢູ່ພື້ນຂ້າງລົດ ນັ້ນເປັນແສງສະຫວ່າງເຍືອງທາງ, ຕົນບຸນກອງ ເລັ່ງນ້ຳມັນ ມືບຸນກອງກໍ່ພວງນະໄລທາງປາກແມ່ນສຽງລ່ອອກມາ.

ເສັ້ນທາງຍາວຍາກເຍັ້ນ　ເນີນພູຂີນໂຂ່ວ
ແມ່ນ້ຳຂວາງຜ່ານໜ້າ　ຊີ່ລຽຂ້າມດຸ່ງໄປ
ເດີງຊີ່.ຂ້ຳປ່າໄມ້　ໄພສິນແສນຍ່ານ
ໃຈຂັຽບໍ່ສະທ້ານ　ຍືນຮະຄິ້ນອ່ອນຂວັນ
ແມ່ນຊີ່ນານຫຼາຽນີ້　ປີເດືອນກໍ່ຈະຜ່ານ
ແສນໜຸ່ມນານບັ່ງຂັ້ນ　ຊີ່ພັນບ້າງປ່ອງເດີນ
ແມ່ນຈະທຸກຍາກເຍັ້ນ　ເດີນຜ່ານວັງຕົມ
ຂໍແຕ່ສິນໃຈຫວັງ　ແມ່ນເຮົາບໍ່ກົວຢ້ານ.

ແສງໄຟ ໜ່ວຽບັຽ ໆ ໄດ້ເຍືອງ ຮຸ່ງໃຫ້ ຄີ້ງລົດ ປີ່ນຂຶ້ນພູ. ສຽງຈັກຮືນ ໆ ເໝືອນກັບວ່າມັນຍາກກັດຍາກຄ້ຽວພວກເພດ ນານ ທີ່ຮຸກຮານບ້ານເມືອງ ຂອງເຮົາ, ຂຶ້ນໄປບໍ່ທັນ ພື້ນພູສູງ ທາງເບື້ອງໜ້າ ຂອງບຸນກອງກໍ່ປະກົດມີແສງໄຟໜ່ວຽບັຽ ໆ ແລ່ນລີງ ພູນາໜ່ວຽລຽນ ໜ່ວຽນັ້ນແມ່ນລົດ ຂອງຈຸອື່ນແລ່ນ ນາແຕ່ທາງເບື້ອງໜ້າ, ເມື່ອລົດແລ່ນໄປມ່ ໆ ກັນແລ້ວບຸນກອງ ກໍ່ຮ້ອງຖາມ:

— ແມ່ນໃຜ? ທອງສະຫວັນຮ້ອງຖາມຄືນ.

— ສ່ຽວກອງຫວາ?

— ແມ່ນແລ້ວ. ພວກໂຕມາແຕ່ໃສ? ບຸນກອງຖາມ.

— ພວກເຮົາຊິ່ໄປພຸ້ນແລ້ວແຕ່ໄປບໍ່ໄດ້ເພາະຢູ່ ກາງ ທາງ ເຫິງພູນີ້ມີບິນແຕກຊ້າຢູ່ເຈັດໜ່ວຍບໍ່ທັນແຕກ, ກອງຫຼອນນັ້ນ ບໍ່ໃຫ້ເຮົາໄປເຮົາຈະຕ້ອງໄດ້ຖຽລີ້ງໄປຢູ່ຕີນພູພຸ້ນສາກ່ອນເມື່ອ ນັ້ນແຕກແລ້ວຈິ່ງໄປ, ເອົາຄືນສາ, ນັ້ນແຕກໝົດ ແລ້ວ ເຮົາ ຈິ່ງ ພ້ອມກັນໄປ, ໂຕຊິ່ໄປໃສທັນໜາ? ທອງສະຫວັນຖາມ.

— ເຮົາຊິ່ໄປແນວໜ້າ.

— ແມ່ນໃຜແດ່ມານຳໂຕ?

— ມີແຕ່ເຮົາຜູ້ດຽວນີ້ແລ້ວ. ເມື່ອຍິນວ່າມີບິນແຕກຊ້າແນວ ນັ້ນບຸນກອງໄດ້ຖາມທອງສະຫວັນຕໍ່ໄປວ່າ:

— ບິນນັ້ນມັນຖິ້ມລົງມາໄດ້ດົນປານໃດແລ້ວ, ດຽວນີ້ ກອງ ຫຼອນຍາມເປົ້າຢູ່ທັ້ນຫວາ ເຮັດແນວໃດມັນຈິ່ງຢູ່ໄດ້? ທອງສະ ຫວັນຕອບວ່າ:

— ມັນຖິ້ມລົງມາຍາມໃດເຮົາກໍ່ບໍ່ຮູ້, ສ່ວນ ກອງ ຫຼອນ ນັ້ນ ດຽວນີ້ເຂົາກໍ່ຍັງຢືນຍາມເປົ້າຢູ່, ແຕ່ພວກເຂົາໄດ້ຂຸດຂຸມຢູ່ຢ່າງ ດັກ. ພວກເຮົາສິ່ຫ້າຄືນເມື່ອຮູ້ວ່າມີບິນແລ້ວກໍ່ພາ ກັນ ຖຽ ຄືນ ເພື່ອຫຼີກຈາກໄພອັນຕະລາຍ. ເມື່ອຍິນແນວນັ້ນບຸນກອງກໍ່ ເວົ້າ ຂຶ້ນ:

— ໂອຍພວກໂຕ ກໍ່ຢ້ານໂພດສາແລ້ວດອກ, ຮ້າງດີກໍ່ ຖາມ

ເບິ່ງໃຫ້ມັນຮູ້ວ່າຍົນຈຳນວນນັ້ນ ມັນຖີ້ມລົງດົນປານໃດແລ້ວ, ຖ້າເຫັນວ່າພໍຜ່ານໄປໄດ້ກໍ່ຜ່ານລະບໍ່, ເພາະບົມນີ້ ມັນກໍ່ມີໂມງມີເວລາຂອງມັນ, ມາເຮົາຊິ່ໄປລອງເບິ່ງກ່ອນເດີ.

— ເຊົາສ່ຽງຈັກໜ້ຽ ເສຽແຂ້ວໃຫ້ມັນແທ້ໃດ, ໝາກບົມອາເມລິກາ ມັນກໍ່ໄດ້ພຸກສ່ຽງນຳໂຕໃດ, ໂຕບໍ່ຄຶດເຫັນບຸນເດືອນຫ້າຢູ່ບ່ອນພວກເຮົາເວົ້າກັນນັ້ນແດ່ບໍ່, ຈັກໜ້ຽເສຽ ຫວັງຊີ້ໄດເນີ. ບຸນກອງຫົວຂຶ້ນພ້ອມທັງປ່ຽສຽງເວົ້າອອກມາ:

— ໂອຽໝູ່ ກໍ່ຢ່າຟ້າວເວົ້າແນວນັ້ນໃຫ້ເຮົາແມ້, ເອົາພວກໂຕລອງໄປນຳເຮົາເບິ່ງດູ.

ຈາກນັ້ນອ້າຽນ້ອງ ກໍ່ພ້ອມພາກັນກັບຄືນ, ພໍໄປຮອດບ່ອນກອງຫຼອນຍາມຂະບວນກໍ່ຢຸດ.

— ຢຸດ! ທາງນີ້ໄປບໍ່ທັນໄດ້ເພາະຍັງມີບົມແຕກຊ້າຢູ່7ໜ່ວຽບໍ່ທັນແຕກ, ພວກເຮົາກໍ່ຂຸດ ມ້າງອອກບໍ່ໄດ້ ເພາະ ມັນຢູ່ເລິກໂພດ, ສະນັ້ນໃຫ້ພວກສະຫາຽຖ່ຽຄືນໄປຢູ່ຕີນພູພຸ້ນສາກ່ອນເມື່ອບົມແຕກໝົດແລ້ວຈຶ່ງຄ່ຽໄປ. ບຸນກອງແລະ ໝູ່ຊາງ ຢູ່ໜ້ຽໜຶ່ງແລ້ວຖາມກອງຫຼອນວ່າ:

— ບັນດາບົມຈຳນວນນີ້ແມ່ນມັນຖີ້ມລົງມາໄດ້ດົນປານໃດແລ້ວ? ຊາຽໜຸ່ມກອງຫຼອນຕອບ:

— ຍົນມາເຖິງທີ່ນີ້ແມ່ນເວລາເຈັດໂມງ. ເຈັດໂມງສິບຫ້າ

ນາທີ ແມ່ນນັບຖີ້ມບິນ, ດຽວນີ້ແມ່ນແປດ ໂມງ ສິບຫ້າ ນາທີ ແລ້ວ. ສະນັ້ນບິນນີ້ແມ່ນດິນໃດໜຶ່ງຊົ່ວໂມງ. ບຸນກອງຊຶ່ງຢູ່ ດິນເຕີບແລ້ວເວົ້ານຳຊາຍໜຸ່ມກອງຫຼອນ :

— ສະຫາຍຈຶ່ງອານຸຍາດ ໃຫ້ພວກເຮົາຜ່ານໄປ ສາເຫາະ ເພາະວ່າຖ້າຢູ່ນີ້ດິນໄປຈັກໜັ້ຍ ຫ່າຝູງຍົນມາອີກນັ້ນກໍ່ຈະເກີດ ອັນຕະລາຍ, ຈ່ານວນບິນເຈັດໜ່ວຍ ນີ້ແມ່ນເຄີ່ງເກົ້າໂມງນັ້ນ ຈຶ່ງແຕກ. ເພາະເຮົາເຄີຍຜ່ານນັ້ນຫຼາຍເທື່ອແລ້ວ, ສະນັ້ນເຮົາ ຈຶ່ງຮູ້ເວລາແຕກຂອງມັນ.

ຟັງຄຳເວົ້າ ຂອງບຸນກອງ ຊາຍໜຸ່ມກອງຫຼອນ ສອງຄົນ ຊຶ່ງມີໜ້າທີ່ ຮັກສາກວດກາ ສາຍທາງ ເພື່ອຮັກສາ ຄວາມສະ ຫງີບໃຫ້ແກ່ການລ່າລຽງອິນສິ່ງນັ້ນກໍ່ບໍ່ອານຸຍາດ ເພາະຢ້ານ ມັນເກີດອັນຕະລາຍແລ້ວເຂົາຫ້າມອີກ :

— ພວກເຮົາບໍ່ອານຸຍາດໃຫ້ສະຫາຍໄປເພາະລະເບີດຈະ ແຕກຂຶ້ນໃນເວລາອັນບໍ່ຊ້ານີ້ກໍ່ອາດເປັນໄດ້, ສະນັ້ນ, ຖ້າແມ່ນ ຂະບວນລົດ ຖືກເສຍ ຫາຍ ພວກເຮົາ ກໍ່ຈະມີຄວາມ ບົກພ່ອງ ຕໍ່ຂັ້ນເທິງ ແລະ ພວກສະຫາຍ. ສະນັ້ນ ແມ່ນພວກເຮົາ ບໍ່ອາ ນຸຍາດໃຫ້ສະຫາຍໄປ.

ຍ້ອນເປັນຫ່ວງນຳວຽກງານ ທີ່ກອງບັນຊາການມອບໃຫ້ ແລະ ທັງເຊື່ອໝັ້ນວ່າຍັງອີກໜຶ່ງຊົ່ວໂມງ ລະເບີດຈຶ່ງຊິແຕກ

ເພາະສະຫາງເຄີງມີບິດຮຽນ ໃນການຜ່ານບິນອັນ ນີ້ຫຼາງກໍລະ

ນີແລ້ວ, ສະນັ້ນຈິ່ງກ້າຜ່ານຜ່າ. ຄິດແລ້ວສະຫາງບຸນກອງກໍ່

ເວົ້າຂຶ້ນໃນລັກສະນະເດັດຂາດ:

— ພວກສະຫາງເອີງເຄີງແນວໃດພວກເຮົາກໍ່ຊິໄປ ເພາະ

ຄຳສັ່ງຂອງກອງບັນຊາການແມ່ນຕ້ອງເອົາເຄື່ອງໄປໃຫ້ຮອດ

ແນວໜ້າໃນຕອນຂ້ອນແຈ້ງຂອງມື້ອື່ນນີ້, ສະ ນັ້ນ ເປັນ ຕາງ

ແນວໃດເຮົາກໍ່ຊິໄປເລື່ອງເກີດຂຶ້ນເຮົາຊິ່ຮັບຜິດຊອບເອົາເອງ.

ເວົ້າແລ້ວບຸນກອງຊິກຂຶ້ນຕິດຈັກລິດ ແລະ ຊິຍານໝູ່ແລ່ນຜ່ານ

ໄປດ້ວຍຄວາມປອດໄພ. ໄປພົ້ນຈາກທີ່ນີ້ໄກ ເຕີບ ສະ ຫາງ ຈອດ

ລິດປະໄວ້ແລ້ວແລ່ນກັບມາເວົ້ານວ່າຊາງຫຸ່ນກອງຫຼອນ:

— ພວກສະຫາງລື້ໃຫ້ດີເດີຍງອີກຫ້າ-ຫິກນາທີ ບິນ ຈໍ່າ

ນວນນີ້ຈະແຕກ. ເອົາລະເຮົາຂໍລາໄປກ່ອນ.

ເມື່ອບຸນກອງກັບຄືນໄປຮອດໝູ່ແລ້ວເຂົາກໍ່ພາກັນຂັບລິດ

ແລ່ນຕໍ່ໄປ. ພ້ອມທັງສິ່ງສຽງຈັກດັງກ້ອມປ່າດິງພິງພະນາໄປ

ເປັນລຳດັບ.

ໂອຫວິດໂຈນແລ້ວ ພັດມີນານມາຜ່າ

ຫວີດທ່າກ້ອມ ພັດມາພົ້ນທ່າຫຼວງ

ພົ້ນໝູ່ບ້ານ ພັດມາພົ້ນໝູ່ນານນີ້ໜໍ.

ໃນຂະນະທີ່ກົງລິດຂອງພວກເຮົາ ພວມປີ່ນຂຶ້ນຄ້ອຍຢູ່ ນັ້ນ

ປະກົດວ່າສຽງຈັກລິດໄດ້ດັງແຮງຜິດປົກກະຕິ, ແຕ່ກົງລິດຍັງ

ຄືງປິ່ນໄປໜ້າຢ່າງ ບໍ່ຢຸດ. ໃນເວລາທີ່ທຸກຄົນຍັງກຳລັງສົນໃຈຢູ່ນັ້ນປະກົດການອັນທີ່ສອງ ກໍ່ໄດ້ເກີດຂຶ້ນ ນັ້ນກໍ່ຄືທ້ອງ ຟ້າໄດ້ແຈ້ງສະຫວ່າງອອກຢ່າງບັງເອີນ, ມັນແຈ້ງແທ້ແຈ້ງວ່າເກືອບຈະແຈ້ງ ກ່ວາກາງເວັນ ນັ້ນມັນແມ່ນຝູງ ຍົນອາ ກາດ ອາເມລິກາ ໄດ້ມາພໍ້ ຂະບວນລົດ ດັ່ງກ່າວ ມັນໄດ້ ຍິງ ຈ້ອງ ໄຟ ເພື່ອໃຫ້ໝູ່ຂອງ ມັນຍິງ ທຳລາຍ ຂະ ບວນລົດ ພວກ ເຮົາ. ເມື່ອສະພາບເກີດຂຶ້ນ ແນວນັ້ນທຸກຄົນໄດ້ມອດຕາລົດ ແລ້ວແລ່ນຕໍ່ໄປດ້ວຍຄວາມລະວັງໄພ, ແຕ່ເນື່ອງຈາກວ່າລົດແຕ່ລະຄັນຊຶ່ງບັນທຸກເຄື່ອງໜັກຊ້ຳພັດໄດ້ແລ່ນຂຶ້ນພູອີກ, ສະນັ້ນເຖິງແມ່ນຈະຂຶ້ນເລກແນວໃດມັນກໍ່ແລ່ນບໍ່ໄດ້ຄືທາງພຽງ, ເວລານີ້ຫົວໃຈຂອງພວກເຂົາມັນຮ້ອນກ່ວາໄຟຕັ້ງຫຼາຍເທົ່າ, ເຂົາຢາກມີລົດເດດທີ່ເກັ່ງກ້າສາມາດມາຊ່ວຍຊູເອົາຂະບວນລົດນີ້ໃຫ້ພົ້ນອອກຈາກເງື່ອມມືຂອງ ເພດນານທີ່ຊົ່ວຊ້ານີ້ໄດ້, ແຕ່ແລ້ວສິ່ງທັງໝົດເຫຼົ່ານັ້ນ ລ້ວນແຕ່ແມ່ນຂອງເໜືອວິໄສ. ລົດແລ່ນໄປບໍ່ທັນພົ້ນພູ ກໍ່ມີລະເບີດ ແຕກຕຶ້ງ ! ຢູ່ທາງ ເບື້ອງໜ້າ ຄວນໄຟແລະຂີ້ຝຸ່ນໄງ່ກຸ້ມຂຶ້ນ, ເມື່ອເຫັນສະພາບເປັນແນວນີ້, ສະຫາຍທອງສະຫວັນຊຶ່ງມີໜ້າທີ່ນຳພາຂະບວນລຳລຽງນັ້ນກໍ່ຮ້ອງຂຶ້ນວ່າ:

— ທຸກຄົນຕ້ອງຢຸດຫຼົບໄພສາກ່ອນ ! ແຕ່ແລ້ວລົດຄັນໃດ

ກໍ່ຍັງແລ່ນບໍ່ເຊົາເໝືອນດັ່ງ ເຂົາບໍ່ໄດ້ຍິນຄຳສັ່ງ ຂອງສະຫາຍທອງສະຫວັນ. ຂະນະນີ້ລະເບີດສອງໜ່ວຍໄດ້ ແຕກຂຶ້ນອີກ. ລົດຂອງບຸນລິນຄີ້ງແຕກແລ້ວກໍ່ຢຸດ ແລ່ນ ສະຫາຍ ທອງ ສະຫວັນໄດ້ລົງຈາກລົດ ແລ່ນໄປລັດ ທາງໜ້າແລ້ວອອກ ຄຳສັ່ງອີກ:

— ລົດທຸກຄັນ ຕ້ອງຢຸດອອກລົບໄພສາກ່ອນ!

ລົດທຸກຄັນໄດ້ຢຸດແລ້ວ ຄົນກໍ່ແລ່ນໄປລີ້ຢູ່ ຂຸມຫຼົບໄພຕາມແຄມທາງ. ຄາວດຽວລົດສອງຄັນສຸດທ້າຍ ກໍ່ຖືກໄຟໄໝ້ແຜບາດທີ່ປົກເທິງລົດນັ້ນລຸກເປັນແປວຂຶ້ນ. ບຸນກອງບໍ່ສາມາດນັ່ງກອດເຂົ່າເບິ່ງແປວໄຟນັ້ນໄດ້, ບຸນກອງໄດ້ໂດດອອກຈາກຂຸມແລ່ນໄປສູ່ລົດ ຄັນທີ່ຖືກໄໝ້, ບຸນກອງດຶງແຜບາດທີ່ຖືກໄຟໄໝ້ນັ້ນຖິ້ມລົງດິນ. ເມື່ອເຫັນບຸນກອງ ແລ່ນອອກໄປມອດໄຟທອງສະຫວັນກໍ່ອອກຄຳສັ່ງໂລດ:

— ພວກອ້າຍນ້ອງທຸກຄົນ ຕ້ອງຕະລຸນບອນອອກໄປຊ່ວຍກັນມອດໄຟໃຫ້ລົດ.

ເມື່ອໄດ້ຮັບ ຄຳສັ່ງ ພວກອ້າຍນ້ອງ ທຸກຄົນ ກໍ່ພາກັນ ແລ່ນອອກມາຊ່ວຍ ບຸນກອງມອດໄຟ, ບາງຄົນເຂົາຈັບພິດ ໄມ້ຟາດແປວໄຟ, ບາງຄົນກໍ່ດຶງແຜປົກລົດຖິ້ມລົງດິນ ແລະຜູ້ອື່ນ ໆ ກໍ່ຂົນເອົາດິນມາ ປົກໃສ່ໝໍ້ນ້ຳມັນ ເພື່ອບໍ່ໃຫ້ໄຟ ລ່ວງລົງ ໃສ່

ພວກເຂົາເຮັດຢ່າງຟ້າວຟັ່ງ ແລະ ເຄັ່ງຮ້ອນໂດຍບໍ່ເອົາຫົວຊາ ຕໍ່ລູກປືນປີ້ທີ່ຫວ່ານລົງມາຈາກຍົນແຕກຂຶ້ນເປັນລວາດ ໆ, ບໍ່ ຈັກຄັວນໄຟເຂົ້າຫູເຂົ້າຕາ, ບໍ່ຈັກເສດໄມ້ ແລະກ້ອນຫີນພົ້ງມາ ໃສ່ຕົນໂຕ, ເຂົາຮູ້ສຶກເຈັບແສບຕາມໃບໜ້າ ແລະ ຜິວໜັງທົ່ວ ຮ່າງຄີງ, ແປວໄຟລວກລົນຂົນຄິ້ວ ແລະ ເສັ້ນຜົມຂອງເຂົາຈົນ ງ່ໝົດແຕ່ເຂົາບໍ່ເອົາຫົວຊາຕໍ່ສິ່ງເຫຼົ່ານັ້ນແລະທັງບໍ່ເປັນຫວ່ງ ເຖິງຊີວິດອັນໜຸ່ມນ້ຽ ຂອງພວກເຂົາ, ສິ່ງທີ່ເຂົາເປັນຫ່ວງທີ່ ສຸດນັ້ນ ແມ່ນ ໝູ່ເພື່ອນ ຂອງ ເຂົາທີ່ພວມຢືນເປັນ ຮົ້ວລ້ອມຢູ່ ທາງແນວໜ້າ, ເຂົາເອງ ຢ້ານແຕ່ຈະມີຄວາມ ບົກພ່ອງຕໍ່ຂັ້ນ ເທິງ ແລະໝູ່ຄູ່ໃນເມື່ອເຮັດບໍ່ລ້ອນໜ້າທີ່ ເພາະ ວ່າຖ້າບໍ່ມີອາ ຫານ ການກິນ ແລະ ອາວຸດຍຸດທະພັນ ແລ້ວ ມັນກໍ່ເປັນເລື່ອງ ທ່ຳມະດາ ຢູ່ວ່າສຽງປືນ ຂອງ ພວກເພື່ອນ ເຫຼົ່ານັ້ນ ຕ້ອງຢຸດ ດົງ. ແນວຄິດນັ້ນ ໄດ້ປັ້ນຫົວໃຈ ຂອງ ພວກເຂົາ ໃຫ້ມີຄວາມ ກ້າຫານຂຶ້ນຕື່ມ. ສະຫາຍທອງສະຫວັນຮ້ອງຂຶ້ນ:

—. ອ້າຍນ້ອງພວກເຮົາ ຕ້ອງຕັດສິນໃຈ ຜ່ານຜ່າ ສະພາບ ອັນນີ້ໃຫ້ໄດ້, ພວກເຮົາຍອມ ເສຍ ສະ ຫຼະ ທຸກສິ່ງ ທຸກຢ່າງ ເພື່ອແນວໜ້າ, ເປັນຕາຍແນວໃດແມ່ນ ພວກເຮົາ ຕ້ອງພ້ອມ ກັນຜ່ານ.ສະຫາຍທອງສະຫວັນ ເວົ້າສຸດບຸນກອງ ກໍ່ເວົ້າຊ້ອນ ຂຶ້ນ:

— ພວກເຮົາຍອມສະຫຼະ ເລືອດໃນຮ່າງກາຍ ຮັກແປວໄຟ ນີ້ໃຫ້ມອດ, ແຕ່ພວກເຮົາບໍ່ຍອມເສັຽເຄື່ອງ ສ່ວນລວມພຽງ ເຂົ້າເມັດດຽວ ແລະ ປາໜຶ່ງປ່ອງ.

ພວກເຂົາຕ່າງກໍ່ເອົາຮ່າງກາຍ ຂອງເຮົາສູ້ຊົນ ກັບແປວໄຟ ນັ້ນຢ່າງທະນົງອົງອາດ, ໃນວິນາທີຕໍ່ມາ ສະຫາງທອງແດງ ແລະ ໝໍ່ແສງ ກໍ່ຖືກສະເກັດ ບົມບີ້ລົ້ມລົງ, ສະຫາງ ບຸນກອງ ຟ້າວໂດດ ເຂົ້າອຸ້ມ ເອົາໝໍ່ ແລ່ນໄປຫາຂຸມ ແລ້ວ ມອບ ໃຫ້ສະ ຫາງທອງສາຫວັນເປັນຜູ້ເບິ່ງແຍງ. ຄາວນີ້ຍັງເຫຼືອພຽງແຕ່ ບຸນກອງ, ບຸນລົມແລະອິນຄໍາ. ສາມຄົນເຂົາໄດ້ສູ້ຊົນກັບຄວາມ ຮ້າຍກາດ ຂອງປຸ່ຍິນອາເມລິກາ ເພື່ອກອບກູ້ເອົາລົດ. ເຫັນ ສະພາບຍິ່ງຮ້າຍແຮງ ຂຶ້ນກວ່າເກົ່າ, ລະເບີດໃຫຍ່ນັ້ນ ໄດ້ແຕກ ຂຶ້ນເປັນລວາດໆ, ເຫັນວ່າ ອັນຕະລາຍ ຈະມາເຖິງ ຫຼາຍຄົນ, ສະນັ້ນບຸນກອງ ໄດ້ຫາວິທີ ເພື່ອເອົາລົດອອກ ຈາກທີ່ນີ້, ສະ ຫາຍ ໄດ້ລາກ ເອົາ ແຜນວາດ ທີ່ຖືກ ໄຟໄໝ້ ໄປ ກອງ ໄວ້ຢູ່ ທາງ ເບື້ອງລົດ ເຮັດເປັນສາມກອງໃຫຍ່ ໄຟໄໝ້ແດງຮຸ່ງ ເປັນແປວ. ເຮັດແນວນັ້ນແລ້ວ ບຸນກອງແລ່ນ ເຂົ້າໄປ ຫາທອງ ສະ ຫວັນ ພ້ອມທັງເວົ້າຂຶ້ນວ່າ:

— ທອງສະຫວັນ, ເຮົາເຫັນວ່າພວກເຮົາ ຕ້ອງເອົາລົດ ອອກ ຈາກ ທີ່ນີ້ ເພາະ ຈໍານວນ ຍົນ ມັນ ໄດ້ ພັດປ່ຽນ ກັນມາ

ເລື້ອຽໆ ຖ້າພວກເຮົາຢູ່ນີ້ດົນອາດຈະເສຽຫາງໝົດ ກໍ່ເປັນໄດ້.
ເມື່ອຍິນບຸນກອງ ສະເໜີແບບນັ້ນ ທອງສະຫວັນ ກໍ່ເວົ້າຂຶ້ນ.

— ເຮັດແນວໃດຈິ່ເອົາໄປໄດ້ບິນ ແຕກໜ້າແຕກຫຼັງຢູ່ປານນີ້, ຈະບໍ່ເສຽຫາງໃຫ້ມັນບໍ?

— ບໍ່! ບໍ່ເປັນຫຍັງ ພວກເຮົາຕັດສິນໃຈ ໄປແມ່ນ ດີກວ່າ ພວກເຮົາຈະຢູ່ທີ່ນີ້.

ເວົ້າແລ້ວບຸນກອງ ກໍ່ແລ່ນຂອກມາ ຂຶ້ນຕິດຈັກລົດ ຂອງສະຫາງແລ້ວແລ່ນໄປຢ່າງໄວວາ, ຄາວດຽວເທົ່ານັ້ນລົດຂອງສະຫາງບຸນກອງກໍ່ພົ້ນອອກຈາກເຂດນີ້. ເມື່ອເອົາລົດຂອງຕົນພົ້ນແລ້ວບຸນກອງກໍ່ລົງຈາກລົດ ແລ່ນຄືນມາ ເພື່ອ ຊ່ວຽ ເອົາລົດໝູ່, ໃນເວລາທີ່ສະຫາງ ແລ່ນ ມໍ່ຈະ ຮອດ ບ່ອນ ລົດ ຖືກ ໄໝ້ ກໍ່ພໍດີສະເກັດ ບິນບິນມາ ຖືກກົກແຂນເບື້ອງຊ້າງຂອງສະຫາງ ເລືອດສີແດງໄດ້ໄຫຼຍ້ອຍແຂນເສື້ອເບື້ອງຊ້າງຈົນປຽກ, ບຸນກອງຟ້າວປົດໝວກອັດ, ດຶງຊາງແອວອອກມາຮັດໄວ້ແລ້ວແລ່ນມາສູ່ໝູ່ພ້ອມທັງຮ້ອງຂຶ້ນ:

— ໝູ່ເອີຽ ຮີບອັບ ລົດໜີອອກຈາກທີ່ນີ້ລົດເຮົາກໍ່ຍັງຜ່ານໄປໄດ້, ບໍ່ເປັນຫຍັງດອກ.

ເມື່ອເຫັນບຸນກອງຜ່ານໄປໄດ້, ສະຫາງ ທອງສະຫວັນ ກໍ່ເຈ່ງເອົາໝູ່ຜູ້ຖືກເຈັບມາເຂົ້າລົດແລ້ວອອກຄ່າສັ່ງ.

– ພວກອ້າງບ້ອງ ຕ້ອງເອົາລົດ ແລ່ນອອກຈາກທີ່ນີ້ໄວ້ ໆ

ອ້າງບ້ອງແຕ່ລະຄົນຂຶ້ນລົດຕິດຈັກແລ້ວແລ່ນອອກໄປ. ໃນຂະນະນັ້ນສະຫາງບຸນລີນຮ້ອງຂຶ້ນ:

– ລົດເຮົາແລ່ນບໍ່ໄດ້ເພາະຄ້ຶງແຕກເບື້ອງໜຶ່ງແລ້ວ. ເມື່ອຍິນແນວນັ້ນບຸນກອງດຶງເອົາຄ້ຶງຢູ່ເທິງລົດຂະ ຫາງ ທອງ ສະຫວັນລົງມາແລ້ວໄປຊ່ວງບຸນລີນປ່ຽນຄ້ຶງລົດແລ້ວບຸນລີນກໍ່ພາກັນແລ່ນລົດໄປຕາມຫຼັງໝູ່. ໃນເວລານີ້ປຸຍິນອາເມລິກາກໍ່ສະແດງຄວາມໂງ່ງ່າວຂອງມັນອອກມາ, ພວກມັນເມົາແຕ່ຄຶ້ນລະເບີດໃສ່ກອງໄຟໃຫ້ແພບາດທີ່ສະຫາງບຸນກອງເອົາໄປ ກອງໄວ້ນັ້ນຢ່າງເອົາການເອົາງານ, ໂດຍບໍ່ຄິດບໍ່ຫາວ່າລົດແລະຄົນໜີໄປແລ້ວ. ແລ່ນໄປຄາວດຽວ ລົດ ຂອງ ເຮົາກໍ່ໄປ ເຖິງ ຮ່ອງຫ້ວຍເບື້ອງໜ້າທີ່ເປັນບ່ອນປອດໄພ ແລະ ຮັບປະກັນ, ຮອດທີ່ນີ້ແລ້ວເຂົາໄດ້ພັກຜ່ອນກວດເບິ່ງເຄື່ອງຂອງເຫັນວ່າ ເຄື່ອງເທິງລົດບໍ່ມີຫຍັງເສຍຫາຍ, ມີແຕ່ແພບາດບົກ ລົດ ຖືກ ໄຟ ໄໝ້ຄ້ຶງລົດແຕກອັນໜຶ່ງ ແລະ ອ້າງບ້ອງຖືກເຈັບສອງ ຄົນ. ສ່ວນບຸນກອງນັ້ນບໍ່ມີໃຜຮູ້ວ່າລາວຖືກບາດເຈັບ ແລະ ລາວເອງກໍ່ບໍ່ເວົ້າເລື່ອງນີ້ໃຫ້ໝູ່ຮູ້, ໃຜກໍ່ເບິ່ງ ໃຜບໍ່ເຫັນ ເພາະ ມັນ ມືດ. ແລະບຸນກອງເອງກໍ່ຮູ້ສຶກເຈັບປວດ ແລະ ອ່ອນເພຶ້ຍແຕ່ກໍ່ຈຳເປັນໄດ້ອົດໄວ້.

ໄດ້ໂອກາດດີແລ້ວເຂົາກໍ່ເດີນທາງຕໍ່ໄປ ຕື່ມ ອີກ ບໍ່ ເຖິງ ຊົ່ວໂມງກໍ່ໄປຮອດສະຖານທີ່ແຫ່ງໜຶ່ງ, ເຖິງທີ່ນີ້ ແລ້ວ ລົດ ຂອງເຂົາກໍ່ແຍກກັນໄປຄົນທາງ. ບົນເສັ້ນທາງຂຶ້ນພູມີແຕ່ລົດ ຂອງບຸນກອງຄົນດຽວຈະໄດ້ແລ່ນ ໄປ. ກ່ອນຈະຈາກກັນໄປຄົນທາງເຂົາໄດ້ລົງອອກຈາກລົດໃຫຍ່ນັ້ນ ຈັບ ມື ກັບ ໃຕ້ ຄວາມ ມິດ. ໝູ່ເພື່ອນໄດ້ຂອບໃຈສະຫາຍ ແລະ ເວົ້າວ່າຈະຮ່ຳຮຽນ ເອົາ ນ້ຳໃຈອັນກ້າຫານ ແລະ ເດັດດ່ຽວຂອງບຸນກອງ. ຈາກ ນັ້ນ ແລ້ວເຂົາກໍ່ຂຶ້ນຫ້ອງຂັບແລ່ນໄປສູ່ເປົ້າໝາຍຂອງໃຫຍ່ນັ້ນ.

ບຸນກອງຂັບລົດມຸ່ງໜ້າ ໄປສູ່ແນວໜ້າ, ບຸນກອງແລ່ນລົດໄປ ໄວ ເທົ່າໃດ ກໍ່ຮູ້ສຶກເຈັບແຂນຫຼາຍ ຍິ່ງຂຶ້ນ ເພາະມັນໄດ້ຮັບການສະທ້ອນ ແຮງຈາກລົດເຕັ້ນ ເລືອດໄດ້ຊຶມອອກມາບໍ່ຂາດແຕ່ບຸນກອງບໍ່ຮ້ອງຄາງ. ກົງກັນຂ້າມບຸນກອງມີຄວາມດີໃຈທີ່ຜ່ານພົ້ນອັນຕະລາຍ. ໃນຕອນຂ້ອນແຈ້ງ ຂອງມື້ນັ້ນບຸນກອງໄດ້ເອົາເຄື່ອງຂອງໄປເຖິງໝູ່ເພື່ອນຂອງເຂົາ ບັນດາ ອ້າຍນ້ອງໄດ້ລົງມາຮັບເອົາເຄື່ອງດ້ວຍຄວາມດີໃຈ. ສ່ວນບຸນກອງໄດ້ເອົາຊອງເຈ້ຍຂາວນັ້ນຂຶ້ນ ໄປມອບໃຫ້ຜູ້ບັນຊາການດ້ານ ຮົບພ້ອມທັງສົ່ງຄວາມຢ້ຽມຢາມ ຂອງກອງ ບັນຊາການ ທີ່ຝາກ ນຳສະຫາຍນັ້ນ ເຖິງໝູ່ ເພື່ອນ. ນັ່ງລົມກອງ ບັນຊາການ ດ້ານຮົບຢູ່ຄາວໜຶ່ງເພິ່ນຫົວຂຶ້ນດ້ວຍຄວາມຕົກໃຈ:

ໂຫແຂນນ້ອງເປັນຫຼັງມືເລືອດ ຍັງພ້ອມສຽງເວົ້າເພິ່ນໄດ້ຍ່າງມາຈັບເບິ່ງແຂນບຸນກອງ.

— ນ້ອງຖືກເຈັບຢູ່ ກາງທາງ ໃນຂະນະທີ່ຍິນຍິງຂະບວນລົດຂອງ ພວກນ້ອງ. ເມື່ອຮູ້ວ່າບຸນກອງຖືກ ເຈັບເພິ່ນໄດ້ຮ້ອງແພດມາປິ່ນປົວໃຫ້ບຸນກອງ.

ນັ້ຕໍ່ມາ ເມື່ອເອົາຄົນເຈັບຂຶ້ນລົດໝົດແລ້ວ, ບຸນກອງ ກໍ່ລາຜູ້ບັນຊາ ການ ດ້ານຣົບ ແລະ ໝູ່ເພື່ອນກັບຄືນ. ເພື່ອ ຮັກສາຄວາມປອດໄພ ໃຫ້ແກ່ຄົນເຈັບ ແລະ ການເດີນ ທາງຂອງບຸນກອງ, ທາງກອງບັນຊາການດ້ານຣົບ ໄດ້ມອບ ອ້າຍນ້ອງສີ່ຄົນປ້ອງກັນໄປນຳ.

ກົງລົດຂອງບຸນກອງໄດ້ໝູນຄືນມາ ຕາມທາງເສັ້ນເກົ່າທີ່ເອົາໄປ, ມືຂອງລາວກຳພວງມະໄລ ໄວ້ແໜ້ນພັດໄປພັດມາ, ຕາຂອງບຸນກອງ ຈ້ອງມອງໄປທາງໜ້າ, ເບິ່ງຄືນັກຮົບປົດປ່ຍ ກຳປືນ ແລ່ນຂຶ້ນຢຽບ ສັດຕຸ. ໄຮ່ເຂົ້າ ແລະ ທົ່ງນາ ອັນປະກອບດ້ວຍຕົ້ນເຂົ້າຂຽວ ໄດ້ໂອນເອນແກ່ງໄກວ ເໝືອນດັ່ງມັນໃຫ້ຄວາມຕ້ອນຮັບ ຊົມເຊີຍ ນັກ ຮົບ ທີ່ກັບມາແຕ່ແນວໜ້າ, ພາບລູກແຕກລູກປືນທີ່ບຸນກອງຍິນ ໄປນັ້ນມັນໄດ້ພຸ່ຄວາມຕາຍໄປໃສ່ສັດຕຸ ເຮັດໃຫ້ມັນລົ້ມຕາຍອະ ເນກນອງກ່າຍ ກອງນັ້ນກໍ່ໄດ້ປະກົດຂຶ້ນຢູ່ໃນທ່ວງນຶກຂອງສະຫາຍບຸນກອງ. ບຸນກອງ

ມີຄວາມພາກ ພູມໃຈທີ່ສຸດ, ສະຫາງໄດ້ສົ່ງຮ໌ ຍິ້ມອອກມາ ຢ່າງຫວານໆ. ສາງ ລົມ ເຢັນພັດ ໂຮງນາເຮັດ ໃຫ້ຍ໌ ຜົມທີ່ ເຕື່ອງລົງໜ້າ ຜາກຂອງບຸນກອງ ນັ້ນປິວແວັບໆ, ບຸນກອງ ອວາງໜ້າລົດເຂົ້າ ສູ່ສາ່ບັກດ້ວງ ຄວາມມ່ວນຊື່ນ ຈົນເຮັດໃຫ້ ສະຫາງລືມຮອດຢາດເລືອດທີ່ຊຶມຢູ່ບົນກົກແຂນຂອງຕົນ.

ຊ.ຫນ 7-1971

# ເໝືອງຕະລາງ

ໂດຍ: **ສີງແກ້ວ ສຸກຂະພົນ**

ເມື່ອຮອດຮິມນ້ຳນ່າ, ນິ່ງສາຍຕາແນມເບິ່ງ ຟາກນ້ຳເບື້ອງນັ້ນ, ຂ້ອຍໄດ້ເຫັນບ້ານຕະລາງພວມນອນຢູ່ຮິມກົກພ້າວ. ມ່ວງ, ມີ້... ແລະອື່ນໆຢ່າງອິງອາດ. ສາຍນ້ຳນ່າທີ່ໄຫຼປານໜ້າແວ່ນພວມໄຫຼລ່ອງຢູ່ບໍ່ຂາດສາຍ, ພູຜາປ່າໄມ້ທີ່ ຂຽວອຸ່ມທຸ່ມ ພວມໂອບອ້ອມເອົາບ້ານ ຕະລາງໄວ້ຢ່າງແໜ້ນໜາ. ພວກ ໂຈນອາກາດອາເມລິກາທີ່ຢາກຫວັງມາຫ່າຮ້າຍ ນັ້ນແມ່ນບໍ່ສາມາດຈະແນມເຫັນໄດ້.

— ຂ້ອຍເຂົ້າໄປ ເຖິງໃນບ້ານ ກໍ່ພໍດີ ພົບພວກ ພໍ່ແມ່, ອ້າຍເອື້ອຍ ແລະ ພວກອ້າຍບ່າວ ນາງສາວພວມແບກຈົກ, ຊຸວານ, ເຫຼັກສິ່ວຫີນ ແລະ ຄ້ອນຕີຢ່າງເປັນແຖວກັນອອກຈາກໄປຢ່າງຟ້າວຟັ່ງ. ເມື່ອພົບຂ້ອຍ ເຂົາເຈົ້າກໍ່ມີ ແຕ່ຖາມ ສະບາຍດີ. ເບິ່ງພວກເຂົາເຈົ້າໃຜໆ ກໍ່ຍ່າງຢ່າງຟ້າວ ຄືກັບວ່າມີເລື່ອງໃດ ເກີດ

ຂບ, ຈາກການ ຈັບຈິກຊີວານນັ້ນ ເຮັດໃຫ້ຂ້ອຍຄິດຮູ້ວ່າເຂົາເຈົ້າ ອາດຈະຟ້າວໄປຂຸດເໝືອງ ເພາະຮອດເວລາແລ້ວ. ນ້ອງນ້ອຍ ຈຳນວນໜຶ່ງກໍ່ພາກັນຈັບປຶ້ມຈັບສໍໄປໂຮງຮຽນ,ຈຳນວນໜຶ່ງ ທີ່ອາຍຸ ກະສຽນ ບໍ່ທັນພໍ ເຂົ້າໂຮງຮຽນ ກໍ່ຫຼິ້ນເຮຣາ ກັນຢ່າງ ມ່ວນຊື່ນ ຕາມພາສາຂອງເດັກ, ເບິ່ງໜ້າຕາເຂົາເຈົ້າໃຜໆກໍ່ ໜ້າຕຶ່ງ ຕາບານ ເປັນຕາໜ້າຮັກເອົາແທ້ໆ. ຟັງສຽງປາກ ສຽງເວົ້າ ຂອງປະຊາຊົນ ມັນໄດ້ໃຫ້ ຂ້ອຍຮູ້ວ່າ ເຂົາເຈົ້າ ບໍ່ເປັນ ຫ່ວງກາງວິນນາວິງໃດໝົດ.

ເວລານັ້ນ ມີອ້າຍໜຶ່ງພາງຖືງດຳ ແພຟ້າງແບກຄ້ອນຕີແລ່ນ ລົງມາ ຈາກເຮືອນ ຫຼັງໜຶ່ງຢ່າງ ຟ້າວຟັ່ງ, ຄືຈະແມ່ນຢ້ານບໍ່ ທັນໝູ່.ເມື່ອແລ່ນມາຮອດນໍ່ຂ້ອຍ, ຂ້ອຍຖາມລາວໂລດວ່າ:

— ອ້າຍຈະໄປໃສຄືມາຟ້າວແທ້?

— ລາວທັງແລ່ນ ທັງຕອບວ່າ: ອ້າຍຈະໄປຂຸດເໝືອງຢູ່ ຫົວບ້ານ.

— ຖ້ານ້ອງແດ່, ນ້ອງມານີ້ ກໍ່ມີຈຸດ ປະສົງ ຢາກມາ ເບິ່ງ ພວກອ້າຍຂຸດເໝືອງ!

ພໍໄປເຖິງບ່ອນສາງເໝືອງ ຕົວຈິງ. ຂ້ອຍໄດ້ເຫັນ ພາບ ຕ່າງໆ ນາໆ ທີ່ປະຊາຊົນ ໃນເຂດເມືອງຊຽງຄໍ້ໄດ້ສ້າງຂຶ້ນ ຢ່າງເປັນຕາງຶດງໍ້ອັດສະຈັນເອົາແທ້ໆ, ຂ້ອຍບໍ່ນຶກບໍ່ຝັນວ່າປະ

ຊາຊົນຊາວໄຮ່ນາ ໃນເຂດ ເມືອງຊຽງ ຄໍ້ ຈະສ້າງ ຊົນລະປະທານຂະໜາດກາງໄດ້ດີຄືແນວນີ້.

ອ່າງເກັບນ້ຳ ທີ່ກໍ່ດ້ວຍຊີມັງ ມີລວງສູງຕັ້ງສິບແມັດ, ມີລວງໜາຕັ້ງຫຼາຍແມັດ ໄດ້ກໍ່ມາຕິດໃສ່ປາກ ສາຍຮ່ອງ ເໝືອງຢ່າງຮັບປະກັນ, ປະຕູນ້ຳກໍ່ໄດ້ສ້າງຂຶ້ນຢ່າງໜາແໜ້ນ, ຊຶ່ງອຳນວຍຄວາມສະດວກທີ່ສຸດໃຫ້ປະຊາຊົນ ເມື່ອເວລາຕ້ອງການນ້ຳເຂົ້າໃສ່ນາກໍ່ເປີດປະຕູອອກ, ເມື່ອບໍ່ຕ້ອງການນ້ຳກໍ່ອັດປະຕູເຂົ້າ.

ສາຍນ້ຳ ເໝືອງທີ່ ມີຄວາມຍາວ ຕັ້ງຫຼາຍ ສິບກິ ໂລແມັດ ແລະ ມີລວງກ້ວາງຫຼາຍແມັດນັ້ນ ໄດ້ລວບລວມເອົານ້ຳຫ້ວຍ ຕະລາງ ທີ່ໄສເຢັນນີ້ ໄຫຼລ່ອງໄປຢ່າງບໍ່ຂາດສາຍ. ເບິ່ງຄືກັບສາຍປິ່ນຫົວດີນາໂມຕໍ່ໃສ່ຫົວຈັກລົດໂອໂຕ (ສາຍໂກລົວ).

ຂ້ອຍ ໄດ້ຍ່າງ ລຽບມາແຕ່ ຫົວສາຍນ້ຳ ເໝືອງ. ເວລາຂ້ອຍຍ່າງມານັ້ນຂ້ອຍ ໄດ້ເຫັນບາງເປັນພູໄດ້ຂຸດຖາກລົງ ມາເຖິງໜ້າດິນເຖິງຫ້າສິບ-ຮ້ອຍກິໂລແມັດ ເມື່ອເຫັນຄື ແນວນັ້ນ ແຮ່ງເຮັດໃຫ້ຂ້ອຍເຫັນຝີໄມ້ລາຍມື, ຈິດໃຈດຸໝັ່ນຂະຫຍັນພຽນ ແລະ ຈິດໃຈເດັດດ່ຽວໜຽວແໜ້ນຂອງ ປະຊາຊົນ ເຂດເມືອງ ຊຽງຄໍ້ ຫຼາຍຂຶ້ນຕື່ມ.

ມີບາງບ່ອນເປັນຫ້ວຍເລິກບໍ່ສາມາດຈະເຮັດເປັນຮ່ອງນ້ຳໄປໄດ້ເຂົາເຈົ້າ ກໍ່ໄດ້ເຮັດຮາງນ້ຳດ້ວຍດິນຊີມັງບັນຈຸນ້ຳຂ້າມໄປໃສ່

ຮ່ອງເໝືອງເບື້ອງນັ້ນ, ນ້ຳບໍ່ສາມາດຈະເຮັ່ງໄດ້ຈັກຢາດ ເລີຍ.

ສາງລິນນ້ຳ ທີ່ເຮັດດ້ວຍໄມ້ ໄດ້ແບ່ງ ອອກ ຈາກ ສາຍນ້ຳ ເໝືອງໃຫຍ່ ທີ່ແບ່ງໄປທາງນາຊອນກ່ຳລັງທ້ອນໂຮມ ເອົານ້ຳ ເຂົ້າໄປໃສ່ທົ່ງນາບ້ານຕະລາງ ຢ່າງລຽບຕິດ, ສາຍນ້ຳເໝືອງ ນັ້ນບ້ານຕະລາງ ທີ່ຮັບ ທ້ອນເອົານ້ຳຈາກສາຍເໝືອງໃຫຍ່ ໄດ້ ໄຫຼກ້ຽວກອດໄປຕາມຂ້າງບ້ານຕະລາງ ຢ່າງຍືດຍາວ ເໝືອນ ກັບວ່າ ມັນໄດ້ກອດອຸ້ມເອົາບ້ານຕະລາງ ໄວ້ຢ່າງແໜ້ນ, ເພື່ອ ປ້ອງກັນບໍ່ໃຫ້ມີຄວາມທຸກຍາກລຳຄານແລະ ເປັນອັນຕະລາຍ. ຄວາມຈິງມັນກໍ່ເປັນດັ່ງນັ້ນແທ້, ນັບແຕ່ສາຍເໝືອງຕະລາງນີ້ ໄດ້ສ້າງຂຶ້ນ, ສາຍນ້ຳໄດ້ໄຫຼເຂົ້ານາຢ່າງບໍ່ຂາດສາຍ. ດັ່ງນັ້ນຈິ່ງ ເຮັດໃຫ້ການເຮັດນາຂອງປະຊາຊົນ ບ້ານຕະລາງ ໄດ້ສະດວກ ດີຂຶ້ນ. ແຕ່ກ່ອນເຄີຍເຮັດນາປີດຽວໜຶ່ງເທື່ອ, ດຽວນີ້ໄດ້ເຮັດນາ ແຊງ ເພີ່ມຂຶ້ນອີກ ລະດູໜຶ່ງ. ສະນັ້ນ ຈິ່ງເຮັດໃຫ້ ຊີວິດການ ເປັນຢູ່ຂອງປະຊາຊົນໃນແຫ່ງນັ້ນ ນັບມື້ນັບດີຂຶ້ນເລື້ອຍໆ. ໄພ ອຶດເຂົ້າຢາກແກງ ນັບມື້ນັບໜີອອກໄປໄກ.

ສາຍນ້ຳເໝືອງ ທີ່ກອດອຸ້ມ ເອົາບ້ານ ຕະລາງ ໄວ້ນັ້ນ ມັນ ປຽບເໝືອນສຸນກາງ ແນວລາວຮັກຊາດ ໃນປະຈຸບັນ ພວມໄດ້ ກອດອຸ້ມເອົາປະຊາຊົນ ບັນດາຊົນຊາດ ບ້ານຕະລາງ, ປະຊາ ຊົນທົ່ວ ເມືອງຊຽງຄໍ້ ໃນແຂວງຫົວພັນ ແລະ ພວມກອດອຸ້ມ

ເອົາປະຊາຊົນໃນທົ່ວປະເທດໄວ້ ຢ່າງແໜ້ນ. ພ້ອມທັງເບິ່ງ
ແຍງລ້ຽງດູຕົກເຕືອນບອກສອນເປັນຢ່າງດີ.

ຂ້ຯຢືນຢູ່ລີ້ນຮາງລິນນ້ຳ ທີ່ສູງແບນໄປຕາມ ສາຍເໝືອງທີ່
ໄຫຼເຂົ້າໃສ່ນາບ້ານຕະລາງດ້ວຍຄວາມພໍໃຈ. ສາຍເໝືອງສາຍ
ນ້ຯ ນີ້ນັບໄດ້ ສ້າງຄວາມ ເບີກບານມ່ວນຊື່ນ ແລະ ອອນຊອນຕໍ່
ຄວາມສວຍງາມ ແລະ ຄຸນປະໂຫຍດຂອງມັນເປັນຢ່າງດີ,ມັນໄດ້
ສ້າງຄວາມຮູ້ສຶກຂຶ້ນໃນຕົວຂ້ຯຢ່າງບໍ່ສິ້ນສຸດ.

ຂ້ຯແນມໄປໄກໆ ພົ້ນອີກ,ມັນຊ່າງຈັບໃຈຂ້ຯ ທີ່ສຸດນັ້ນຄືທົ່ງ
ນາແຊງທີ່ກ້ວາງໃຫຍ່,ພວນຂຽວອຸ່ມທຸ່ມທີ່ໄດ້ຮັບ ຜົນສະທ້ອນ
ຈາກສາຍລົມອ່ອນ ໄດ້ໂອ້ນໄປເອນມາຕາມກະແສລົມປານຟອງ
ນ້ຳ. ເຖິງວ່າໃນແຕ່ລະມື້ໂຈນອາກາດອາເມລິກາຈະບິນມາທ້າ
ທາງຂົ່ມຂູ່ກໍ່ຕາມແຕ່ມັນຈະຍັງຕັ້ງຢືນຢູ່ຢ່າງສະຫງ່າອົງອາດ.
ມັນໄດ້ດູດກິນນ້ຳທີ່ເໝືອງຕະລາງ ໄດ້ລ່ຽງນາໃຫ້ຢ່າງເບີກ
ບານມ່ວນຊື່ນ, ມັນໄດ້ນັບມື້ນັບຖອດໃບຂຽວອ່ອນອອກແລະສູງ
ຂຶ້ນທຸກວັນ. ຊີວິດມັນກໍ່ບໍ່ຕ່າງຫຍັງກັບຊີວິດຂອງນ້ອງນ້ຯຢູ່ໃນ
ບ້ານຕະລາງທີ່ຂ້ຯພົບເວລາເຂົ້າມາຮອດໃນບ້ານທ່າອິດ.

ຕໍ່ສາຍລົມນ້ຳໄປພວກອ້າຍເອື້ອຍ,ພໍ່ແມ່ແລະ ອ້າຍບ່າວນາງ
ສາວພວມລົງມືດຳເນີນຂຸດ ກົ່ນພູຜາ ເພື່ອແປງ ສາຍເໝືອງ
ໃຫຍ່ນີ້ຕໍ່ໄປໃຫ້ຮອດບ້ານນາຊອນແລະ ບ້ານປະຊາຊົນລາວສູງ

ລາວເຫິງທີ່ຫາກໍ່ລົງມາເຮັດນາ. ສຽງຮ້ອງລຳທຳເພງໄດ້ສົ່ງສຽງອັນອອນຊອນດັງກ້ອງໄປທົ່ວທົ່ງນາແຊງ ແລະ ຫ້ວຍຕະລາງຢູ່ບໍ່ຂາດ.

ພວກອ້າຍນ້ອງຊາຍຂະກັນໄດ້ພາກັນເອົາຜິວໜັງອັນແດງກ່ຳເຂັ້ມແຂງຂອງຕົນຮັບເອົາແສງແດດ ອັນຮ້ອນເອົ້າໄນຍາມເດືອນສີ່-ຫ້າຢືນສິ່ວທົນຢູ່ຢ່າງເອົາ ໃຈໃສ່. ເບິ່ງ ໃບ ໜ້າ ອັນແດງກ່ຳຂອງເຂົາເຈົ້າທີ່ປະປົນກັບຢາດນ້ຳ ເຫື່ອນັ້ນແຮ່ງ ຮັງໃຫ້ເຂົາເຈົ້າມີຄວາມເຂັ້ມແຂງຂຶ້ນຕື່ມ.

ຊຸມນາງສາວທີ່ນຸ່ງເຄື່ອງຝ້າຍ ສີນ້ຳຄາມພື້ນ ເມືອງ ພວມຍົກຈົກ,ຊ້ວານຂຸດດິນກັບຜາຂຶ້ນລົງຢູ່ບໍ່ຂາດ,ສຽງຂັບຊ່ຳເໝືອທີ່ແຈດຈ້າວຂອງນາງສາວ ແຂວງຫົວພັນໄດ້ດັງຂຶ້ນຢູ່ ບໍ່ຂາດຊຶ່ງໄດ້ຫວາຍຕໍ່ຝ່າຍກົງກັນຂ້າມເປັນຢ່າງໜັກ.

ພໍ່ແກ້ວບົວທາ ບ້ານປ່າແປກ ຕາແສງດ່ານ ຮາວຊຶ່ງມີອາຍຸຫົກສິບປີແລ້ວ. ແຕ່ພໍ່ກໍ່ຍັງເອົາແພອາບນ້ຳມັດແອວຢູ່ລໍ້, ຂົນເອົາດິນໄປຖອກຢູ່ບໍ່ຂາດ. ພໍ່ທັງເຮັດວຽກທັງລະດົມລູກຫຼານເຮັດ, ມີເລື່ອງໃດ ມ່ວນໆ ກໍ່ເອົາຂຶ້ນມາເວົ້າ ຈົນເຮັດໃຫ້ພວກລູກຫຼານລືມອິດ ລືມເມື່ອຍ. ເພາະວ່າຢູ່ ໃນໜ່ວຍສ້າງຊົນລະປະທານ ຂະໜາດກາງ ນີ້ມີແຕ່ພໍ່ຜູ້ດຽວ ເທົ່ານັ້ນທີ່ອາຍຸສູງກວ່າເພິ່ນ. ແມ່ນແທ້ພໍ່ບໍ່ມີໜ້າທີ່ນາຂຸດເໝືອງ, ເພາະອາຍຸ

ຂອງພໍ່ ກາງກຳບົດ ເຮັດວຽກແລ້ວ, ແຕ່ພໍ່ ໄດ້ສະໝັກໃຈ ເຮັດວຽກ ບຳລຸກ ຫຼານພ້ອມກັບລູກຫຼານອອກແຮງ ສ້າງຊົນ ລະປະທານ, ແກ້ໄຂຊີວິດການເປັນຢູ່ ໃຫ້ໝົດທັງບ້ານ ແລະ ສ້າງຊີວິດໃນສັງຄົມໃໝ່ທີ່ຈະເລີນກ້າວໜ້າທີ່ຢູ່ພາຍ ໃຕ້ການ ນຳພາອັນສະຫຼາດສ່ອງໃສຂອງສູນກາງແນວລາວຮັກຊາດ.

ຜ່ານການໂອ້ລົມກັບຊາວແກ່ຄົນໜຶ່ງໃຫ້ຮູ້ວ່າ: « ເວລາລົງ ມືເຮັດທຳອິດມີຄວາມຫຍຸ້ງຍາກຫຼາຍປະຊາຊົນເຮົາບໍ່ທັນມີບົດ ຮຽນ, ພາຫານະແລະກຳລັງຄົນກໍ່ບໍ່ພຽງພໍ, ປະຊາຊົນໃຫຍ່ ກໍ່ເສຍກຳລັງໃຈຢາກທໍ້ຖອຍ. ຍ້ອນສູນກາງໄດ້ເອົາໃຈໃສ່ ແລະ ຍ້ອນພະນັກງານ ອົງການປົກຄອງທ້ອງຖິ່ນ ໄກ້ຊິດຕິດແທດ ດີພະຍາຍາມ ລະດົມຊຸກຍູ້ ປະຊາຊົນໄດ້ດີ, ຈຶ່ງເຮັດ ໃຫ້ສາຍ ເໝືອງຕະລາງເສັ້ນນີ້ ສຳເລັດຜົນ ຢ່າງຈົບງາມ. ຈົນສາມາດ ໃຫ້ລົດແລ່ນ ຕາມຄັນເໝືອງ ແລະ ໃຫ້ເຮືອ ລ່ອງຕາມສາຍ ນ້ຳເໝືອງໄດ້ ຢ່າງສະບາຍ. ມີພໍ່ເຖົ້າໜຶ່ງ ເວົ້າເປັນ ສຽງຊາ ເໝືອວ່າ: « ມີແຕ່ເຈົ້າ ແນວລາວ ຮັກຊາດ ປົກຄອງນີ້ ເທົ່ານັ້ນ ພວກເຮົາ ຈຶ່ງມີສາຍເໝືອງ ຂະໜາດກາງ ທີ່ສາມາດ ທ້ອນ ໂຮມເອົານ້ຳເຂົ້ານາໄດ້ຊາວສາມເຮັກຕາ ».

ພໍ່ເຖົ້າຄົນນີ້ເວົ້າຂຶ້ນອີກວ່າ: « ພວກເຮົາໄດ້ສາຍເໝືອງຂະ ໜາດກາງຄືແນວນີ້ແລ້ວ, ພວກເຮົາກໍ່ຍັງບໍ່ທັນລືມ ຄືກ່ອນນີ້

24/VII ຫ້າມຈຳໜ່າຍ

ຫຼາຍສິບປີ ໃນສະໄໝປະລົ່ງປົກຄອງ ປະຊາຊົນໃນທົ່ວເຂດເມືອງຊຽງຄໍ້ ເຮົາ ໄດ້ປະສົບ ໄພແຫ້ງແລ້ງ ປະຊາຊົນເຮົາ ໄດ້ຍ່າງລຽບຕາມສົບກໍ່ເຫັນ ແຕ່ດິນ ນາແຕກ ເປັນເຂີບ ແຕ່ກໍ່ບໍ່ຈົນປັນຍາປະຊາຊົນບັນດາຊົນ ຊາດຜູ້ທຸກຍາກ ໄດ້ລົ້ມຕາຍໄປເປັນຈຳນວນຫຼາຍຍ້ອນບໍ່ມີເຂົ້າກິນ. ສ່ວນພວກອາດຍາ, ເຈົ້ານາຍຜູ້ມີສິດອຳນາດ ໄດ້ຍຸເທ່າງກິນ ເຂົ້າຢ່າງ ລົ້ນເຫຼືອ. ຈົນໝາໃນເຮືອນຂອງມັນກິນກໍ່ບໍ່ໝົດ. ຕັ້ງແມ່ນມັນ ສະໜຸກ ເທິງ ຢາດເຫື່ອຢາດເລືອດຂອງປະຊາຊົນ.

ເມື່ອຄິດເລື່ອງນັ້ນຂຶ້ນມາ, ເຮັດໃຫ້ພໍ່ແລະປະຊາຊົນບັນດາຊົນຊາດໃນແຖບນັ້ນເຫັນແຈ້ງແນວທາງນະໂຍບາຍແລະການນຳຂອງແນວລາວຮັກຊາດແຈ່ມແຈ້ງຂຶ້ນຕື່ມ ມີແນວ ລາວ ຮັກຊາດປະຊາຊົນເຮົາຈຶ່ງຈະມີຄວາມສຸກ, ມີແນວ ລາວ ຮັກ ຊາດເທົ່ານັ້ນພວກເຮົາຈຶ່ງມີຊົນລະປະທານຂະໜາດກາງ.

# ສຽງເພງເຂດພູດຽ

ໂດຽ: ທອງເພັດຫຼວງອຸດົມ

ພາຽຫຼັງ ແຂວງຊຽງຂວາງ ໄດ້ຮັບການປົດປ່ຽແລ້ວ, ນັບແຕ່ນັ້ນ ເປັນຕົ້ນມາ, ບັນດາພີ່ນ້ອງ ຊົນຊາດ ລາວ ສູງຈຶ່ງໄດ້ ມີໂຮງຮຽນປະຖົມໃຫ້ນ້ອງນັກຮຽນ. ສິ່ງດັ່ງກ່າວກໍ່ແມ່ນການປະຕິວັດຊາດ ຍາດມາໄດ້, ຊຶ່ງທຳລາຽຊີກ ໂສ້ແອກປົກຄອງ ຂອງພວກຈັກກະພັດ, ສັງຄົມເກົ່າອອກ. ກໍ່ຄືວ່າໄດ້ແກ້ ຜ້າມັດຫູຕູ ຜ້າມັດຕາຂອງພີ່ນ້ອງ ຮ່ວມຊາດ, ບັນດາຊົນຊາດ ທີ່ຕົກຢູ່ໃຕ້ ຄວາມມືດມົນງົມງວາຽນັ້ນອອກ, ມາຫາແສງສະຫວ່າງຂອງ ດວງພະອາທິດອັນຮຸ່ງໄຊຂອງການປະຕິວັດ.

ມາທ້າຽປີ 1970, ທາງເມືອງກໍ່ຄືແຂວງ, ໄດ້ຕົກລົງສົ່ງພະນັກງານຄູສອນຂຶ້ນໄປປະຈຳເຂດພູດຽຕາແສງພູ ສັບຊົນຊາດ ລາວສູງສີ່ຄົນໃນນັ້ນມີຊາຽ, ສອງຄົນ, ຍິງ 2 ຄົນໃນ ຈຳນວນ ຍິງສອງຄົນມີນາງສຸດທາຮຽນ ມາແຕ່ໂຮງຮຽນບຳລຸງ ຄູຊັ້ນບຳ

ຂອງສຸບກາງໃໝ່ໆ; ບາງຫາກໍ່ກັບຄືນມາທ້ອງຖິ່ນຂອງຕົນ. ສ່ວນ ຜູ້ໜຶ່ງ ນັ້ນກໍ່ເປັນ ຄູສອນ, ຮຽນມາຈາກໂຮງຮຽນສ້າງຄູຂອງແຂວງ. ຂະເຈົ້າທັງສອງ ໄດ້ຖືກສັບຊ້ອນແບ່ງປັນໃຫ້ໄປສອນປະຈຳຢູ່ເຂດຊົນຊາດດຽວ. ນາງສຸດທາຊຶ່ງບໍ່ເຄີຍນຶກເຄີຍຝັນວ່າຈອມພູ ທີ່ນາງເຄີຍແນມເຫັນເປັນໂນນສູງໆ, ຊຶ່ງບໍ່ຫ່າງໄກຈາກບ້ານເກີດເມືອງນອນຂອງຕົນ ໄປພຽງສິບກ່ວາຫຼັກກິໂລແມັດ ນັ້ນ. ມານີ້ຕົນເອງ ບັງເອີນ ໄດ້ມາຢືນຢູ່ເທິງຈອມພູແຫ່ງນີ້, ມາຝາກຊີວິດຊີວາ ອັນໜຸ່ມນ້ຍ ຂອງຕົນໄວ້ກັບພີ່ນ້ອງຊົນຊາດ ລາວສູງ ຕາແສງພູສັນນີ້. ມາຢູ່ທຳອິດນາງສຸດທາບໍ່ຮູ້ ຈັກຈະເຮັດອັນໃດກ່ອນອັນໃດລຸນ, ເພາະບໍ່ຮູ້ພາສາເວົ້າ, ບໍ່ຮູ້ ຮອດຕະຫຼອດເຖິງຮີດຄອງ ປະເພນີ, ການຢູ່ກິນຫຼັບນອນ, ນິດໄສໃຈຄໍຂອງຂະເຈົ້ານາງກໍ່ບໍ່ເຂົ້າໃຈອັນໃດທັງໝົດ: ພວກຊາວບ້ານພໍ່ແມ່ພີ່ນ້ອງ ລາວສູງ ຈຳນວນຫຼວງຫຼາຍມາເບິ່ງມາຊົມ, ມາຕ້ອນຮັບຖາມ, ຂ່າວຄາວແລະອື່ນ ໆ... ນາງໄດ້ນັ່ງເບິ່ງຢູ່ບໍ່ ຈັກຈະປາກຈະຖາມ, ຖາມອັນໃດຂະເຈົ້າກໍ່ບໍ່ຮູ້ມີແຕ່ ເຖົ້າແກ່ບາງ ຄົນທີ່ຮູ້ພາສາລາວລຸ່ມ ເລັກ ໆ ນ້ຍ ໆ ມາຖາມສະບາຍນາງຈຶ່ງຕອບ ແລະ ຖາມຄືນ.

ເວລາໃດຢາກໂອ້ຢາກລົມນຳໝູ່, ເວັ້ນຈາກ ອ້າຍຕາແສງແລ້ວກໍ່ມີແຕ່ນາງນິລາທີ່ເປັນເພື່ອນຮ່ວມຊີວິດ ຂອງນາງປາກ

ເວົ້າໂອ້ລົມກັນ. ທຸກເທື່ອ ນາງ ສຸດທາ ເວົ້ານຳ ນາງ ນິລາ ກໍ່ມີແຕ່ວ່າ:

ນິລາເອີຍ! ພວກເຮົາ ຈະເຮັດແນວໃດໄດ້ເປັນ ແນວນີ້, ບໍ່ຄືຜູ້ຊາຍຂະເຈົ້າໃດ! ຂະເຈົ້າບໍ່ຮູ້ບໍ່ເຄີຍກໍ່ ຍັງໄດ້ຜ່ານ ໄປກາງມາ ເທື່ອໜຶ່ງ ສອງເທື່ອ. ສ່ວນພວກເຮົານີ້ຕິ, ປາກົດວ່າໃນຊີວິດນີ້ຍັງບໍ່ທັນມີຈັກ ເທື່ອໄດ້ມາຢູ່ເປັນແນວນີ້. ນາງທັງ ເວົ້າທັງ ຈ້ອງຕາ ເບິ່ງນາງນິລາ, ທັງເຮັດທ່າທີ້ງຫ່າງງານຳ ຊີວິດກໍ່ຄື ໜ້າທີ່ ວຽກງານ ຂອງຕົນ. ນາງນິລາ ເຫັນວ່າ ນາງສຸດທາບໍ່ ທຸ່ນທ່ຽງອຸ່ນອຽນ ຢູ່ໄດ້, ນາງນິລາຈຶ່ງພະຍາຍາມ ເອົາໃຈນາງ ສຸດທາ. ພາກັນ ໄປຫຼິ້ນໄຮ່ຢາຝິ່ນ, ໄຮ່ສາລີ ຂອງພີ່ນ້ອງລາວ ສູງເພື່ອ ໃຫ້ເບິ່ງອາລົມອຸກ ອັ່ງຫາງຄວາມ ຄິດໂສກ ເສົ້າຂອງ ນາງສຸດທາ. ແລ້ວຈຶ່ງຄ່ອຍ ໆ ເວົ້າລະດົມຈິດ ໃຈອອກມາ ເທື່ອ ລະເລັກລະນ້ອຍ:

— ສຸດທາເອີຍເລື່ອງ ທີ່ຫຍຸ້ງຍາກ ກັນດານໃຫ້ ແກ່ພວກເຮົານັ້ນແມ່ນມີແທ້, ແຕ່ຄາວພວກເຮົາຢູ່ບ້ານຢູ່ເຮືອນນຳພໍ່ແມ່ ເພິ່ນກໍ່ເຄີຍ ເລົ່າໃຫ້ຟັງວ່າ: ຊົນຊາດລາວ ສູງຈິດ ໃຈສັ້ນ, ຢູ່ ກົນຕ່າງລາວ ລຸ່ມເຮົາ. ແຕ່ເປັນຊົນຊາດທີ່ເຮັດ ແທ້ເວົ້າ ແທ້. ເວົ້າອັນໃດ ເຮັດອັນນັ້ນຈິງໄດ້, ເປັນຄົນດຸໝັ່ນ, ນັ້ນກໍ່ເປັນແຕ່ ເລື່ອງເລົ່າສູ່ກັນຟັງທົ່ວໄປ, ສ່ວນຕົວຈິງພວກເຮົາກໍ່ຍັງບໍ່ທັນ

ເຫັນຄັກ. ມາບາດນີ້ ແຫຼະພວກເຮົາ ຈະໄດ້ຢູ່ໄດ້ກິນຮ່ວມ. ໄດ້ຍິນກັບຫູໄດ້ດູກັບຕາ, ທັງຈະເປັນຜູ້ໄດ້ເຮັດໄດ້ເຫັນ ຕົວຈິງ, ເຮັດນຳຮຽນນຳອີກ.

— ແທ້ໃດເນະ, ຕາມຫຼາງຄົນເວົ້າສູ່ຟັງ ກໍ່ເປັນແນວນັ້ນແທ້. ນາງສຸດທາຕອບຄຳເວົ້າ ຂອງ ນາງນິລາ. ນາງນິລາຈຶ່ງເວົ້າຕໍ່:

— ເປັນແນວໃດກໍ່ຕາມ, ພວກເຮົາກໍ່ຖືວ່າ ນັ້ນ ເປັນພາລະໜ້າທີ່ ຂອງ ພວກເຮົາເປັນຜູ້ເຮັດ, ເປັນບົດຮຽນ ອັນປະເສີດໃຫ້ແກ່ຊີວິດ ຂອງແມ່ຍິງ ເຮົາ. ທັງເຫັນຕົວຈິງ ທັງເຮັດຕົວຈິງ, ໃຫ້ລົບກັບ ເພງເຂົາຮ້ອງ ວ່າ: «ແມ່ຍິງລາວ ເກັ່ງກ້າມີຄວາມສາມາດທຸກຢ່າງ ຊ່າງເປັນແພດຄູ...» ແມ່ຍິງສະໄໝນີ້ນັບຕ່າງກັບສະໄໝຈັກກະພັດປົກຄອງໃດສຸດທາເຮີງ. ເຮັດອັນໃດກໍ່ໄດ້ໄປອັນໃດກໍ່ເປັນ, ນາງທັງເວົ້າທັງຫົວຢ່າງຊຸ່ມຊື່ນສະອຶກສະອ້ຽດ້ວຍຄວາມພໍອົກລົບໃຈ, ນາງສຸດທາກໍ່ຫົວຂຶ້ນນຳກັນ.

ແຕ່ລະມື້ໃນເວລາທີ່ພວກ ນາງທັງສອງຍັງບໍ່ທັນ ໄດ້ສອນໂຮງຮຽນ, ນາງສຸດທາພ້ອມດ້ວຍໝູ່ຂອງຕົນ ພາກັນໄປ ທ່ຽວຢ້ຽມຢາມຖາມຂ່າວ, ສ້າງຄວາມລຶ້ງເຄີຍຮັກແພງແຕ່ລະຄອບຄົວໄວ້. ຊອກຮູ້ຫາຖາມ ພະຍາຍາມ ຮຽນເອົາ ຄວາມ ຊົນຊາດ

ນຳຂະເຈົ້າຢ່າງ ເອົາໃຈໃສ່. ເຫັນຜູ້ໃດ ເຮັດຫຍັງ ບ່າງ ກໍ່ສົນໃຈ ຖາມ, ບໍ່ວ່າເຖົ້າແກ່ຍິງ ຊາຍ ນ້ອຍໃຫຍ່, ນາງ ກໍ່ ສ້າງ ຄວາມ ຮັກ ແພງ, ເຫັນລູກນ້ອຍຫຼານແພງຂະເຈົ້ານາງກໍ່ຂໍອຸ້ມ, ຂໍເຈ່ຍຊ່ວຍ. ລູກແສ້ຫຼານສາວຂອງຂະເຈົ້າໃຜ ໆ ກໍ່ຮູ້ນາງ, ມີບາງມື້ນາງຍັງ ຊອກເວລາໄປ ເປີກສາສະເໜີແຜນການນຳ ອົງການ ປົກຄອງ ບ້ານ, ປົກຄອງຕາແສງ, ກ່ຽວກັບວຽກງານ ຈັດ ຕັ້ງ ໂຮງ ຮຽນ ຂຶ້ນ. ມີເທື່ອໜຶ່ງນາງໄດ້ສະເໜີຂຶ້ນ:

— ອ້າຍຕາແສງ, ດຽວນີ້ ພວກນ້ອງມາ ຕົກຢູ່ ບ້ານ, ຢູ່ຕາ ແສງເຮົານີ້ກໍ່ຫຼາຍມື້ແລ້ວ. ອີງໃສ່ຄວາມ ຮຽກ ຮ້ອງ ຕ້ອງ ການ ຂອງພໍ່ແມ່ປະຊາຊົນເຮົາ, ຢາກໃຫ້ ບ້ານໃຫ້ ຕາ ແສງ ຂອງ ພວກເຮົາ ໄດ້ຮຽນ ໜັງສື, ມີຄວາມ ກ້າວໜ້າ. ສະນັ້ນ ທາງ ແຂວງກໍ່ຄືເມືອງຂອງພວກເຮົາ, ໄດ້ສົ່ງພວກນ້ອງ ມາຢູ່ນຳພໍ່ ແມ່, ມາເປັນຄູສອນປະຈຳບ້ານປະຈຳຕາແສງຂອງພວກເຮົາ ນີ້. ພວກນ້ອງມາຢູ່ແນວນີ້ແລ້ວ, ໂຮງຮຽນ ຍັງບໍ່ ທັນ ມີ, ລູກ ຫຼານຂອງພໍ່ແມ່ກໍ່ຍັງບໍ່ທັນມາເຕົ້າໂຮມໄດ້. ສະນັ້ນພວກ ນ້ອງ ຢາກໃຫ້ມີໂຮງຮຽນຂຶ້ນສາກ່ອນ, ແລ້ວ ຈຶ່ງ ເອົາລູກ ຫຼານ ໝົດ ບ້ານໝົດຕາແສງ ມາເຂົ້າໂຮງຮຽນຈຶ່ງຈະເປີດສອນໄດ້. ເລື່ອງ ນີ້ອົງການ ແລະ ພໍ່ແມ່ຊາວບ້ານຈະເຫັນດີເປັນແນວໃດ? ຈະ ພ້ອມກັນເຮັດໄດ້ບໍ? ພໍ່ແມ່ຊາວບ້ານ ແລະ ອ້າຍຕາແສງໄດ້ໃຫ້ ຄຳເຫັນຄືນ:

— ເລື່ອງຄູກັບໂຮງຮຽນແມ່ນເຫັນດີແຕ່ດົນແລ້ວ, ຄວາມປາຖະໜາແມ່ນຢາກໄດ້ແບບນັ້ນ ແລະ ຢາກໃຫ້ມີທີ່ສຸດ. ແຕ່ດຽວນີ້ ພໍ່ແມ່ ປະຊາຊົນ ພວມຄຶກ ຍາມລະດູຖາງໄຮ່ ຟັນໄຮ່, ອາດຈະບໍ່ທັນຄັນຖ້າຈະໃຫ້ໄດ້ໃນໄວ ໆນີ້ຈົນຖ້າເວລາໃດ ຖາງໄຮ່ແລ້ວຈຶ່ງຈະພ້ອມກັນຕະລຸມບອນປຸກໃຫ້ຊີ່ໄດ້ດີເນາະ.

ເມື່ອອົງການບ້ານກໍ່ຄືຕາແສງ, ພໍ່ແມ່ປະຊາຊົນ ວ່າແນວນັ້ນບາງກໍ່ດີໃຈ. ແຕ່ບາງ ນາຄິດວ່າ: ຈະຖ້າຖາງໄຮ່ ຟັນໄຮ່ແລ້ວໂຫ! ນັບຈັກມື້ຈັກເດືອນຈຶ່ງຈະແລ້ວ «ຕໍ່ນາບາງກໍ່ລໍຖ້າມື້ໃດກໍ່ວ່າມື້ນັ້ນ. ຢູ່ມາໜຶ່ງອາທິດ ສອງອາທິດ, ກໍ່ຍັງບໍ່ທັນເຫັນເຮັດຫຍັງ. ຄອງມື້ໃດກໍ່ບໍ່ທັນເຫັນຕັດໄມ້ພໍລ່ານາປຸກໂຮງຮຽນ. ເທື່ອທີ່ສອງບາງກໍ່ໄປສະເໜີອີກ, ແຕ່ຂະເຈົ້າກໍ່ຍັງບໍ່ທັນເຮັດໄດ້. ບາງຈຶ່ງເວົ້າກັບອ້າຍຕາແສງວ່າ:

— ຄັນຊັ້ນ ພວກນ້ອງຈະລະດົມ ເອົາພໍ່ແມ່ ປະຊາຊົນ ຫຼືກອງຫຼອນ ທີ່ປ້ອງກັນບ້ານຈໍານວນໜຶ່ງ, ແຕ່ລະມື້ໄປຕັດໄມ້ມານີ້ເລັກນີ້ນ໌. ພໍຈະໄດ້ໂຮງຮຽນ ແລ້ວ ພວກ ນ້ອງ ຈະເຮັດເອງໄດ້ບໍ່ ?

— ໄດ້ໆ... ດີລະບໍ. ຄັນຖ້າພວກນ້ອງ ຫາກມີ ຈິດໃຈເຮັດຊ່ວຍແບບນັ້ນ, ໃຊ້ຫົວຄິດປະດິດສ້າງ ຊ່ວຍນັ້ນພໍ່ແມ່ປະຊາຊົນຊຸດທີ່ຊົມເຊີຍ. ອ້າຍຕາແສງທັງເວົ້າທັງຫົວດີອົກດີໃຈ.

ເມື່ອໄມ້ໂຮງຮຽນເລີ່ມຕົ້ນນີ້, ນີ້ໄດ້ເສົາ, ໄດ້ຂື່, ຫຍ້າ ແມ່ນປະຊາຊົນເອົາມາໂຮມກັນ ແຕ່ລະເຮືອນ. ໂຮງຮຽນ ໄດ້ເລີ່ມຕົ້ນປຸກຂຶ້ນພຽງສາມສີ່ວັນ ກໍ່ເປັນຫຼັງຂຶ້ນ, ຍ້ອນມື ຂອງນາງສຸດທາເປັນຜູ້ນຳພາໝູ່ປະຊາຊົນເຮັດ, ມື້ສອງຄືນສາມຄືນ ກໍ່ເຮັດຈົບແລ້ວ. ໂຮງຮຽນຕັ້ງຂຶ້ນເປັນຫຼັງ, ນັກຮຽນຜູ້ຈະມາເຂົ້າ ຮຽນ ບໍ່ມີ. ນ້ອງນ້ອຍຍິງຊາຍຈຳນວນຫຼວງຫຼາຍ, ອາຍຸແປດປີ ເຖິງສິບປີ ກໍ່ມີບໍ່ຂຶດບໍ່ຢາກ, ເຮືອນໜຶ່ງບໍ່ຕ່ຳກວ່າ ສອງຄົນ. ແຕ່ ພໍ່ ແມ່ຂອງຂະເຈົ້າຍັງຫວງແຫນໃຫ້ໄປຊ່ວຍເຮັດວຽກໄຮ່ທຳ ສວນ. ອີກອັນໜຶ່ງກໍ່ຍ້ອນຖືວ່າເດັກນ້ອຍຜູ້ຍິງ ເປັນເລື່ອງຄຳ (ຄະລຳ) ບໍ່ເຂົ້າໂຮງຮຽນໄດ້, ຢ້ານລື້ນຢ້ານຕາຍ, ຜິດຜີຜິດສາງ, ບໍ່ມາ ໃກ້ຮອດໂຮງຮຽນ. ເມື່ອເປັນແນວນັ້ນ, ນາງສຸດທາໄດ້ພະຍາຍາມໄປເວົ້າລະດົມຄືນອີກຫຼາຍຕໍ່ຫຼາຍເທື່ອ ໂຮມ ປະ ຊາ ຊົນ ມາລຸລ່ວງແກ້ໄຂແນວຄິດຂໍ້ຂັດຂ້ອງ. ແຕ່ລະເທື່ອນາງໄດ້ຍົກຂຶ້ນມາເວົ້າໃຫ້ປະຊາຊົນຟັງ:

— ແຕ່ກີ້ແຕ່ກ່ອນພີ່ນ້ອງ ຊົນຊາດລາວສູງຂອງພວກເຮົາບໍ່ທັນມີໂຕໜັງສື, ບໍ່ທັນໄດ້ຮັບການປົດປ່ອຍ, ບໍ່ທັນມີສິດອິດສະຫຼະພາບ, ມາດຽວນີ້ພໍ່ແມ່ພີ່ນ້ອງພວກເຮົາມີສິດຮ່ຳຮຽນເອົາໂຕໜັງສື ຂອງຊົນຊາດ ຕົນເອງແລ້ວ, ເວລານີ້ ເປັນໂອກາດອັນດີທີ່ສຸດໃຫ້ແກ່ພີ່ນ້ອງເຮົາ, ພ້ອມກັນຮີບຮ້ອນຮ່ຳຮຽນເອົາ

ຄວາມກ້າວໜ້າ, ບໍ່ວ່າເຖົ້າຍິງຊາຍນ້ອຍໃຫຍ່. ເພື່ອສ້າງແປງຮີດຄອງປະ ເພນີບ້ານ ເມືອງຂອງ ພວກເຮົາໃຫ້ມີຄວາມຈະເລີນຮຸ່ງເຮືອງ. ພວກເຮົາຮຽນໜັງສືກໍ່ຄືວ່ານັ້ນແມ່ນວຽກທີ່ສຳຄັນອັນໜຶ່ງ ທີ່ສູ້ຮົບດຸເດືອດກັບສັດຕູໂຕໂງ່ຈ້າຫຼ້າປັນຍາອອກຈາກຕົນຕົວເຮົາເອງ. ສະນັ້ນພໍ່ແມ່ພີ່ນ້ອງ ຈຶ່ງພ້າວຍາດເອົາໂອກາດອັນລ້ຳຄ່າເພື່ອຮ່ຳຮຽນເອົາໃຫ້ໄດ້ແທ້ໆ. ໂຕເອງບໍ່ໄດ້ຮຽນກໍ່ພະຍາຍາມເຮັດແນວໃດ ໃຫ້ລູກຫຼານບໍ່ວ່າຜູ້ຍິງຜູ້ຊາຍໃຫ້ໄດ້ໄປເຂົ້າໂຮງຮຽນເພື່ອ ໃຫ້ອ່ານໄດ້ຂຽນເປັນ, ໃນສະໄໝບ້ານເມືອງເຮົາກ້າວໜ້າ, ເວລານີ້ບໍ່ມີຈັກກະພັດ ໂຕໃດມາກີດກັ້ນຫ້າມຫວງແລະກໍ່ບໍ່ຄ່ຳ (ຄະລຳ) ຜີຟ້າປ່າດົງບ່ອນ ໃດດອກບໍ່ໃຫ້ຮຽນຜູ້ຍິງ ຜູ້ຊາຍກໍ່ຮຽນ. ໄດ້ໄປຮຽນໝົດທຸກຄົນ, ໃຜຮຽນຫຼາຍຜູ້ນັ້ນຮູ້ຫຼາຍ; ຮຽນໜັງສືແມ່ນຮັກຊາດຂອງຕົນ, ຮຽນໄດ້ກໍ່ແມ່ນປົດປ່ອຍ ຕົນເອງອອກຈາກ ຄວາມໂງ່ຈ້າກືກໜັງສື ມີຫູແຈ້ງຕາໃສ, ປຽບເໝືອນວ່າເຮົາຕີປົດປ່ອຍ ຈັກກະພັດໂຕໃຫຍ່ໜຶ່ງອອກຈາກຕົນຕົວເຮົາເອງ...

ບໍ່ສະເພາະ ແຕ່ນາງໄດ້ໄປຊຸກຍູ້ປຸກລະດົມເທົ່ານັ້ນ, ນາງຍັງຈັດຕັ້ງ ໃຫ້ພໍ່ແມ່ຂອງນ້ອງນ້ອຍ, ມີໜ່ວຍສາມະຄົມ: ອິນຂວາງລະດົມລູກຫຼານ ຂອງຂະເຈົ້າເອງໄປເຂົ້າໂຮງຮຽນ. ແຕ່ນັ້ນເປັນຕົ້ນມາ, ຈຶ່ງມີພວກນ້ອງນ້ອຍສະໝັກ ໄປເຂົ້າໂຮງຮຽນ.

ຫ້ອງປໍ່ໜຶ່ງມີນັກຮຽນ ຊາວຫົກ ຄົນ, ຫ້ອງປໍ່ສອງມີ ຫ້າ ຄົນ. ນັບແຕ່ນີ້ປຸກໂຮງຮຽນມາ, ແກ່ຍາວເຖິງເກົ້ານີ້ຈຶ່ງໄດ້ເປີດສອນ ເລີ່ມຕົ້ນເປີດສອນນີ້ທຳອິດ, ນັກຮຽນກໍ່ມາຄົບຖ້ວນ, ໂຕະເປັນ ສອງແຖວ ໃນຫ້ອງຮຽນ ກໍ່ເຕັມແຕ່ນ້ອງນ້ອຍນັກຮຽນ, ທັງນ້ອຍ ແລະໃຫຍ່. ນາງຄູສຸດທາເລີ່ມຕົ້ນຮ້ອງຊື່ຕາມລະດັບ, ນ້ອງນ້ອຍ ທຸກຄົນກໍ່ ນິດຫງຽບຈ້ອງຕາ ເບິ່ງນາງດ້ວຍຄວາມ ເອົາໃຈໃສ່ ແລະ ສົນໃຈ. ນາງເປັນຄົນ ໃຈດີອ່ອນ, ກ່ອນຈະເວົ້າ ອັນໃດ ຄວາມໃດອອກມາ ໃຫ້ນ້ອງນ້ອຍຟັງ, ນາງໄດ້ເບິ່ງ ໄປທົ່ວຫ້ອງ ເຮັດທ່າທີຍິ້ມຫົວ ແລ້ວຈຶ່ງເວົ້າອອກມາ, ແຕ່ລະເທື່ອ ນາງໄດ້ ເວົ້າ:

— ເບິ່ງນີ້ເດີ! ເອື້ອຍຈະຂຽນໃສ່ກະດານນີ້ ໃຫ້ໝົດທຸກ ຄົນຂຽນແລະອ່ານນຳ.

ນາງ ຂຽນ ໃສ່ກະດານ ໃຫຍ່ທີ່ ຕັ້ງເຊິ່ງ ໜ້ານັກຮຽນທັງ ຫຼາຍ, ແລ້ວນາງພາອ່ານ, ບອກໃຫ້ນັກ ຮຽນອ່ານ ແລະ ເວົ້າ ຕາມຫຼັງໄປເທື່ອລະໂຕ. ແຕ່ກໍ່ບໍ່ມີນັກຮຽນຜູ້ໃດອ່ານ ຜູ້ໃດເຂົ້າ ໃຈ, ເພາະເວລານັ້ນນັກຮຽນ ບໍ່ຮູ້ພາສາລາວລຸ່ມ, ບໍ່ເຂົ້າໃຈຄຳ ເວົ້າຂອງນາງ. ແຕ່ ປານ ນັ້ນນາງ ສຸດທາ ຍັງ ທຸ່ນ ທ່ຽງ ຍ່າງ ເຂົ້າໄປຫາແຕ່ລະໂຕະແຕ່ລະຄົນ, ຈັບມືຂອງ ແຕ່ລະຄົນຂຽນ ໃສ່ແປ້ນກະດານໄມ້ທີ່ຫາດ້ວຍ ສີດຳນ້ອຍສີ່ຫຼ່ຽມ, ແລ້ວໃຫ້ເວົ້າ

ນ່ຳນາງເທື່ອລະ ໂຕແຕ່ລະໂຕະໄປ. ຄວາມຫຍຸ້ງ ຍາກເວລານີ້ ປະກົດວ່າ ແລ່ນ ເຂົ້າມາ ທຸກ ເສັ້ນປະສາດ ຂອງ ນາງ ; ຜູ້ຈະ ຖາມໜ້າຖາມຫຼັງ, ບາງເທື່ອ ນາງເມື່ອຍ ປາກເມື່ອຍ ເວົ້ານາງ ມານັ່ງຄຶດຫາແຜນການໃໝ່ວ່າ : «ປະ ! ຈະແກ້ໄຂແນວໃດນໍ, ຈິ່ງຈະມີວິທີການດີກ່ວານີ້ ». ເພາະນາງເອງກໍ່ຍັງຫຍຸ້ງ ຍາກ ຢູ່ບ່ອນວ່າ : ບໍ່ຮູ້ພາສາຄວາມເວົ້າ ຂອງ ຂະເຈົ້າເໝືອນ ນ້ອງ ນ້ຽນັ້ນຮຽນບໍ່ຮູ້ພາສາລາວລຸ່ມ. ເປັນແນວນັ້ນ ນາງຕັດສິນໃຈ ຂຽນໃສ່ກະດານອີກ ເປັນເທື່ອ ທີ່ສອງ ທັງແຕ້ມ ຮູບ ໃສ່ພ້ອມ ແລະກໍ່ຍົກປື້ມ ທີ່ມີຮູບທີ່ຂຽນ ໜັງສື ໃສ່ ກ້ອງ ຮູບໃຫ້ເບິ່ງຈິ່ງ ພາອ່ານສົມມຸດວ່າ :

— ໂຕ ກ.ກ.ອາ.ກາ. ໂຕ ຂ.ຂ.ອັນ.ຂັນອ່ານແລ້ວອ່ານອີກ, ເມື່ອເອົາຮູບ ເອົາໂຕໜັງສືໃຫ້ເບິ່ງ, ນັກຮຽນຈຶ່ງເຂົ້າໃຈ, ຈຶ່ງ ພາອ່ານຕໍ່ໄປເປັນຕົ້ນຄື: ໂຕ ອ ກໍ່ເອົາຮູບໝາກອີຫຼືຮູບອື່ນໆ ໃຫ້ ເບິ່ງ. ນັກຮຽນເຫັນຮູບ, ຂະເຈົ້າເວົ້າຄວາມຊົນຊາດ ຂອງຂະ ເຈົ້າຂົ້ນ, ນາງສຸດທາຈຶ່ງເວົ້າຄວາມລາວລຸ່ມ ແລະ ຄວາມຊົນ ຊາດປຽບທຽບໃສ່ກັນ. ນາງທັງສອນໃຫ້ນັກຮຽນ, ຕົນເອງກໍ່ ໄດ້ຕັ້ງໃຈຮຽນຄວາມຊົນຊາດນ່ຳຂະເຈົ້າ; ໝາຍວ່າແລກປ່ຽນ ຄວາມເວົ້ານ່ຳກັນຢູ່ຈັ່ງຊັ້ນທຸກໆ ມື້. ສຸດທ້າຍ, ດົນຕໍ່ມານາງ ສຸດທາກໍ່ໄດ້ສ່ວນໃດສ່ວນໜຶ່ງ, ກ່ຽວກັບພາສາລາວສູງ ນ່ຳ

ນ້ອງນ້ອຍນັກຮຽນ ແຕ່ຄວາມຫຍຸ້ງຍາກທີ່ບໍ່ສິ້ນສຸດເປັນຈັກເທື່ອ, ນັ້ນ ແມ່ນການກິນຢູ່, ເພາະນາງບໍ່ເຄີຍ; ມີບາງມື້ນາງກັບແຕ່ ໄປສອນໂຮງຮຽນ ບໍ່ທັນຊອກ ຢູ່ແຕ່ງກິນໄວ້, ນາງໄດ້ກິນ ເຂົ້າ ຈ້າວກັບເກືອ, ບາງມື້ກິນສາ ລີຜິງກັບຜັກຕົ້ມ. ສິ່ງນີ້ແຫຼະເຮັດ ໃຫ້ນາງສຸດທາຄິດຮອດບ້ານ, ຄິດຮອດແມ່ຂອງນາງບໍ່ແລ້ວບໍ່ ລືມ. ເພາະນາງຢູ່ເຮືອນຄາວເປັນເດັກ ໄປເຂົ້າໂຮງຮຽນ, ບາດ ເລີກມາແຕ່ໂຮງຮຽນ ເຖິງຈະບໍ່ມີຫຍັງກິນ, ນາງກໍ່ຍັງ ໄດ້ປັ້ນ ເຂົ້າໜຽວຈ້ຳແຈ່ວປາເຄັມ, ຄັນບໍ່ມີແທ້ ກໍ່ຍັງໄດ້ ກິນຜັກ ກາດ ສົ້ມ. ມາຕົກສະພາບແນວນີ້, ນາງສຸດທາກໍ່ຕັດສິນໃຈກິນເພື່ອ ໃຫ້ລຶ້ງເຄີຍ.

ຜ່ານການ ດຳລົງຊີວິດໄດ້ສາມສີ່ເດືອນ ຂອງນາງ. ກໍ່ຍັງ ມີນາງບີ ລາຜູ້ ເປັນເພື່ອນ ຮ່ວມທຸກ ຮ່ວມ ສຸກນຳ. ແຕ່ເຂົ້າມາ ເດືອນທີ່ຫ້າທີ່ຫົກ ແລະ ຕໍ່ໆໄປແມ່ນນາງໄດ້ອົດກັ້ນ ນ້ຳຕາໄວ້ ຫຼາຍກວ່າບ້ອກຕົ້ນເພາະວ່າຄິດຮອດແມ່ຮອດເຮືອນແລ້ວ, ຍັງ ໄດ້ຄິດ ເປັນຫ່ວງ ນຳໝູ່ ເພື່ອນໄດ້ ຈາກ ນາງ ໄປເຮັດ ວຽກອື່ນ ໃໝ່. ຄືດັ່ງຄູຜູ້ຊາຍສອງຄົນໄປນຳ, ກໍ່ບໍ່ໄດ້ຢູ່ນຳກັນຊ້ຳ. ໄປ ສອນຢູ່ບ້ານອື່ນບ່ອນອື່ນຫ່າງໄກກັນເປັນສິບໆ ຫຼັກ. ໃນໄລຍະ ສອງຫຼືສາມເດືອນທີ່ບໍ່ມີຄົນລາວລຸ່ມໄປຫຼິ້ນໄປຫາ, ບໍ່ເຫັນໜ້າ ຄືວ່າ ດົນ ນານ ໄດ້ສອງຫຼື ສາມປີ ບໍ່ໄດ້ ພົບໃຜ, ປາກົດວ່າ

ຫາກປະແຕ່ນາງສຸດທາຜູ້ດຽວຢູ່ກັບນ່ພີ່ນ້ອງລາວສູງ. ນາງຢາກເວົ້າຢາກວ່າໂອ້ລົມອັນໃດກໍ່ມີແຕ່ຢ້ານຜິດຮີດຜິດ ຄອງປະເພນີຂອງຊົນຊາດ. ຢາກເຮັດອັນໃດແຕ່ລະນີ້ ນາງໄດ້ລະວັງແລະ ຖາມອ້າງຕາແສງ ຫຼືໄປຫາຜູ້ຮູ້ຄວາມ ນັ້ນອະທິບາຍໃຫ້ຟັງແລະອີກອັນໃຫຍ່ນັ້ນກໍ່ ແມ່ນຢ້ານຜິດນະໂຍບາຍ ຄວາມສາມັກຄີ. ນາງຂັດຂ້ອງບໍ່ເຂົ້າໃຈອັນໃດກໍ່ມີແຕ່ຖາມອ້າງຕາແສງ. ອ້າງຕາແສງຈຶ່ງ ອະທິບາຍ ລຸລ່ວງລະ ດົນໃຫ້ເຮັດ, ໃນເວລາຫາງວນເທຣີວາຄືດຮອດບ້ານຮອດເຮືອນແລະອື່ນໆ...

ມື້ແລງໜຶ່ງ ນາງສຸດທາໄປຕັກນ້ຳຜູ້ດຽວ. ນາງຢືນຈັບບັ້ງນ້ຳທີ່ໄດ່ງເອົານ້ຳລົນ ພວນໄຫຼຕົກໃສ່ບັ້ງ ນ້ຳຂອງນາງຢູ່ນັ້ນ, ນາງໄດ້ຄືດລະ ເພີເພີຟັນຢູ່ຜູ້ດຽວວ່າ: «ໂອ! ເປັນແນວນີ້ເດເນາະຊີວິດອັນປ່ຽວພຍ໌. ອັນໜຸ່ມນ້ອຍຂອງ ຍິງໂຊດ ພຽງ ສິບແປດສິບເກົ້າປີທີ່ຟາກຊີວິດຊີວາໄວ້ຈອມພູຈອມດຍ໌ ແທ່ງນີ້. ດຍວັນໃດກໍ່ບໍ່ເຫັນ, ເປັນໜ້າສັງເວດລືງສານ ດົນເອງແທ້ເດ-ນາງຄືດແລ້ວກໍ່ຫຼຽວໜ້າລຶງໄປຫາທິງພຽງ ເມືອງແປກທາງບ້ານເກີດເມືອງນອນບ້ານເກົ່າເມືອງຫຼັງຂອງນາງດ້ວຍຄວາມເອົາໃຈໃສ່. ເວລານັ້ນນ້ຳຕາຂອງນາງຢາດຍ້ອຍຊຶມ ອາບແກ້ມອັນອ່ອນນວນສີດອກໝາກຄາຍຂອງນາງ, ໄຫຼຜ່ານໝາກຫົວໃຈອັນຮ້ອນຮົນຂອງນາງ ເປັນເທື່ອ, ເປັນເທື່ອ, ໃນເວລາໃດ

ໂດຽນາງບໍ່ຮູ້ສຶກວ່າຕົນເອງພວມເຮັດຫຍັງ ແລະ ຄິດຫຍັງຄືກັນ ກັບນາງເອົາບັ້ງນ້ຳ ໂຕ່ງເອົານ້ຳຮາງລິນ ; ນ້ຳເຕັມເວລາໃດ, ໄຫລລົງຍາມໃດ, ຊຶ່ງນາງບໍ່ຮູ້ເມື່ອຄືງ. ນາງສະດຸ້ງຕື່ນກົ້ມເບິ່ງ ບັ້ງນ້ຳຂອງນາງທີ່ເຕັມລົ້ນປາກບັ້ງ. ຕົກໃສ່ມືຂອງນາງໆ ຈຶ່ງ ຮູ້ເມື່ອ ຄືງວ່າຕົນ ເອງພວມລະເມີຝັນ ໄປຕາມ ແນວຄິດຂອງ ຕົນ.

ຜ່ານມາປີກວ່າ, ນາງກໍ່ຮູ້ຈັກ ພາສາຄວາມ ເວົ້າ ຂອງຊົນ ຊາດເລັກນ້ອຍ, ນາງຈຶ່ງຄ່ອຍໂອ້ຄ່ອຍລົມນີ້ເລັກນີ້ນ້ອຍ ; ຮູ້ໄດ້ຮີດຄອງ ປະເພນີ ຕະຫຼອດ ນິດໄສ ໃຈຄໍຂອງ ຊົນຊາດ, ນາງກໍ່ກ່າໄດ້ ສ່ວນໃດສ່ວນໜຶ່ງຄວາມຫຍຸ້ງຍາກທີ່ຕົນເອງພົບຜ່ານມາແລະ ຄິດງ້ຢູ່ນັ້ນ. ມີບາງອັນກໍ່ຍັງຄ້າງຄາຢູ່, ບາງອັນກໍ່ຄ່ອຍ ໆ ຕົກຫຼົ່ນ ໄປເທື່ອລະເລັກລະນ້ອຍ. ຈາກນັ້ນນາງສຸດທາຈຶ່ງຫວນຄືນຫຼັງ ວ່າ: «ໂອແມ່ນຄືຄຳໂອວາດຕັກເຕືອນຂອງຄະນະສຶກສາຄຸສຸນ ກາງທີ່ເພິ່ນວ່າ: «ຮັກອາຊີບແພງເດັກ» ໃຜບໍ່ຮັກອາຊີບແພງ ເດັກ, ແມ່ນຜູ້ນັ້ນເຮັດວຽກນີ້ບໍ່ໄດ້. ພວກສະຫາຍຄືນໄປຢູ່ທ້ອງ ຖິ່ນ, ອາດຈະໄດ້ພົບພໍ້ຮ້ອຍສິ່ງພັນແນວ. ແຕ່ເຮັດແນວໃດຈໍ່ໃຫ້ ພວກສະຫາຍ ນຳເບົາລຶດວອນ ບັນດາພີ່ນ້ອງ ຮ່ວມຊາດຂອງ ຕົນໃຫ້ມີຫູແຈ້ງ ຕາໃສ, ມີໃບໜ້າໃໝ່ ມີສຽງຮ້ອງ ສຽງຂັບ ລຳຕ່າງໆ ອັນອອນຊອນຂອງຊົນຊາດ ຂະເຈົ້າຢ່າງ ມ່ວນຊື່ນ

ລື້ນເລີງ ». ນາງຫາກຄິດຫາກຕັ້ງຄຳຖາມ ແລະຕອບຄືນເອງ.

ນັບແຕ່ນາງໄດ້ຄິດຄືນແລະໄດ້ຟັງການອະທິບາຍຈາກອ້າຍ ຕາແສງຫຼືພໍ່ແມ່ຊາວບ້ານແຕ່ລະເຮືອນ. ວຽກງານ ແລະ ໜ້າທີ່ ຂອງ ນາງຈຶ່ງມີອັນປ່ຽນ, ກາຍມາເປັນຜູ້ດຸໝັ່ນ ຂະຫຍັນ ຫ້າວ ຫັນເບີກບານ ມ່ວນຊື່ນ, ທ່າທີການ ປາກເວົ້າ ກໍ່ຖືກຕ້ອງ ອ່ອນ ຫວານເປັນໜ້າຮັກແພງ ກວ່າເກົ່າ. ແຕ່ສິ່ງທີ່ນາງປ່ຽນປະບໍ່ ໄດ້ນັ້ນ ແມ່ນນາງ ນັກອາຍ: ກ່ອນຈະປາກ ຈະເວົ້າຫຍັງ, ນາງ ຕ້ອງໄດ້ເອົາມືມາບັງປາກຫຼື ຄຳຄາງ ໜ້າໜຶ່ງທັງຫູແດງໜ້າ ແດງຂຶ້ນແລ້ວຈຶ່ງຄ່ອຍເວົ້າ, ທັງເວົ້າທັງຫົວ. ຕະຫຼອດໃນເວ ລາສອນນ້ອງນ້ອຍຢູ່ໃນໂຮງຮຽນ, ນາງເຄີຍເອົາເລົາຄີງ ອັນກົມ ສ່ວນອ້ວນພີ ແລະ ສູງຕ່ຳປານກາງ, ໃບໜ້າເບີກບານຂອງ ນາງເລາະໄປລຽບນະຕາມສອງຟາກຂ້າງໂຕະ ແລະ ເດີ່ງກາງ ນັກຮຽນຕາມເຄີຍ ເຣັດມາທຸກ ໆ ມື້. ແລ້ວ ກົ້ມຫັ້ນເບິ່ງນີ້ພະຍາ ຍາມບອກໃຫ້ນ້ອງນ້ອຍ ອ່ານທັງແອບຂຽນ ໃຜອ່ານບໍ່ໄດ້ ຂຽນບໍ່ ເປັນນາ ສຸດທີ່ເອົາໃຈໃສ່: ນາງບໍ່ເຄີຍຮ້າຍດ່າວ່າຕີນັກຮຽນຈັກ ເທື່ອ, ນາງເປັນຄົນ ໃຈດີ ທີ່ສົມເປັນ ລູກສາວ ຂອງ ພີ່ນ້ອງພູ ພຽງຊຽງຂວາງແທ້ ໆ. ເຫັນນັກຮຽນມາໂຮງຮຽນມື້ໃດບໍ່ຫວີ ຜົມ, ບໍ່ຕັດເລັບມື, ນາງກໍ່ບອກໃຫ້ຫວີ, ບາງເທື່ອນາງກໍ່ຫວີ ໃຫ້, ຕັດເລັບມືໃຫ້ທັງບອກວ່າ:

— ຈື່ເບີເອື້ອງບອກ, ກ່ອນນ້ອງຈະກິນເຂົ້າທຸກມື້, ທຸກຄາບ
ເຂົ້າໃຫ້ລ້າງມືສາກ່ອນເນີ, ຈິ່ງຄ່ອຍກິນເຂົ້ານັ້ນຈິ່ງແຊບ ແລະບໍ່
ມັກເຈັບທ້ອງເປັນພະຍາດແມ່ທ້ອງແລະອື່ນ ໆ...

— ນາງບໍ່ສະເພາະ ບອກສອນເທົ່ານັ້ນ, ຍັງຮັກແພງອຸ້ມ
ເຈັ່ຍນ້ອງນ້ອຍ, ຮັກແພງນັກຮຽນ, ເອົາໃຈໃສ່ສອນເພງໃຫ້ນັກ
ຮຽນຮ້ອງເພງ, ເວລາຈະຂຶ້ນ ຫ້ອງຫຼືເລີກຮຽນ, ນາງກໍ່ພາ
ຮ້ອງພາຕົບມືຢ່າງມ່ວນຊື່ນເປັນແຊວ ໆ, ແລ້ວຈິ່ງພາກັນເລີກ
ຄືນມາເຮືອນໃຜເຮືອນລາວ, ນາງຮັກແພງນ້ອງນ້ອຍຄືເກີດຮ່ວມ
ອຸທອນຂອງນາງ ຫຼາຍເທົ່າໃດ, ພໍ່ແມ່ພີ່ນ້ອງຊາວບ້ານລາວ
ສູງຂະເຈົ້າ ກໍ່ຮັກແພງ ນາງຄືນກັນ ກັບນາງຮັກແພງນັກຮຽນ
ຫຼາຍເທົ່ານັ້ນ. ຂະເຈົ້າບໍ່ສະເພາະແຕ່ຮັກແພງນັບຖືນາງຄຸສຸດ
ທາຄືກັບລູກຂະເຈົ້າທີ່ນັ້ນ. ຂະເຈົ້າຍັງນັບຖືນາງຄືກັບອົງການ
ບ້ານ, ຫຼືຕາແສງຜູ້ໜຶ່ງ. ເວລາໃດມີວຽກງານດ່ວນໃນບ້ານ,
ອົງການປົກຄອງບໍ່ຢູ່ບໍ່ທັນ, ນາງໄປຊຸກຍູ້ນຳພາບອກເຕືອນ, ພໍ່
ແມ່ປະຊາຊົນຊາວບ້ານກໍ່ຟັງແລະພ້ອມກັນເຮັດໄດ້ທຸກອັນ.

ໄລຍະເກືອບ ສອງ ປີ ທີ່ນາງ ດຳລົງຊີວິດ ອັນໜຸ່ມນ້ອຍ
ມີຄວາມໝາຍຂອງນາງຢູ່ກັບພີ່ນ້ອງລາວສູງນັ້ນທຸກສະພາບ
ອັນຫຍຸ້ງຍາກ ແລະ ສະດວກນາງ ໄດ້ຜ່ານຜ່າ, ທັງໄດ້ຮັບຄວາມ
ເຊື່ອໝັ້ນຕໍ່ອົງການນຳທ້ອງຖິ່ນຂອງຂະເຈົ້າ. ທຸກປີຮອດຍາມ

ບຸນກິນຈຽງນາ, ພີ່ນ້ອງລາວສູງໄດ້ເຄື່ອງເອ້ຂອງທິງ, ເຄື່ອງ ສຳອາງຂອງຊົນຊາດຂະເຈົ້າມາໃຫ້ນາງນຸ່ງ,ແລ້ວພານາງໄປ ຫຼິ້ນບຸນກິນຈຽງ ຂອງ ຊົນຊາດ ຂະເຈົ້າ, ພາຫຼິ້ນໂຍ້ນ ໝາກ ຄອນນຳອ້າງບ່າວລາວສູງ ຢ່າງມ່ວນຊື່ນມະໂຫລານ.ເວລາໃດ ນາງສຸດທານຸ່ງເຄື່ອງລາວສູງໃສ່,ຖ້າໃຜໄປເຫັນໃນເວລານັ້ນບໍ່ ອາດເວົ້າ ແລະ ເຂົ້າໃຈໄດ້ ວ່ານາງ ເປັນຄົນ ລາວລຸ່ມ ຈັກໜ້ຍ. ນາງເຮັດໄດ້ໄປເປັນໃນການຮ່ວມຢູ່, ຮ່ວມກິນ,ຮ່ວມທຳນຳຂະ ເຈົ້າ, ນາງກໍ່ຮູ້ໄດ້ສ່ວນໃດສ່ວນໜຶ່ງກ່ຽວກັບຮີດຄອງປະເພນີ, ຜົວເມຍບ່າວສາວຂອງຂະເຈົ້າ.ສະນັ້ນພີ່ນ້ອງລາວສູງຕາແສງ ພູຮົນໃຜໆກໍ່ຮູ້ສຶກດີໃຈຮັກແພງຢ່າງລົ້ນເຫຼືອ. ນັບແຕ່ນັ້ນເປັນ ຕົ້ນມາຕາແສງພູຮົນທຸກເຊົ້າຄ່ຳວັນຄືນ,ກໍ່ມີແສງຕະກຽງໂຄມ ໄຟໄຕ້ເພື່ອຮ່ຳຮຽນອ່ານໜັງສືເປັນວົນໆ ແຊວຢູ່ ແລະ ຕ່າງໆ ມີໃບໜ້າອັນໃໝ່ຕ່າງມີຫຼາຍອັນຂຶ້ນເຊັ່ນ: ຜູ້ອ່ານໜັງສື,ຜູ້ຮ້ອງ ເພງກູ້ຊາດຕ້ານອາເມລິກາ, ຜູ້ຂັບຊົນຊາດອັນອ່ອນຊອນໜ້າ ຢາກຟັງຂອງຂະເຈົ້າ. ພີ່ນ້ອງພໍ່ແມ່ປະຊາຊົນບໍ່ອຶດເຂົ້າຢາກ ແກງ, ການກິນຢູ່ນຸ່ງຫົ່ມ ກໍ່ສະອາດ. ໃນແຕ່ລະມື້ແມ່ນ ໄດ້ຍິນ ສຽງຮ້ອງເພງຢູ່ຕາມເຮືອນ, ຕາມໄຮ່ຢ່າປົ່ນ, ສວນສາລີໝາກ ອຶອັນຂຽວງາມຕາມຈ້າງພູແລະບ່ອນອື່ນໆ... ສະເພາະແມ່ນ

ຮອດຍາມບຸນກິນຈຽງ, ໝູ່ນ້ອງນ້ອຍນັກ ຮຽນໄດ້ພາກັນ ຮ້ອງເພງອັນບໍ່ເປີດເປັນຈັກເທື່ອນັ້ນວ່າ:

ເຂດພູຜາບ້ານປ່າເຮົາເອີຍ ນ້ຳໝອກກ້ໍວຍາມເຊົ້າ
ແດດສ່ອງ
ນິກຮ້ອງຊິນແສງອາລຸນ ດອກໄມ້ບານທົ່ວດິບດອນ
ຍ້ອນມີການປະຕິວັດປົດປ່ອຍ ລາວສູງເຮົາຊື່ນຊ່ອຍຮ່ຳຮຽນມີ
ໂຕໜັງສື...

. . . . . . . . . . . . . . . . . . . . . . . . . . . .

— ຍາມກິນຈຽງລ່ອອນຊອນ ໂຍນ ໝາກ ຄອນ ພ້ອນ
ກ່ອນສຽງແຄນ.

. . . . . . . . . . . . . . . . . . . . . . . . . . , , ,

ມຸນເຊື້ອເຈົ້າຟ້າປັດໃຈຄາວຫຼັງ ປັງແໜ້ນຢູ່ໃນດວງໃຈລາວ
ສູງພວກເຮົາແທ້ໃດ.

ຈີນພໍ່ຕາແສງ ແລະ ຊາວບ້ານ ໃຜກໍ່ເວົ້າອອກດ້ວຍຄວາມຕື່ນເຕັ້ນວ່າ:

— ຕາແສງພູສັນ ຂອງພີ່ນ້ອງລາວສູງ ພວກເຮົາດຽວນີ້, ມັນຕ່າງກັບແຕ່ຄາວກ່ອນແລ້ວໃດ! ລາວສູງພວກເຮົາດຽວນີ້ມີໂຕໜັງສື; ການຢູ່ກິນບໍ່ໄດ້ ກິນເຂົ້າກັບນ້ຳທ່າ ຄືຄາວຈັກກະພັດປິກຄອງ. ດຽວນີ້ລາວສູງພວກເຮົາຮູ້ ອອກແຮງ ເພີ່ມພູນ

ເກົ່າ. ບໍ່ອຶດເຂົ້າ ຢາກເກືອ. ບໍ່ປິບໃຕ້ແລ່ນເໜືອ ນັ້ນກໍ່ ຍ້ອນມີແນວທາງ ນະໂຍບາຍອັນຖືກຕ້ອງ ສະຫຼາດສ່ອງ ໃສຂອງສຸນກາງແນວລາວຮັກຊາດໄດ້ເປີດຫຸໄຂຕາໃຫ້ພີ່ນ້ອງເບິ່ງກ້ວາງມອງໄກ. ພວກ ພໍ່ແມ່ ສຸດ ທີ່ດີອົກດີໃຈ. ຂໍຂອບຄຸນ ອັນປະເສີດລົ້ນເຫຼືອ ໃຫ້ແກ່ທ່ານຜູ້ນຳ ສະເດັດ ເຈົ້າສຸພານຸວົງ ແລະທ່ານໄຜ່ດ່າງກໍ່ຄືຜູ້ນຳທຸກທ່ານ.

ສຽງຕົບມືສະໜັບສະໜູນດັງສະໜັ່ນຫວັ່ນໄຫວຂຶ້ນພາຍຫຼັງປະທານ ຕາແສງໄດ້ມີຄຳເຫັນສິ້ນສຸດລົງ. ໃນໂອກາດນີ້ບຸນກິນຈຽງປີ 1972 ຈາກນັ້ນ ການມ່ວນຊື່ນ ລື່ນເລີງໄດ້ສືບຕໍ່.